ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

=====໑໐໐໐໐໐໑=====

ນະຄອນຫລວງວຽງຈັນ

ເລກທີ 0171 /ຈນວ

ວັນທີ 15 FEB 2018

# ຂໍ້ຕົກລົງ

## ວ່າດ້ວຍ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ປະຈໍາປີ 2018 ຂອງ ນະຄອນຫລວງວຽງຈັນ

– ອີງຕາມມາດຕາ 6 ຂໍ້ 4, ໝວດທີ 2 ວ່າດ້ວຍ ສິດ ແລະ ໜ້າທີ່ ຂອງອົງການປົກຄອງທ້ອງຖິ່ນ ຂອງກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ (ສະບັບປັບປຸງ), ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.

– ອີງຕາມກົດໝາຍ ວ່າດ້ວຍ ການລົງທຶນຂອງລັດ (ສະບັບປັບປຸງ), ສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015.

– ອີງຕາມດໍາລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 397/ນຍ, ລົງວັນທີ 22 ທັນວາ 2017 ວ່າດ້ວຍ ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ປະຈໍາປີ 2018.

– ອີງຕາມມະຕິກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນ ນະຄອນຫລວງວຽງຈັນ ຊຸດທີ I, ສະບັບເລກທີ 004/ສປນວ, ລົງວັນທີ 25 ມັງກອນ 2018 ວ່າດ້ວຍ ການຮັບຮອງເອົາ ແຜນງົບປະມານ ປະຈໍາປີ 2018 ຂອງນະຄອນຫລວງວຽງຈັນ.

– ອີງຕາມມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນ ນະຄອນຫລວງວຽງຈັນ ຊຸດທີ I, ສະບັບເລກທີ 010 /ສປນວ, ລົງວັນທີ 15 ກຸມພາ 2018 ວ່າດ້ວຍ ການຮັບຮອງເອົາ ແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ 2018 ຂອງ ນະຄອນຫລວງວຽງຈັນ.

– ອີງຕາມໜັງສືສະເໜີຂອງ ພະແນກແຜນການ ແລະ ການລົງທຶນ ນະຄອນຫລວງວຽງຈັນ, ສະບັບເລກທີ 0209/ພຜທ.ນວ, ລົງວັນທີ 13 ກຸມພາ 2018.

## ເຈົ້າຄອງນະຄອນຫລວງວຽງຈັນ ອອກຂໍ້ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1:** ປະກາດໃຊ້ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ປະຈໍາປີ 2018 ຂອງນະຄອນຫລວງວຽງຈັນ ເລີ່ມແຕ່ວັນທີ 1 ມັງກອນ ປີ 2018 ເຖິງວັນທີ 31 ທັນວາ 2018 ຢ່າງເປັນເອກະພາບ ໃນຂອບເຂດທົ່ວນະຄອນຫລວງວຽງຈັນ.

**ມາດຕາ 2:** ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານປະຈໍາປີ 2018 ຂອງນະຄອນຫລວງວຽງຈັນ ແມ່ນ ແຜນຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) ຂອງ ນະຄອນຫລວງວຽງຈັນ, ໂດຍລົງເລິກຈັດຕັ້ງປະຕິບັດມະຕິຂອງກອງປະຊຸມຄະນະພັກ ນະຄອນຫລວງວຽງຈັນ ປີ 2017 ແລະ ມະຕິຕົກລົງຂອງ

ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນ ນະຄອນຫລວງວຽງຈັນ ຊຸດທີ I ສະບັບເລກທີ 004/ສປນວ, ລົງວັນທີ 25 ມັງກອນ 2018 ແລະ ສະບັບເລກທີ 010/ສປນວ, ລົງວັນທີ 15 ກຸມພາ 2018 ແລະ ການມອບໝາຍຂອງລັດຖະບານ ຕາມມາດຕາທີ 26 ຂອງດຳລັດນາຍົກລັດຖະມົນຕີ, ສະບັບເລກທີ 397/ນຍ, ລົງວັນທີ 22 ທັນວາ 2017 ວ່າດ້ວຍ ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ປະຈຳ ປີ 2018 ໃຫ້ປະກົດຜົນເປັນຈິງ.

**ມາດຕາ 3:** ໜ້າທີ່ຈຸດສຸມ ແລະ ຄາດໝາຍຕົ້ນຕໍຂອງປີນີ້ແມ່ນເລັ່ງໃສ່ 6 ແຜນວຽກຈຸດສຸມ: ແຜນວຽກຮັກສາຄວາມສະຫງົບຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ຂະຫຍາຍເສດຖະກິດ, ວັດທະນະທຳ-ສັງຄົມ, ພັດທະນາຕົວເມືອງ, ປັບປຸງການບໍລິຫານ-ການປົກຄອງ ແລະ ແຜນວຽກການຮ່ວມມືກັບນະຄອນເພື່ອນມິດຕ່າງປະເທດ ໂດຍເຮັດແນວໃດ ຮັບປະກັນໃຫ້ເສດຖະກິດ-ສັງຄົມ ນວ ຂະຫຍາຍຕົວ ແລະ ກົມກຽວ ຂອງທຸກຂະແໜງການ, ສົ່ງເສີມ ແລະ ດັດປັບຕາມກົນໄກຕະຫລາດທີ່ມີການຄຸ້ມຄອງຂອງລັດ, ເຮັດໃຫ້ລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວ 10,5% ແລະ ສ້າງມູນຄ່າເພີ່ມຕາມລາຄາໃນປີ ປະມານ 45.450 ຕື້ກີບ; ສະເລ່ຍຕໍ່ຫົວຄົນ 5.490 ໂດລາ; ໃນນັ້ນ: ກະສິກຳ-ປ່າໄມ້ ເພີ່ມຂຶ້ນ 5,5%, ກວມເອົາ 15% ຂອງ GDP, ອຸດສາຫະກຳ ເພີ່ມຂຶ້ນ 14%, ກວມເອົາ 47% ຂອງ GDP, ການບໍລິການ ເພີ່ມຂຶ້ນ 10%, ກວມເອົາ 38% ຂອງ GDP; ເຊີດຊູຄວາມສາມາດໃນການບໍລິຫານ-ຄຸ້ມຄອງລັດ, ປຸກລະດົມ ແລະ ນຳໃຊ້ທຸກກຳລັງແຮງເຂົ້າໃນການພັດທະນາ ແລະ ສ້າງ ນວ ໃຫ້ເປັນເມືອງໜ້າຢູ່.

## ໝວດທີ 2
## ຄາດໝາຍຕົ້ນຕໍຂອງແຜນພັດທະນາເສດຖະກິດ-ສັງຄົມ ປີ 2018

**ມາດຕາ 4: ບາງຕົວເລກຄາດໝາຍຕົ້ນຕໍທາງດ້ານເສດຖະກິດ:**

**4.1 ດ້ານກະສິກຳ ແລະ ປ່າໄມ້:**

- ເຮັດໃຫ້ໂຄງປະກອບກະສິກຳ-ປ່າໄມ້ ເພີ່ມຂຶ້ນ 5,5%;
- ໂຄງການຊຸກຍູ້ສົ່ງເສີມໃໝ່ການຜະລິດທົ່ວໄປຂອງປະຊາຊົນໃນຂົງເຂດກະສິກຳ-ປ່າໄມ້ ໃຫ້ບັນລຸຄາດໝາຍ: ຜະລິດເຂົ້າ 318.511 ໂຕນ, ສູ້ຊົນເຮັດໃຫ້ຕົວເລກການສະໜອງຊີ້ນງົວ ບັນລຸ 60% ຂອງຄວາມຕ້ອງການຂອງສັງຄົມ, ປູກສາລີເປັນອາຫານສັດ ໃຫ້ໄດ້ 1.610 ເຮັກຕາ, ຜົນຜະລິດລວມ ໃຫ້ບັນລຸປະມານ 6.880 ໂຕນ ແລະ ຂະຫຍາຍຝູງງົວໃຫ້ໄດ້ 52.226 ໂຕ; ໃນນັ້ນ: ຂະຫຍາຍງົວພັນຊີ້ນ (ໂຄງການຮ່ວມມືກັບນະຄອນ ໂຮ່ຈິມິນ) ໃຫ້ໄດ້ 1.000 ແມ່;
- ປົກປັກຮັກສາ ແລະ ຟື້ນຟູປ່າສະຫງວນແຫ່ງຊາດ 2 ແຫ່ງ: ພູພະນັງ, ພູເຂົາຄວຍ, ປ່າຜະລິດ ແລະ ປ່າປ້ອງກັນ;
- ສູ້ຊົນຂະຫຍາຍເນື້ອທີ່ປ່າໄມ້ ດ້ວຍການປູກຕົ້ນໄມ້ສາທາລະນະ ແລະ ສ່ວນບຸກຄົນໃຫ້ໄດ້ 2 ຕົ້ນຕໍ່ຄົນ ຫລື ປະມານ 2 ລ້ານຕົ້ນ, ປູກຕາມເສັ້ນທາງຫຼວງແຫ່ງຊາດ 13 ເໜືອ, 13 ໃຕ້, ທາງ 450 ປີ, ທາງເລກ 10, ທາງເລກ 11...
- ຍົກປະສິດທິຜົນຂອງຜົນຜະລິດເຂົ້າຂຶ້ນຕື່ມ 5%, ປົດປ່ອຍແຮງງານຂອງຊາວນາ ອອກຈາກການປັກດຳ ແລະ ເກັບກ່ຽວເຂົ້າ 5.000 ຄົນ.

**4.2 ດ້ານອຸດສາຫະກຳ ແລະ ການຄ້າ:**

- ສູ້ຊົນເຮັດໃຫ້ຍອດຜະລິດຕະພັນອຸດສາຫະກຳ ຂະຫຍາຍຕົວຢ່າງຕໍ່ ບໍ່ຫຼຸດ 11 %;

- ມູນຄ່າສົ່ງອອກສິນຄ້າເພີ່ມຂຶ້ນ ບໍ່ໃຫ້ຫລຸດ 18% ແລະ ມູນຄ່າສິນຄ້ານໍາເຂົ້າ ເພີ່ມຂຶ້ນບໍ່ໃຫ້ເກີນ 8%;
- ຊຸກຍູ້ສົ່ງເສີມຫົວໜ່ວຍວິສາຫະກິດ ຂະໜາດນ້ອຍ-ຂະໜາດກາງ (SME) ແລະ ຈຸລະວິສາຫະກິດ (SMME) ໃຫ້ສາມາດເຄື່ອນໄຫວໄດ້ເປັນປົກກະຕິ (ບໍ່ເຈັ້ງກິດຈະການ) ແລະ ຂະຫຍາຍຫົວໜ່ວຍໃໝ່ ເພີ່ມຂຶ້ນ ບໍ່ຫລຸດ 5%;
- ສົ່ງເສີມໂຄງການຜະລິດສິນຄ້າປາຍແຫຼມ 8 ໂຄງການ ທີ່ກາໍນົດ (ໂຄງການຊີ້ນງົວ ຍໍ່ຫໍ້ວຽງຈັນ ຫຼື ຊີ້ນງົວວຽງຈັນ;
- ສົ່ງເສີມໂຄງການເຂົ້າເປັນສິນຄ້າ, ໂຄງການຫົວອາຫານສັດ, ໂຄງການຜະລິດເຄື່ອງເຮືອນໃໝ່, ສະບຽງອາຫານ (ອາຫານຍີ່ຫໍ້ວຽງຈັນ), ປູກໝາກພ້າວຫອມ ເປັນສິນຄ້າ ແລະ ໂຄງການສ້າງເຂດບໍລິການ ແລະ ເຂດສິນຄ້າ ໃນນິຄົມອຸດສາຫະກໍາ;
- ບັນລຸຄາດໝາຍຂອງ ແຜນຈັດສັນຄວາມເປັນລະບຽບຮຽບຮ້ອຍ ດ້ານການຄ້າ ແລະ ການບໍລິການ (ຕະຫຼາດ) ຕາມຂໍ້ຕົກລົງຂອງເຈົ້າຄອງ ນວ, ສະບັບເລກທີ 1184/ຈນວ, ມາດຕາ 7 ໂດຍພື້ນຖານ.

**4.3 ດ້ານພະລັງງານ ແລະ ບໍ່ແຮ່:**

- ກວດກາ ແລະ ໃຫ້ການແນະນໍາກ່ຽວກັບ ການຊົມໃຊ້ໄຟຟ້າທີ່ຖືກຕ້ອງ ໃຫ້ບັນດາຄົວເຮືອນ ທີ່ມີຄວາມສ່ຽງເກີດອັກຄີໄພ ທີ່ນະຄອນ ບໍ່ຫຼຸດ 50% ຂອງຈໍານວນຄອບຄົວທັງໝົດ.
- ຂຸດຄົ້ນຫີນພູ, ຫີນກັນເຈື່ອນ ແລະ ດິນແດງ ເພື່ອຕອບສະໜອງການພັດທະນາ ພື້ນຖານໂຄງລ່າງຕ່າງໆ ໃຫ້ໄດ້ 300.000 ແມັດກ້ອນ.
- ຂຸດຄົ້ນປຸງແຕ່ງເກືອກິນ ໃຫ້ໄດ້ 10.000-15.000 ໂຕນ.
- ຂຸດຄົ້ນຖ່ານຫີນແອນຕຼາໄຊ (Anthracite) ເພື່ອຈໍາໜ່າຍພາຍໃນ ໃຫ້ໄດ້ 50.000-100.000 ໂຕນ;
- ເພີ່ມຄຸນຄ່າ ແລະ ແຍກແຮ່ທາດ ເຊັ່ນ: ບີສະມຸດ, ເທລູລຽມ, ທອງແທ່ງເຄິ່ງສໍາເລັດຮູບ, ຊືນ, ສັງກະສີ ແລະ ອື່ນໆເພື່ອສົ່ງອອກ ໃຫ້ໄດ້ 300.000-350.000 ໂຕນ;
- ໂຄງການຂຸດຄົ້ນ-ປຸງແຕ່ງແຮ່ຄໍາ ແລະ ແຮ່ຕິດພັນມີຄ່າ ກໍາລັງການຜະລິດ 30.000 ອອນ.
- ຊຸກຍູ້ໂຄງການວຽງຈັນສະຫວ່າງ (ສ.ສະຫວ່າງ) ໄລຍະ ປະຕູໄຊ-ຖະໜົນລ້ານຊ້າງ ໃຫ້ສໍາເລັດ.

**4.4 ດ້ານໂຍທາທິການ-ຂົນສົ່ງ:**

- ສືບຕໍ່ສ້ອມແປງທາງໃນຕົວເມືອງ ໃຫ້ມີຄວາມຮັບປະກັນແກ່ການສັນຈອນໄປ-ມາ ໃຫ້ໄດ້ 39 ເສັ້ນ, ຍາວ 85,5 ກິໂລແມັດ, ດ້ວຍການນໍາໃຊ້ທຶນ ຂອງກອງທຶນທາງ ຈໍານວນ 9,6 ຕື້ກີບ. ນອກຈາກນັ້ນ, ຕ້ອງໄດ້ລະດົມທຶນຈາກທຸກພາກສ່ວນສັງຄົມ; ສຸມໃສ່ກໍ່ສ້າງບັນດາໂຄງການລົງທຶນກ່ອນ ທີ່ໄດ້ມີການຕົກລົງແລ້ວ ຈໍານວນ 15 ໂຄງການ, ຍາວ 186 ກິໂລແມັດ ໃຫ້ໄດ້ 75%; ໃນນັ້ນ: ໃຫ້ສໍາເລັດ 100% ຈໍານວນ 6 ໂຄງການ, ຍາວ 56 ກິໂລແມັດ.
- ເພີ່ມທະວີການປະຕິບັດ ມາດຕະການຄວາມປອດໄພ ແລະ ແກ້ໄຂອຸບັດຕິເຫດຕາມທ້ອງຖະໜົນໃຫ້ຫລຸດລົງ 25-50%.
- ກໍ່ສ້າງປ້ອງກັນຕາຝັ່ງເຈື່ອນ ຈໍານວນ 10 ໂຄງການ, ມີຄວາມຍາວທັງໝົດ 19,71 ກິໂລແມັດ; ໃນນັ້ນ: ໂຄງການສືບຕໍ່ມີ 5 ໂຄງການ, ຍາວ 9,84 ກິໂລແມັດ ແລະ ໂຄງການສະເໜີໃໝ່ 5 ໂຄງການ, ຍາວ 9,95 ກິໂລແມັດ ໃຫ້ສໍາເລັດ 60%.
- ແກ້ໄຂບັນຫາ ແລະ ໜີ້ສິນໂຄງການລົງທຶນສ້າງເສັ້ນທາງຈໍານວນໜຶ່ງໃຫ້ເຂົ້າລະບົບລະບຽບການ.

**4.5 ດ້ານວິທະຍາສາດ ແລະ ເຕັກໂນໂລຊີ:**

- ສືບຕໍ່ກວດກາພະຫະນະວັດແທກ, ຄຸ້ມຄອງສົ່ງເສີມການຜະລິດສິນຄ້າ ໃຫ້ໄດ້ມາດຕະຖານແຫ່ງຊາດ ພ້ອມທັງປົກປ້ອງຜູ້ຊົມໃຊ້ ແລະ ຜູ້ຜະລິດເພື່ອຮັບປະກັນ ຄວາມຍຸດຕິທຳໃນສັງຄົມໃຫ້ໄດ້ 30%.
- ສົ່ງເສີມການນຳໃຊ້ ICT ແລະ ຄອມພິວເຕີ ເຂົ້າໃນການຄຸ້ມຄອງ, ບໍລິຫານລັດ, ການຄົ້ນຄ້ວາຮ່ຳຮຽນ ແລະ ຫົວໜ່ວຍທຸລະກິດໃຫ້ໄດ້ 30% ຂຶ້ນໄປ.
- ຄົ້ນຄວ້າ ແລະ ຢັ້ງຢືນ ມາດຕະຖານສິນຄ້າ ODOP ແລະ ສິນຄ້າທີ່ບໍລິສັດຜະລິດໃໝ່ບໍ່ໃຫ້ຫລຸດ 50 ຊະນິດ.

**4.6 ດ້ານໄປສະນີ ໂທລະຄົມ ແລະ ການສື່ສານ:**

- ຂະຫຍາຍເຄືອຂ່າຍອິນເຕີເນັດ ໃຫ້ກວມເອົາໝົດທຸກບ້ານ ໃນຂອບເຂດ ນະຄອນຫຼວງວຽງຈັນ ເພື່ອໃຫ້ພົນລະເມືອງ ສາມາດນຳໃຊ້ ອິນເຕີເນັດ ໃຫ້ໄດ້ຫລາຍກວ່າ 80%.
- ສຸມໃສ່ເຮັດວຽກງານຄຸ້ມຄອງຫົວໜ່ວຍທຸລະກິດ ບໍລິການດ້ານໄປສະນີ, ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານໃຫ້ເຄື່ອນໄຫວຖືກຕາມລະບຽບກົດໝາຍ ໃຫ້ໄດ້ຢ່າງໜ້ອຍ 95%.
- ຊຸກຍູ້ສົ່ງເສີມໃຫ້ນຳໃຊ້ອຸປະກອນໄອທີ ແລະ ປັບປຸງລະບົບບໍລິການລັດດ້ວຍເອເລັກໂຕຣນິກ, ປຸກລະດົມໃຫ້ປະຊາຊົນ ນຳໃຊ້ຖານຂໍ້ມູນຂ່າວສານເອເລັກໂຕຣນິກ ຂອງນະຄອນຫລວງວຽງຈັນ, ລະຫັດອິນເຕີເນັດ (.LA) ແລະ ດາວທຽມລາວ (ໜັງສືພິມວຽງຈັນໃໝ່, ວຽງຈັນ ມິວເດ, ເວັບໄຊອົງການປົກຄອງ ນະຄອນຫລວງ).

**4.7 ດ້ານຊັບພະຍາກອນທຳມະຊາດ-ສິ່ງແວດລ້ອມ:**

- ສະແກນເອກະສານສຳນວນຕອນດິນ ຢູ່ໃນສາງ ແລະ ປ້ອນຂໍ້ມູນເຂົ້າຄອມພິວເຕີ ໃຫ້ໄດ້ 18.000 ຕອນ;
- ດຳເນີນການສຳຫຼວດ ພິສູດຫຼັກຖານ ແລະ ຂຶ້ນທະບຽນອອກໃບຕາດິນ ໃຫ້ໄດ້ຈຳນວນ 10.000 ຕອນ;
- ປັບປຸງ ແລະ ສ້າງສຳມະໂນສະໂນດທີ່ດິນ ໃຫ້ໄດ້ຈຳນວນ 80.000 ຕອນ;
- ປະຕິບັດຕາມມະຕິຈັດແບ່ງທີ່ດິນ ແລະ ປະເພດທີ່ດິນ ໃຫ້ສຳເລັດ, ໃນນັ້ນ: ເອົາໃຈໃສ່ດິນປ່າໄມ້, ດິນກະສິກຳ;
- ການຂະຫຍາຍເຂດພັດທະນາທີ່ດິນປີ 2018 ໃຫ້ຊ້ຳລີງ;
- ດຳເນີນການສຳຫລວດປັກຫລັກໝາຍ ບຶງໜອງທຳມະຊາດ ຂະໜາດ 10 ເຮັກຕາຂຶ້ນໄປໃຫ້ສຳເລັດ;
- ສືບຕໍ່ດຳເນີນໂຄງການນຳໃຊ້ລະບົບ ICT ເຂົ້າໃນວຽກງານຄຸ້ມຄອງທີ່ດິນ, ໂດຍສຳຫຼວດການອອກແບບ ແລະ ມີຄວາມຊັດເຈນດ້ານແຫຼ່ງທຶນ;
- ແກ້ໄຂກໍລະນີອອກໃບຕາດິນຊ້ຳຊ້ອນ, ອອກຜິດລະບຽບການ ໃຫ້ໄດ້ໂດຍພື້ນຖານ;
- ດຳເນີນໂຄງການສິ່ງແວດລ້ອມຕົວເມືອງ: ວຽງຈັນສະອາດ (ໂຄງການນ້ຳເສັຍນ້ຳເປື້ອນ), ວຽງຈັນສີຂຽວ.

**ມາດຕາ 5: ຄາດໝາຍດ້ານການລົງທຶນ:**

ຕັ້ງໜ້າຊຸດຄົ້ນແຫຼ່ງທຶນ ເຂົ້າໃນການພັດທະນາ ໃຫ້ໄດ້ປະມານ 34,10% ຂອງ GDP ຫຼື ປະມານ 15.500 ຕື້ກີບ; ໃນນັ້ນ:

**5.1 ການລົງທຶນຂອງລັດ:**

- ທຶນພາຍໃນຈາກງົບປະມານ 99,88 ຕື້ກີບ, ກວມເອົາ 0,64% ຂອງທຶນທັງໝົດ (ບໍ່ລວມທຶນຈັດຮັບ-ຈັດຈ່າຍ); ໃນນີ້: ທຶນບ້ວງປົກກະຕິ 95,48 ຕື້ກີບ ແລະ ທຶນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຈຳນວນ 4,4 ຕື້ກີບ.

+ <u>ແຜນການລົງທຶນຂອງລັດ</u> ປະຈຳປີ 2018 (ບ້ວງປົກກະຕິ) ມີທັງໝົດ 693 ໂຄງການ, ລວມເປັນມູນຄ່າ 95,48 ຕື້ກີບ; ໃນນັ້ນ: ເປັນໂຄງການທີ່ມີ ມູນຄ່າຫລາຍກວ່າ 20 ຕື້ກີບ ຈຳນວນ 71 ໂຄງການ, ມູນຄ່າ 25,64 ຕື້ກີບ (ລັດຖະບານ) ແລະ ເປັນໂຄງການທີ່ມີ ມູນຄ່າຕ່ຳກວ່າ 20 ຕື້ກີບ ຈຳນວນ 622 ໂຄງການ (ນວ), ມູນຄ່າ 69,84 ຕື້ກີບ; ໃນນັ້ນ:

- ທຶນສົມທົບ ໃສ່ໂຄງການຊ່ວຍເຫລືອທາງການເພື່ອການພັດທະນາ 12 ໂຄງການ, ມູນຄ່າ 1,95 ຕື້ກີບ, ກວມເອົາ 2,04% ຂອງທຶນໃນປີ 2018 (ບ້ວງປົກກະຕິ 95,48 ຕື້ກີບ).
- ທຶນໂຄງການສືບຕໍ່ 307 ໂຄງການ, ມູນຄ່າ 49,28 ຕື້ກີບ, ກວມເອົາ 51,61%.
- ທຶນໂຄງການສະເໜີໃໝ່ 113 ໂຄງການ, ມູນຄ່າ 11,13 ຕື້ກີບ, ກວມເອົາ 11,66%; ໃນນີ້: ເປັນໂຄງການສົ່ງເສີມວິຊາການ 59 ໂຄງການ, ມູນຄ່າ 3,8 ຕື້ກີບ.
- ທຶນໂຄງການຊາລະໜີ້ສິນ 258 ໂຄງການ, ມູນຄ່າ 33,11 ຕື້ກີບ, ກວມເອົາ 34,68%.

**ທຶນປົກກະຕິແຍກຕາມຂົງເຂດ:**

1) <u>ຂົງເຂດເສດຖະກິດ</u>: ມີ 369 ໂຄງການ, ມູນຄ່າ 58,41 ຕື້ກີບ, ກວມເອົາ 61,17% ຂອງທຶນໃນປີ 2018 (ບ້ວງປົກກະຕິ 95,48 ຕື້ກີບ).
2) <u>ຂົງເຂດວັດທະນະທຳ-ສັງຄົມ</u>: ມີ 144 ໂຄງການ, ມູນຄ່າ 17,64 ຕື້ກີບ, ກວມເອົາ 18,48% ຂອງທຶນໃນປີ 2018 (ບ້ວງປົກກະຕິ 95,48 ຕື້ກີບ).
3) <u>ຂົງເຂດສຳນັກງານຫ້ອງການ</u> ແລະ ອື່ນໆ: ມີ 180 ໂຄງການ, ມູນຄ່າ 19,43 ຕື້ກີບ, ກວມເອົາ 20,35% ຂອງທຶນໃນປີ 2018 (ບ້ວງປົກກະຕິ 95,48 ຕື້ກີບ).

+ **ທຶນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ:** ມີທັງໝົດ 15 ໂຄງການ, ມູນຄ່າ 4,4 ຕື້ກີບ; ໃນນັ້ນ:

- ທຶນໂຄງການສືບຕໍ່ 10 ໂຄງການ, ມູນຄ່າ 3,8 ຕື້ກີບ;
- ທຶນໂຄງການຊຳລະໜີ້ສິນ 5 ໂຄງການ, ມູນຄ່າ 600 ລ້ານກີບ.

ລວມເປັນມູນຄ່າ 4,4 ຕື້ກີບ; ໃນນັ້ນ: ເປັນໂຄງການທີ່ມີ ມູນຄ່າຫລາຍກວ່າ 20 ຕື້ກີບ ຈຳນວນ 4 ໂຄງການ, ມູນຄ່າ 3,3 ຕື້ກີບ ແລະ ເປັນໂຄງການທີ່ມີ ມູນຄ່າຕ່ຳກວ່າ 20 ຕື້ກີບ ຈຳນວນ 11 ໂຄງການ, ມູນຄ່າ 1,1 ຕື້ກີບ.

**ທຶນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຍກຕາມຂົງເຂດ:**

1) ຂົງເຂດເສດຖະກິດ ມີ 12 ໂຄງການ, ມູນຄ່າ 4,25 ຕື້ກີບ.
2) ຂົງເຂດວັດທະນະທຳ-ສັງຄົມ ມີ 2 ໂຄງການ, ບໍ່ໄດ້ຮັບການຈັດສັນທຶນໃສ່ ເນື່ອງຈາກ ໄດ້ຮັບການອ່າຍໜີ້ສາມແຈ ປີ 2017 ແລະ ໄດ້ຮັບການຊຳລະຄືນຕາມມູນຄ່າທີ່ສະພາຮັບຮອງ (ແຕ່ ຍັງຄ້າງຊຳລະຕາມໜ້າວຽກສຳເລັດ).
3) ຂົງເຂດສຳນັກງານຫ້ອງການ ມີ 1 ໂຄງການ, ມູນຄ່າ 150 ລ້ານກີບ.

ການຄຸ້ມຄອງການລົງທຶນຂອງລັດ ລວມທັງໝົດ ທີ່ ນວ ໄດ້ຮັບອະນຸມັດໃນປີ 2018 ຈຳນວນ 99,88 ຕື້ກີບ: ເປັນໂຄງການທີ່ພະແນກການ-ອົງການຂັ້ນ ນວ ຄຸ້ມຄອງ ຈຳນວນ 74,56 ຕື້ກີບ, ກວມເອົາ 74,64%, ເປັນໂຄງການລົງທຶນທີ່<u>ບັນດາເມືອງຄຸ້ມຄອງ</u> ຈຳນວນ 34,28 ຕື້ກີບ, ກວມເອົາ 34,33%; ໃນນັ້ນ: ລົງທຶນຢູ່ເຂດ 4 ເມືອງໃນ ຈຳນວນ 12,13 ຕື້ກີບ, ກວມເອົາ 12,15% ແລະ ລົງທຶນຢູ່ເຂດ 5 ເມືອງນອກ (ຊົນນະບົດ) ຈຳນວນ 22,15 ຕື້ກີບ, ກວມເອົາ 22,18%.

5.2 ຄາດຄະເນການລົງທຶນໂດຍກົງຂອງເອກະຊົນພາຍໃນ ແລະ ຕ່າງປະເທດ (FDI) ເຂົ້າໃນການພັດທະນາ: ໃຫ້ໄດ້ປະມານ 11.200 ຕື້ກີບ ກວມເອົາ 72,26% ຂອງທຶນທັງໝົດ(ໂຄງການຮຽກການລົງທຶນຂອງຂະແໜງການ ແລະ ໂຄງການສະໝັກໃຈຂອງຜູ້ລົງທຶນ).

5.3 ການລົງທຶນຈາກການຊ່ວຍເຫລືອທາງການເພື່ອການພັດທະນາ (ODA):
ຄາດຄະເນທຶນ ODA ໃຫ້ໄດ້ປະມານ 1.070 ຕື້ກີບ, ກວມເອົາ 6,90% ຂອງທຶນທັງໝົດ.

5.4 ຄາດຄະເນການລົງທຶນຈາກທະນາຄານ ແລະ ການລົງທຶນຂອງປະຊາຊົນ(SMME):
ຊຸກຍູ້ສົ່ງເສີມການລົງທຶນຈາກທະນາຄານ ແລະ ການລົງທຶນຂອງປະຊາຊົນ (ຂະໜາດນ້ອຍ, ກາງ ແລະ ຈຸລະວິສາຫະກິດ) ໃຫ້ໄດ້ 3.130 ຕື້ກີບ, ກວມເອົາ 20,19% ຂອງທຶນທັງໝົດ.

ມາດຕາ 6: ຄາດໝາຍການແກ້ໄຂໜີ້ສິນໃນທົ່ວລະບົບຂອງ ນວ:

ສູ້ຊົນແກ້ໄຂໜີ້ສິນລວມໃນທົ່ວລະບົບ ຂອງ ນວ ໃຫ້ຫລຸດລົງ 23,05% ຈາກໜີ້ສິນທີ່ມີຢູ່ 2.156,28 ຕື້ກີບ, ໃຫ້ຍັງເຫລືອ 1.659,20 ຕື້ກີບ ລະອຽດດັ່ງນີ້:

6.1 ຄາດໝາຍການແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ:
ປີ 2018 ບໍ່ພຽງແຕ່ຈະຢຸດການລົງທຶນກ່ອນ ແລະ ການລົງທຶນນອກແຜນ ຢ່າງສິ້ນເຊີງເທົ່ານັ້ນ ຫາກຍັງຕ້ອງເຮັດໃຫ້ຍອດໜີ້ສິນຂອງ ອົງການປົກຄອງນະຄອນຫລວງວຽງຈັນ (ໜີ້ສິນໂຄງການລົງທຶນຂອງລັດທີ່ປະຕິບັດວຽກສຳເລັດ 100% ແລະ ສິ້ນສຸດໄລຍະການຊາລະຕາມສັນຍາ) ຫຼຸດລົງ 20,70%, ເທົ່າກັບ 405,16 ຕື້ກີບ, ຈາກ 1.957,64 ຕື້ກີບ ມາເປັນ 1.552,47 ຕື້ກີບ.

6.2 ຄາດໝາຍແກ້ໄຂໜີ້ສິນລາຍຈ່າຍບໍລິຫານ
ສູ້ຊົນແກ້ໄຂໜີ້ສິນລາຍຈ່າຍບໍລິຫານຂອງ ນະຄອນຫລວງ ໃຫ້ຫລຸດລົງ 20% ຈາກໜີ້ສິນທີ່ມີຢູ່ 24,72 ຕື້ກີບ (ໜີ້ສິນຄ່າໄຟຟ້າ ຈຳນວນ 22,35 ຕື້ກີບ ແລະ ໜີ້ສິນຄ່ານ້ຳປະປາ 2,37 ຕື້ກີບ), ໃຫ້ຍັງເຫລືອ 19,77 ຕື້ກີບ.

6.3 ຄາດໝາຍແກ້ໄຂໜີ້ສິນຄ່າຊົດເຊີຍຜູ້ທີ່ຖືກກະທົບໂຄງການສຳປະທານທີ່ດິນ:
ສຸມໃສ່ແກ້ໄຂໜີ້ສິນຄ່າຊົດເຊີຍ ຜູ້ທີ່ຖືກກະທົບໂຄງການສຳປະທານທີ່ດິນ ໂຄງການ ໜອງຈັນ, ໂຄງການເຂດພັດທະນາກວມລວມໄຊເຊດຖາ, ໂຄງການໜອງທາ, ເຂດນິຄົມອຸດສາຫະກຳວຽງຈັນ (ຫລັກ 21) ໂຄງການໜອງແປນ...ທີ່ຍັງຄ້າງຊຳລະ ຈຳນວນ 173,92 ຕື້ກີບ, ໃຫ້ຫລຸດລົງ 50%, ໃຫ້ຍັງເຫລືອ 86,96 ຕື້ກີບ ແລະ ອື່ນໆ.

6.4 ແຫຼ່ງຊຳລະໜີ້ສິນ:

- ແຫລ່ງທຶນຊຳລະໜີ້ສິນໂຄງການລົງທຶນຂອງລັດຕົ້ນຕໍປີ 2018 ຈາກງົບປະມານຂອງລັດ 33,71 ຕື້ກີບ, ກວມເອົາ 33,76% ຂອງທຶນໃນປີ 2018 (ບ້ວງປົກກະຕິ 98,88 ຕື້ກີບ) ທີ່ລັດຖະບານອະນຸມັດໃຫ້ນະຄອນຫລວງວຽງຈັນ ແລະ ທຶນອ່ວຍໜີ້ສາມແຈ ປີ 2017 ຈານວນ 371,44 ຕື້ກີບ ທີ່ປະຕິບັດໃນປີ 2018 ລວມເປັນທຶນຊຳລະໜີ້ສິນທັງໝົດ ໃນປີ 2018 ຈານວນ 405,16 ຕື້ກີບ.
- ແບ່ງງານຈັດຫາແຫຼ່ງງົບປະມານຂອງລັດມາຊຳລະ ຕາມທິດທາງຄື:
  - ໂຄງການໃດສູນກາງແຈ້ງການອະນຸມັດ ກໍ່ໃຫ້ເປັນພູດໜີ້ ແລະ ພາລະຂອງສູນກາງຊຳລະສະສາງ.
  - ໂຄງການໃດອົງການປົກຄອງ ນະຄອນຫລວງວຽງຈັນ ເປັນຜູ້ຕົກລົງໃຫ້ລົງທຶນສະໄໝກ່ອນ ໃຫ້ກວດການາດຖານ, ລາຄາຄືນໃໝ່ ແລະ ອົງການປົກຄອງ ນະຄອນຫລວງວຽງຈັນ ເປັນຜູ້ຊອກທຶນມາຊຳລະ ໂດຍຈະຄົ້ນຄ້ວາເອົາຮ່ວງເງິນເກີນແຜນປີ 2018, ການຫັນໜີ້ເປັນທຶນ, ການຫັກລົບໜີ້

ສິນກັບຊັບສິນຜູ້ລົງທຶນ ແລະ ວິທີການອື່ນໆ ຕາມການອະນຸຍາດຂອງ ສະພາປະຊາຊົນນະຄອນຫຼວງວຽງຈັນ ແລະ ລັດຖະບານ.

- ໂຄງການລົງທຶນກ່ອນຂອງເມືອງ ຫຼື ຂອງພະແນກການຕົກລົງເອງ ແມ່ນໃຫ້ອົງການປົກຄອງເມືອງ ແລະ ພະແນກການນັ້ນ ເປັນເຈົ້າການຊອກຫາທຶນມາຊໍາລະໃຫ້ຜູ້ລົງທຶນນັ້ນໆ ໂດຍມີການກວດກາມາດຕະຖານ, ລາຄາຄືນໃໝ່, ສ່ວນແຫຼ່ງທຶນຊໍາລະ ກໍດໍາເນີນຄ້າຍຄືກັນກັບຂອງອົງການປົກຄອງ ນວ.

- ແຫລ່ງທຶນຊໍາລະໜີ້ສິນດ້ານບໍລິຫານລັດ ມາຈາກ ງົບປະມານລາຍຈ່າຍປົກກະຕິ ພາກ 62 ທີ່ລັດຖະບານອະນຸມັດໃຫ້, ສູ້ຊົນຂຸດຄົ້ນທ່າແຮງບົ່ມຊ້ອນດ້ານລາຍຮັບ ສ້າງເງື່ອນໄຂ ໃຫ້ນະຄອນຫລວງມີລາຍຮັບເກີນແຜນ ເພື່ອສະເໜີຫາລັດຖະບານ ພິຈາລະນາ, ພ້ອມທັງສູ້ຊົນສ້າງລາຍຮັບວິຊາການຂອງແຕ່ລະພາກສ່ວນໃຫ້ເພີ່ມຂຶ້ນ ເພື່ອເປັນເປັນຖານແກ້ໄຂໜີ້ສິນເກົ່າ ໃຫ້ໄດ້ ເພີ່ມຂຶ້ນຢ່າງໜ້ອຍ 5-10%.
- ແຫລ່ງທຶນຊໍາລະຄ່າຊົດເຊີຍຜູ້ທີ່ຖືກກະທົບໂຄງການສໍາປະທານທີ່ດິນ ຂອງພາກເອກະຊົນລົງທຶນຕາມການເຫັນດີຂອງ ອົງການປົກຄອງນະຄອນຫລວງ ແລະ ລັດຖະບານ ມາກ່ອນໃຫ້ເບິ່ງຂຸດຄົ້ນແຫຼ່ງລາຍຮັບຢູ່ບ່ອນນັ້ນເປັນຕົ້ນຕໍ(ຈາກຜູ້ສໍາປະທານ, ຈາກລາຍຮັບທີ່ເກີດຈາກການສໍາປະທານ ຫຼື "ຊີ້ນມັນຍໍາມັນ").

**ມາດຕາ 7: ຄາດໝາຍສູ້ຊົນຕົ້ນຕໍດ້ານສັງຄົມ ມີດັ່ງນີ້:**

**7.1 ດ້ານການສຶກສາ ແລະ ກິລາ:**

- ອັດຕາເຂົ້າຮຽນຂອງເດັກອາຍຸ 5 ປີ ໃນຊັ້ນການສຶກສາກ່ອນໄວຮຽນ ສະເລ່ຍທົ່ວນະຄອນຫລວງ ເພີ່ມຈາກ 91,5% ໃຫ້ບັນລຸໄດ້ 92,5%, ສູ້ຊົນໃຫ້ຈໍານວນເມືອງທີ່ບັນລຸອັດຕາເຂົ້າຮຽນຂອງເດັກອາຍຸ 5 ປີສູງກ່ວາ 92% ເພີ່ມຈາກ 6 ເມືອງເປັນ 7 ເມືອງ;
- ອັດຕາເຂົ້າຮຽນໃໝ່ສຸດທິຊັ້ນປະຖົມສຶກສາ ຈາກ 101,2% ໃຫ້ບັນລຸໄດ້ 100%;
- ອັດຕາປະລະການຮຽນ ຂອງນັກຮຽນ ປໍ 1 ໃຫ້ຫຼຸດລົງຈາກ 3,7% ຍັງເຫຼືອ 3%;
- ອັດຕາຄ້າງຫ້ອງ ຂອງນັກຮຽນ ປໍ 1 ໃຫ້ຫຼຸດລົງຈາກ 5,3% ຍັງເຫຼືອ 4%;
- ອັດຕາປະລະການຮຽນຂອງນັກຮຽນ ຊັ້ນປະຖົມສຶກສາ ໃຫ້ຫຼຸດລົງຈາກ 1,5% ຍັງເຫຼືອ 1%;
- ອັດຕາຄ້າງຫ້ອງ ຂອງນັກຮຽນຊັ້ນປະຖົມສຶກສາ ໃຫ້ຫຼຸດລົງຈາກ 2,9% ຍັງເຫຼືອ 2%;
- ອັດຕາລອດເຫລືອ ຮອດ ປໍ 5 ໃຫ້ເພີ່ມຈາກ 93,8% ໃຫ້ບັນລຸໄດ້ 94,5%;
- ສູ້ຊົນໃຫ້ຈໍານວນເມືອງ ທີ່ບັນລຸອັດຕາເຂົ້າຮຽນລວມໃໝ່ຂັ້ນປໍ 5 ສູງກວ່າ 100% ເພີ່ມຈາກ 7 ເມືອງເປັນ 8 ເມືອງ;
- ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນ ເພີ່ມຈາກ 98% ໃຫ້ບັນລຸໄດ້ 99%;
- ສູ້ຊົນໃຫ້ຈໍານວນເມືອງທີ່ບັນລຸອັດຕາເຂົ້າຮຽນລວມໃໝ່ຂັ້ນມໍ 4 ຂອງນັກຮຽນຍິງ ສູງກວ່າ 75% ເພີ່ມຈາກ 7 ເມືອງ ເປັນ 8 ເມືອງ;
- ອັດຕາການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ໃຫ້ຫຼຸດລົງຈາກ 3,5% ຍັງເຫຼືອ 2,5%;
- ອັດຕາເຂົ້າຮຽນລວມ ຂອງນັກຮຽນຊັ້ນມັດທະຍົມຕອນປາຍ ເພີ່ມຈາກ 77,7% ໃຫ້ບັນລຸໄດ້ 80%;
- ອັດຕາການປະລະການຮຽນຂອງນັກຮຽນ ຊັ້ນມັດທະຍົມຕອນປາຍ ໃຫ້ຫຼຸດລົງຈາກ 3,1% ຍັງເຫຼືອ 2%;

- ຈັດບຳລຸງລຶບລ້າງຄວາມບໍ່ຮູ້ໜັງສືໃຫ້ປະຊາກອນ ອາຍຸ 15-40 ປີ, ໃຫ້ໄດ້ 1,468 ຄົນ, ບຳລຸງຍົກລະດັບ ມັດທະຍົມຕົ້ນ ໃຫ້ໄດ້ 2.036 ຄົນ, ບຳລຸງຍົກລະດັບ ມັດທະຍົມປາຍ ໃຫ້ປະຊາຊົນ ຈຳນວນ 1.651 ຄົນ;
- ປະຊາຊົນນະຄອນຫລວງວຽງຈັນ ໃຫ້ຫັນມາຫຼິ້ນກິລາ ແລະ ອອກກຳລັງກາຍໃຫ້ໄດ້ 30% ຂອງຈຳນວນພົນລະເມືອງ.
- ສົ່ງເສີມການຮຽນ-ການສອນຜ່ານ ICT ຂອງພາກລັດ ແລະ ເອກະຊົນ(SMART EDUCATION).

7.2 **ດ້ານສາທາລະນະສຸກ:**

- ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານໃຫ້ຫຼຸດລົງຈາກ 14% ຍັງເຫຼືອ 13% ຂອງປະຊາກອນກຸ່ມເປົ້າໝາຍ;
- ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ລວງສູງບໍ່ໄດ້ມາດຕະຖານໃຫ້ຫຼຸດລົງຈາກ 16% ຍັງເຫຼືອ 15% ຂອງປະຊາກອນກຸ່ມເປົ້າໝາຍ;
- ອັດຕາສ່ວນການຕາຍຂອງເດັກນ້ອຍລຸ່ມ 1 ປີ/1.000 ໃຫ້ຫລຸດລົງຈາກ 24% ຍັງເຫລືອ 20%;
- ອັດຕາສ່ວນການຕາຍຂອງເດັກນ້ອຍລຸ່ມ 5 ປີ/1.000 ໃຫ້ຫລຸດລົງຈາກ 28% ຍັງເຫລືອ 25%;
- ອັດຕາສ່ວນການຕາຍຂອງແມ່ ບໍ່ໃຫ້ເກີນ 35/100.000;
- ອັດຕາສ່ວນການເກີດມີແພດຊ່ວຍ ຈາກ 88% ໃຫ້ບັນລຸໄດ້ 90%;
- ອັດຕາສ່ວນການສັກຢາກັນພະຍາດ ເພີ່ມຈາກ 83,4% ໃຫ້ບັນລຸໄດ້ 90% ຂອງຈຳນວນປະຊາກອນກຸ່ມເປົ້າໝາຍ;
- ອັດຕາສ່ວນການຊົມໃຊ້ນ້ຳສະອາດ ຈາກ 99,86% ໃຫ້ບັນລຸໄດ້ 99,87% ຂອງຈຳນວນຄອບຄົວທັງໝົດ;
- ຮັກສາອັດຕາສ່ວນການຊົມໃຊ້ວິດຖ່າຍ ຈາກ 99,81% ໃຫ້ບັນລຸໄດ້ 99,82% ຂອງຈຳນວນຄອບຄົວທັງໝົດ;
- ອັດຕາສ່ວນການປົກຄຸມປະກັນສຸຂະພາບ ຈາກ 20% ໃຫ້ບັນລຸໄດ້ 40% ຂອງຈຳນວນປະຊາກອນ ທີ່ມີອາຊີບອິດສະຫລະ.
- ຜັນຂະຫຍາຍ ແລະ ປະກາດໃຊ້ນິຕິກຳຄຸ້ມຄອງອາຫານປອດໄພ, ຢາ, ນ້ຳດື່ມ, ຢາສູບ ແລະ ເຄື່ອງດື່ມທີ່ມີທາດເຫລົ້າ ໃຫ້ສັງຄົມ ແລະ ຜູ້ປະກອບການ ຢ່າງທົ່ວເຖິງ.

7.3 **ດ້ານຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ:**

- ຂະຫຍາຍຕາໜ່າງໂທລະໂຄ່ງໃຫ້ໄດ້ 5 ບ້ານ ໃນທົ່ວນະຄອນຫຼວງວຽງຈັນ;
- ສ້າງຄອບຄົວວັດທະນະທຳ ໃຫ້ໄດ້ 2.000 ຄອບຄົວ, ບ້ານວັດທະນະທຳ ໃຫ້ໄດ້ 12 ບ້ານ.
- ສູ້ຊົນສືບຕໍ່ສົ່ງເສີມ ແລະ ຮຽກການລົງທຶນ ພັດທະນາແຫລ່ງທ່ອງທ່ຽວທຳມະຊາດ ຕິດພັນກັບແຫລ່ງທ່ອງທ່ຽວກະເສດໃໝ່ ພູພະນັງ-ຫ້ວຍຊອນ-ຫ້ວຍຊື້ວ.
- ຍູ້ແຮງການສົ່ງເສີມການທ່ອງທ່ຽວ 2018 ຢ່າງຕັ້ງໜ້າໂດຍໃຫ້ປັບປຸງກິນໄກ, ກິດຈະກຳການເຄື່ອນໄຫວຂອງວຽກງານທ່ອງທ່ຽວໃຫ້<u>ມີສີສັນສົດໃສ ແລະ ມີສະເໜ່</u>ຫຼາຍຂຶ້ນ: ກິດຈະກຳຮາຕົວຽງຈັນ ແລະ ກິດຈະກຳໃໝ່ ຈຳນວນໜຶ່ງ; ດຶງດູດນັກທ່ອງທ່ຽວເຂົ້າມາທ່ອງທ່ຽວ ໃນນະຄອນຫຼວງວຽງຈັນ ໃຫ້ໄດ້ 2.000.000 ເທື່ອຄົນ, ຄາດຄະເນລາຍຮັບຈາກການທ່ອງທ່ຽວ ປະມານ 190 ລ້ານໂດລາ.
- ສົ່ງເສີມ ແລະ ພັດທະນາ<u>ແຫຼ່ງທ່ອງທ່ຽວທຳມະຊາດ</u> ເປັນຕົ້ນແຫຼ່ງທ່ອງທ່ຽວ: ພູພະນັງ-ຫ້ວຍຊອນ, ທ່ອງທ່ຽວລ່ອງນ້ຳງື່ມ, ຊຸກຍູ້ການພັດທະນາ ແລະ ທ່ອງທ່ຽວຄອງບຶງທາດຫຼວງ (ຄອງນ້ຳວຽງຈັນ)...

- ແກ້ໄຂປະກົດການຫຍໍ້ທໍ້ທາງດ້ານວັດທະນະທຳ-ສັງຄົມ: ໄພສັງຄົມ ແລະ ການຫລິ້ນກິນຟຸມເຟືອຍ ໃຫ້ຫຼຸດລົງ, ແກ້ໄຂການບໍລິການບັນເທີງໃຫ້ໄປຕາມກົດໝາຍວັດທະນະທຳ ແລະ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 315/ລບ.
- ສືບຕໍ່ປະຕິສັງຂອນອີງພະທາດຫຼວງ ໃຫ້ສຳເລັດຕາມແຜນການທີ່ກຳນົດໄວ້, ປັບປຸງຮ່ອງນ້ຳ, ສ້າງປຶ້ມປະຫວັດອີງພະທາດຫຼວງ, ການຈັດວາງສະແດງວັດຖຸພັນພາຍໃນກົມມະລຽນ,... ປະກາດໃຊ້ຂໍ້ຕົກລົງຂອງເຈົ້າຄອງ ນວ ວ່າດ້ວຍ ການຄຸ້ມຄອງສະໜາມຫຼວງ, ເດີ່ນພະທາດຫຼວງ ແລະ ບໍລິເວນອ້ອມຮອບໃຫ້ສຳເລັດ.
- ປະຕິບັດການນຳໃຊ້ລະບົບ ICT ເຂົ້າໃນວຽກງານ ຖະແຫລງຂ່າວ ວັດທະນະທາ ແລະ ທ່ອງທ່ຽວ.

7.4 **ດ້ານແຮງງານ ແລະ ສະຫວັດດີການ-ສັງຄົມ:**

- ຄວບຄຸມອັດຕາການວ່າງງານ ໃຫ້ຢູ່ໃນລະດັບ 2%;
- ພັດທະນາສີມືແຮງງານໃຫ້ໄດ້ 15.000 ຄົນ;
- ຈັດຫາວຽກເຮັດງານທຳໃຫ້ໄດ້ 20.000 ຄົນ;
- ສຸມໃສ່ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດ ໃຫ້ໄດ້ຈຳນວນ 271 ທ່ານ;
- ຄົ້ນຄ້ວານຳສະເໜີສຳເລັດດນະໂຍບາຍຈາກການ "ເອົາທີ່ດິນໃຫ້ພະນັກງານ ມາເປັນເອົາຫ້ອງເຮືອນຢູ່";
- ຄົ້ນຄວ້ານຳສະເໜີຂໍດິນ ເພື່ອສະເໜີຂໍອະນຸມັດ ໂຄງການ ປຸກສ້າງທີ່ຢູ່ອາໄສ ໃຫ້ພະນັກງານບຳນານທີ່ຂາດເຂີນ.

7.5 **ຄາດໝາຍດ້ານປະຊາກອນ, ການແກ້ໄຂປະກົດການຫຍໍ້ທໍ້ ແລະ ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ:**

- ຄາດຄະເນພົນລະເມືອງຂອງ ນະຄອນຫລວງ ໃນປີ 2018 ຈະມີປະມານ 1.004.000 ຄົນ, ມີແຮງງານ 597.000 ຄົນ; ຜູ້ຫວ່າງງານ 2,5%, ສູ້ຊົນແກ້ໄຂໃຫ້ຫລຸດລົງ ຢູ່ໃນລະດັບບໍ່ເກີນ 2%.
- ສືບຕໍ່ຈັດສັນຄວາມເປັນລະບຽບຮຽບຮ້ອຍຕາມຂໍ້ຕົກລົງ ສະບັບເລກທີ 1184/ຈນວ, ປະຕິບັດຄາດໝາຍ 3 ຫລຸດ ໃຫ້ໄດ້ 25-50% ແກ້ໄຂປະກົດການຫຍໍ້ທໍ້ ທາງດ້ານວັດທະນະທຳສັງຄົມ, ໄພສັງຄົມກຸ່ມແກ້ງກວນເມືອງ, ການກໍ່ອາດສະຍາກຳດ້ວຍການໃຊ້ອາວຸດ ໃຫ້ຫລຸດລົງ.
- ແກ້ໄຂບັນດາຂໍ້ຂັດແຍ່ງຄະດີຄວາມ ໃຫ້ຫລຸດລົງ 10%.
- ປະຕິບັດໂຄງການ ສ. ສະຫງົບສຸກ, ເຮັດໃຫ້ 7 ຕົວຊີ້ວັດປະກົດເດັ່ນຊັດ.

**ມາດຕາ 8: ຄາດໝາຍດ້ານສິ່ງແວດລ້ອມ:**

- ປົກປັກຮັກສາປ່າສະຫງວນຢູ່ ນະຄອນຫລວງວຽງຈັນ ໃຫ້ຍືນຍົງ ເປັນຕົ້ນ ພູພະນັງ, ພູເຂົາຄວາຍ, ສູ້ຊົນປັກຫລັກໝາຍເຂດ ປ່າສະຫງວນ ພູເຂົາຄວາຍ ຢູ່ເຂດເມືອງ ປາກງື່ມ ໃຫ້ໄດ້ 12.000 ເຮັກຕາ.
- ປະຕິບັດມາດຕະການຮັກສາສິ່ງແວດລ້ອມ ດ້ວຍການຫ້າມການຈູດເຜົາຂີ້ເຫຍື້ອ, ຈຳກັດການສ້າງຄວັນຂຶ້ນທ້ອງຟ້າ ໃຫ້ຫຼຸດລົງ 50% ໃນຂອບ ນະຄອນຫລວງ, ສະເພາະ 4 ເມືອງໃນ (ເມືອງ ຈັນທະບູລີ, ສີສັດຕະນາກ, ສີໂຄດຕະບອງ ແລະ ໄຊເຊດຖາ) ແກ້ໄຂການຈູດຂີ້ເຫຍື້ອໃນຕົວເມືອງ ແລະ ຊານເມືອງໃຫ້ໄດ້ ຫ້າມບໍ່ໃຫ້ມີການຈູດຂີ້ເຫຍື້ອ.
- ປູກໄມ້ໃຫ້ສີຂຽວເພີ່ມຕື່ມ ປະຕິບັດນະໂຍບາຍສ້າງນະຄອນ ສ ສີຂຽວ ສູ້ຊົນປູກຕົ້ນໄມ້ໃຫ້ໄດ້ 2 ຕົ້ນຕໍ່ຄົນ ຫລື ປະມານ 2 ລ້ານຕົ້ນ;
- ສູ້ຊົນປັບປຸງລະບົບການເກັບມ້ຽນຂີ້ເຫຍື້ອ ໃຫ້ມີຄວາມເປັນລະບຽບຮຽບ ແລະ ມີປະສິດທິພາບສູງ ຄື: ເກັບມ້ຽນຂີ້ເຫຍື້ອໃຫ້ເພີ່ມຂຶ້ນຈາກ 350 ໂຕນຕໍ່ວັນ ເປັນ 400 ໂຕນຕໍ່ວັນ. ເພີ່ມຄວາມສະອາດ

ເສັ້ນທາງຢູ່ຕົວເມືອງ ທັງໝົດ 21 ເສັ້ນທາງ ໃຫ້ເປັນເສັ້ນທາງເທດສະບານ ບັນລຸມາດຖານເສັ້ນທາງສະອາດ.

- ບຳບັດນ້ຳເສຍ, ນ້ຳເປື້ອນ ຕາມຄອງລະບາຍນ້ຳສາທາລະນະ ແລະ ຄົວເຮືອນ ໃຫ້ມີສິ່ງປົນເປື້ອນທີ່ເປັນພິດໃນນ້ຳຕາມຄອງລະບາຍນ້ຳສາທາລະນະ ຫລຸດລົງ ແລະ ສູ້ຊົນເຮັດໃຫ້ສິ່ງປົນເປື້ອນທີ່ເປັນພິດໃນນ້ຳຈາກຄົວເຮືອນຫລຸດລົງ ໃຫ້ຢູ່ໃນລະດັບມາດຕະຖານສິ່ງແວດລ້ອມແຫ່ງຊາດ ກຳນົດໄວ້ ບີໂອດີ (BOD) 5 ໃຫ້ໄດ້ 30 mg/l.

**ມາດຕາ 9: ຄາດໝາຍສູ້ຊົນຕົ້ນຕໍດ້ານການພັດທະນາຕົວເມືອງ ແລະ ເທດສະບານ:**

9.1 ຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ໃຫ້ເປັນຮູບປະທຳ, ຊຸກຍູ້ໂຄງການວຽງຈັນສະອາດ ແລະ ສີຂຽວ ເຮັດໃຫ້ຂະບວນການນີ້ຖືກຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ແລະ ປະຕິບັດໃນທຸກຄອບຄົວ ແລະ ບ້ານ.

9.2 ປະຕິບັດຂໍ້ຕົກລົງ ວ່າດ້ວຍ ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ແລະ ຊານເມືອງໄດ້ໂດຍພື້ນຖານ(80%).

9.3 ຄຸ້ມຄອງການກໍ່ສ້າງໃນແຕ່ລະເຂດ ໃຫ້ໄປຕາມແຜນ ຜັງ<u>ກວມລວມ,</u> ແລະ ແຜນຜັງສະເພາະໃຫ້ເຂັ້ມງວດ.

9.4 ແກ້ໄຂບັນຫາການຖິ້ມຂີ້ເຫຍື້ອຊະຊາຍ ແລະ ຄົ້ນຄວ້າແກ້ໄຂການຫັນຂີ້ເຫຍື້ອໃຫ້ເປັນພະລັງງານໃຫ້ສຳເລັດ.

9.5 ບໍລິຫານຈັດການລະບາຍນ້ຳອອກຈາກຕົວເມືອງ, ປະຕິບັດໂຄງການຮ່ວມມືດ້ານນ້ຳເສັຍໃນຕົວເມືອງ...

9.6 ປັບປຸງລະບົບຄວາມປອດໄພ ຕາມທ້ອງຖະໜົນໃຫ້ໄດ້ມາດຕະຖານເຕັກນິກ ແລະ ເລັ່ງໃສ່ປັບປຸງແກ້ໄຂລະບົບການສັນຈອນແອອັດໃນຕົວເມືອງ( ເລີ່ມຄົ້ນຄ້ວາ SMART TRANSPORTATION).

9.7 ຂະຫຍາຍການຜະລິດນ້ຳປະປາ ຈາກ 300.000ມ³/ມື້ ເພີ່ມເປັນ 320.000 ມ³/ມື້ ຕອບສະໜອງ 7 ຕົວເມືອງ ໃຫ້ໄດ້ 90% ແລະ 2 ເມືອງນອກ ໃຫ້ໄດ້ 70%.

9.8 ສືບຕໍ່ສ້າງເຂດເມືອງໃໝ່ (ຄຸ້ມເມືອງໃໝ່) ໃຫ້ປະກົດພົ້ນເດັ່ນຂຶ້ນ ເຊັ່ນ: ເຂດພັດທະນາ ບຶງທາດຫຼວງ ແລະ ເຂດອຸດສາຫະກຳໄຊເສດຖາ (ຫຼັກ 21), ເຂດໜອງທາ, ສະກາຍຊິຕີ້...

9.9 ເລີ່ມຄົ້ນຄ້ວາ<u>ໂຄງການພັດທະນາຕົວເມືອງອັດສະລິຍະ</u> (SMART CITY) ຮ່ວມມືກັບມິດສະກູ, ບໍລິສັດຮົວເວ.

9.10 ປ້ອນຂໍ້ມູນເຂົ້າຄອມພິວເຕີ (ສະແກນເອກະສານສຳນວນຕອນດິນ) ໃຫ້ໄດ້ຈຳນວນ 50.000 ຕອນ.

9.11 ປັບປຸງສ້ອມແປງເສັ້ນທາງທີ່ເປເພຊຸດໂຊມ, ຊຸກຍູ້ໂຄງການກໍ່ສ້າງເສັ້ນດ່ວນຄູ່ຂະໜານຖະໜົນໄກສອນພົມວິຫານ, ໂຄງການປ້ອງກັນຕາຝັ່ງເຈື່ອນແຄມຂອງ ໄລຍະ 2, ແກ້ໄຂບັນຫາໂຄງການກໍ່ສ້າງທາງ 450 ປີ, ທາງດອນນົກຂຸ້ມ-ທາງ 450 ປີ, ໂຄງການທາງລົດໄຟ ແລະ ອື່ນໆ ທີ່ລັດຖະບານຕົກລົງ ໃຫ້ສຳເລັດໂດຍພື້ນຖານ.

9.12 ຄົ້ນຄວ້າສຳຫລວດ ແລະ ເພີ່ມຄວາມສະອາດ ໃນເຂດເທດສະບານຂອງທຸກໆເມືອງ, ເປັນຕົ້ນ ເມືອງໄຊທານີ, ປາກງື່ມ ແລະ ສັງທອງ ໃຫ້ສຳເລັດ.

**ມາດຕາ 10: ຄາດໝາຍສູ້ຊົນຕົ້ນຕໍດ້ານການຄຸ້ມຄອງ-ບໍລິຫານລັດ:**

**10.1 ດ້ານກິງຈັກການຈັດຕັ້ງ:**

- ສືບຕໍ່ຜັນຂະຫຍາຍມະຕິກ່ຽວກັບການສ້າງເມືອງເປັນ ຫົວໜ່ວຍເຂັ້ມແຂງຮອບດ້ານ ໂດຍສຸມໃສ່ສ້າງໃຫ້ເປັນເມືອງເຂັ້ມແຂງດ້ານແຜນການ ແລະ ງົບປະມານ 7 ເມືອງຄື: ເມືອງ ຈັນທະບູລີ, ສີສັດຕະນາກ, ສີໂຄດຕະບອງ, ໄຊເສດຖາ, ໄຊທານີ, ຫາດຊາຍຟອງ ແລະ ນາຊາຍທອງ;
- ສ້າງບ້ານໃຫ້ເປັນບ້ານ ພັດທະນາ (ຂັ້ນພໍກິນພໍໃຊ້) ໃຫ້ເພີ່ມຂຶ້ນ 60 ບ້ານ, ລວມທັງໝົດໃຫ້ໄດ້ 430 ບ້ານ, ກວມເອົາ 89% ຂອງບ້ານທັງໝົດທົ່ວນະຄອນຫລວງ;
- ສືບຕໍ່ສ້າງພະແນກການ ໃຫ້ເປັນພະແນກການ 5 ດີ (ເປັນພະແນກການ ຄຸ້ມຄອງມະຫາພາກ) 5 ພະແນກ ຄື: ພະແນກແຜນການ ແລະ ການລົງທຶນ, ພະແນກ ການເງິນ, ສ່ວຍສາອາກອນ ປະຈຳ ນວ, ພະແນກ ໂຍທາທິການ ແລະ ຂົນສົ່ງ ແລະ ພະແນກ ອຸດສາຫະກຳ ແລະ ການຄ້າ;
- ເພີ່ມທະວີສ້າງຂະບວນການ "ແຂ່ງຂັນຮັກຊາດ ແລະ ພັດທະນາ" ຕິດພັນກັບຮັກນະຄອນຫລວງ, ຈັດຕັ້ງປະຕິບັດແຜນວຽກຈຸດສຸມທົ່ວອົງຄະນະພັກ "3 ຫລຸດ 3 ເພີ່ມ ແລະ 3 ຂະບວນການ" ໃຫ້ລົງສູ່ພະແນກການ-ອົງການ, ເມືອງ ແລະ ບ້ານໃຫ້ທົ່ວເຖິງ ແລະ ແຂງແຮງກວ່າເກົ່າ.

10.2 **ດ້ານບຸກຄະລະກອນ:**

- ດຳເນີນການສ້າງແຜນກຳນົດພະນັກງານ ໃຫ້ສຳເລັດ;
- ປະຕິບັດນະໂຍບາຍຄວາມສະເໝີພາບ ຍິງ-ຊາຍ ສູ້ຊົນເຮັດໃຫ້ອັດຕາສ່ວນເພດຍິງໃນລະດັບຜູ້ບໍລິຫານກວມເອົາ ຫລາຍກວ່າ 30%;
- ປະຕິບັດນະໂຍບາຍເງິນເດືອນ-ເງິນອຸດໜູນ ໃຫ້ພະນັກງານຢູ່ຂັ້ນຮາກຖານບ້ານ (15 ໜ່ວຍງານຂອງບ້ານ) ໃຫ້ສາມາດເຄື່ອນໄຫວວຽກງານໄດ້ປົກກະຕິ ໃນປີ 2018 ສູ້ຊົນໃຫ້ໄດ້ ........%;
- ເອົາໃຈໃສ່ວຽກງານກວດກາ, ເພີ່ມທະວີການຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫຼວງ ແລະ ພະຍາດອາດຍາສິດ.

10.3 **ດ້ານເທດສະບານ:**

- ສືບຕໍ່ວາງແຜນຜັງ ແລະ ພັດທະນາ ເທດສະບານ 3 ເມືອງໃໝ່ຄື: ເຂດດົງໝາກຄາຍ ເມືອງ ໄຊທານີ, ບ້ານ ໄຮ່-ບ້ານ ພ້າວ ເມືອງ ປາກງື່ມ, ບ້ານ ເພຍລາດ ເມືອງສັງທອງ; ສ້າງບ້ານ ໃຫຍ່ນາຈະເລີນ ໃຫ້ເປັນຕົວເມືອງນ້ອຍ.

10.4 **ດ້ານນິຕິກຳ:**

- ຊຸກຍູ້ບັນດາຂະແໜງການຕ່າງໆ ໃຫ້ຈັດຕັ້ງປະຕິບັດ ກົດໝາຍ ຢ່າງເຂັ້ມງວດ ແລະ ສັກສິດ ເປັນຕົ້ນກົດໝາຍສ່ວຍສາອາກອນ, ກົດໝາຍພາສີ, ກົດໝາຍຜັງເມືອງ, ກົດໝາຍທີ່ດິນ, ກົດໝາຍສິ່ງແວດລ້ອມ, ກົດໝາຍ ປ່າສະຫງວນ, ກົດໝາຍທາງຫລວງ ແລະ ອື່ນໆ.
- ຄົ້ນຄວ້າສ້າງນິຕິກຳ ຂອງນະຄອນຫລວງວຽງຈັນ ເພື່ອນຳສະເໜີ ສະພາປະຊາຊົນ ຮັບຮອງ ໃຫ້ໄດ້ 12 ສະບັບ;
- ສືບຕໍ່ຄົ້ນຄວ້າສ້າງ, ປັບປຸງ ແລະ ອອກນິຕິກຳ ອີກຈຳນວນໜຶ່ງ ເພື່ອສະເໜີຫາລັດຖະບານ ພິຈາລະນາ; ຈັດສຳມະນາລະດົມຄຳຄິດເຫັນໃສ່ຮ່າງນິຕິກຳຕ່າງໆ ກອງທຶນທາງປະຊາຊົນ, ຮ່າງກົດຫມາຍ ວ່າດ້ວຍນະຄອນຫລວງ; ຮ່າງກົດຫມາຍວ່າດ້ວຍອາກອນເທດສະບານ ແລະ ອື່ນໆ.
- ຄົ້ນຄວ້າຫັນຄຳສັ່ງ ນາຍົກລັດຖະມົນຕີ ວ່າດ້ວຍ ການບໍລິການປະຕູດຽວຂອງ ສຳນັກງານປົກຄອງນະຄອນຫຼວງວຽງຈັນ (ທັງໝົດອົງການທີ່ປະຈຳຢູ່ຕຶກ).

**ມາດຕາ 11: ຄາດໝາຍສູ້ຊົນຕົ້ນຕໍດ້ານການພົວພັນຮ່ວມມືກັບຕ່າງປະເທດມີດັ່ງນີ້:**

11.1 ຊຸກຍູ້ ແລະ ຈັດຕັ້ງປະຕິບັດໂຄງການຮ່ວມມືດ້ານຕ່າງໆ ກັບບັນດານະຄອນຫລວງ, ປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນທີ່ໄດ້ຕົກລົງກັນແລ້ວ ໃຫ້ເປັນຕົວເປັນໂຕຂຶ້ນ.

11.2 ສືບຕໍ່ຮ່ວມມືກັບ ນະຄອນຮ່າໂນ້ຍ ແລະ ນະຄອນໂຮ່ຈີມິນ ໃນໂຄງການລ້ຽງງົວພັນຊີ້ນ ແລະ ແລກປ່ຽນດ້ານການທ່ອງທ່ຽວ; ສືບຕໍ່ໂຄງການທັນເປັນ ICT ພະແນກ ການເງິນ ນະຄອນຫຼວງວຽງຈັນ.

11.3 ຮ່ວມມືດ້ານການທ່ອງທ່ຽວກັບ ແຂວງ ກວາງໂຈ ສປ ຈີນ ໃຫ້ມີຄວາມຄືບໜ້າ.

11.4 ສະຫຼຸບ 10 ປີການຮ່ວມມືລະຫວ່າງສອງລັດຖະບານ ສປ ຈີນ ໃນໂຄງການ ສ້າງສະໜາມກິລາ ຊີເກມ ແລະ ເຂດພັດທະນາກວມລວມໄຊເສດຖາ.

11.5 ຮ່ວມມືກັບນະຄອນບູດາແປັດ ປະເທດ ຮົງກາລີ ໃນໂຄງການບຳບັດນ້ຳເປື້ອນ ຢູ່ນະຄອນຫລວງວຽງຈັນ ມູນຄ່າ 100 ລ້ານໂດລາສະຫະລັດ.

## ໝວດທີ 3
## ແຜນລາຍຮັບ-ລາຍຈ່າຍງົບປະມານ ປີ 2018

**ມາດຕາ 12:** ແຜນລາຍຮັບງົບປະມານ:

**ສູ້ຊຸກເກັບລາຍຮັບເຂົ້າງົບປະມານລວມທັງໝົດໃຫ້ໄດ້ 4.540.212,10 ລ້ານກີບ ໃນນັ້ນ:**

+ **ພູດຂອງທ້ອງຖິ່ນ: 1.212.246,10 ລ້ານກີບ; ໃນນີ້:**
  - ສ່ວຍສາອາກອນ 1.146.613,00 ລ້ານກີບ.
  - ຄຸ້ມຄອງຊັບສິນ 65.000,00 ລ້ານກີບ.
  - ຄຸ້ມຄອງລັດວິສາຫະກິດລັດລົງທຶນ ແລະ ປະກັນໄພ 633,10 ລ້ານກີບ.
+ **ພູດສູນກາງ: 3.327.966,00 ລ້ານກີບ; ໃນນີ້:**
  - ດ່ານສາກົນ 3.308.163,00 ລ້ານກີບ.
  - ກອງກວດກາ 11.000,00 ລ້ານກີບ.
  - ດ່ານທ້ອງຖິ່ນ 6.661,00 ລ້ານກີບ.
  - ດ່ານປະເພນີ 2.142,00 ລ້ານກີບ.

**ມາດຕາ 13:** ແຜນລາຍຈ່າຍງົບປະມານ

**ປະຕິບັດລາຍຈ່າຍລວມບໍ່ໃຫ້ເກີນ 637.975,29 ລ້ານກີບ; ໃນນັ້ນ:**

- ເງິນເດືອນ ແລະ ເງິນອຸດໜູນ 389.493,00 ລ້ານກີບ.
- ເງິນນະໂຍບາຍ ແລະ ຊ່ວຍໜູນຕ່າງໆ 33.314,00 ລ້ານກີບ.
- ເງິນບໍລິຫານຂອງລັດ 75.758,00 ລ້ານກີບ.
- ເງິນດັດສົມ ແລະ ສົ່ງເສີມ 18.947,00 ລ້ານກີບ.
- ເງິນແຮ ແລະ ບັງເອີນອື່ນໆ 1.800,00 ລ້ານກີບ.
- ເງິນຊື້ໃໝ່ 0 ລ້ານກີບ.
- ລາຍຈ່າຍລົງທຶນ 118.663,29 ລ້ານກີບ; ໃນນີ້: ທຶນຈັດຮັບ-ຈັດຈ່າຍ (ທັນຊັບສິນເປັນທຶນ) 18.774,30 ລ້ານກີບ ແລະ ລາຍຈ່າຍລົງທຶນພາຍໃນ ຈຳນວນ 99.888,99 ລ້ານກີບ; ສະເພາະລາຍຈ່າຍລົງທຶນພາຍໃນ ປະກອບມີ:
  + ລາຍຈ່າຍລົງທຶນໂຄງການ (ບ້ວງປົກກະຕິ) ຈຳນວນ 95.488,99 ລ້ານກີບ; ໃນນີ້:
    ➢ ລາຍຈ່າຍລົງທຶນໂຄງການ ທີ່ມີມູນຄ່າຕ່ຳກວ່າ 20 ຕື້ກີບ ຈຳນວນ 69.841,62 ລ້ານກີບ

➢ ລາຍຈ່າຍລົງທຶນໂຄງການທີ່ມີມູນຄ່າສູງກວ່າ 20 ຕື້ກີບ (ແມ່ນບັນດາໂຄງການລົງທຶນຂອງລັດ ຂອງ ນະຄອນຫລວງວຽງຈັນ ທີ່ລັດຖະບານເປັນຜູ້ອະນຸມັດ ແລະ ສະພາແຫ່ງຊາດຮັບຮອງ, ສ່ວນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແມ່ນ ນະຄອນຫລວງວຽງຈັນ) ຈໍານວນ 25.647,37 ລ້ານກີບ.

+ ລາຍຈ່າຍລົງທຶນໂຄງການ (ບ້ວງທຶນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຈໍານວນ 4.400 ລ້ານກີບ; ໃນນີ້:

➢ ລາຍຈ່າຍລົງທຶນໂຄງການ ທີ່ມີມູນຄ່າຕໍ່າກວ່າ 20 ຕື້ກີບ ຈໍານວນ 1.100 ລ້ານກີບ.

➢ ລາຍຈ່າຍລົງທຶນໂຄງການທີ່ມີມູນຄ່າສູງກວ່າ 20 ຕື້ກີບ (ແມ່ນບັນດາໂຄງການລົງທຶນຂອງລັດ ຂອງ ນະຄອນຫລວງວຽງຈັນ ທີ່ລັດຖະບານເປັນຜູ້ອະນຸມັດ ແລະ ສະພາແຫ່ງຊາດຮັບຮອງ, ສ່ວນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແມ່ນ ນະຄອນຫລວງວຽງຈັນ) ຈໍານວນ 3.300 ລ້ານກີບ.

**ມາດຕາ 14: ການດຸ່ນດ່ຽງງົບປະມານ ປີ 2018**

- ແຜນລາຍຮັບລວມ: 1.212.246,10 ລ້ານກີບ.
- ແຜນລາຍຈ່າຍລວມ: 637.975,29 ລ້ານກີບ.
- ເກີນດຸ່ນຕາມແຜນລວມ 574.270,81 ລ້ານກີບ.

ໃນນັ້ນ: ນະຄອນຫຼວງວຽງຈັນ ດຸ່ນດ່ຽງໃຫ້ສູນກາງ 574.270,81 ລ້ານກີບ (ນອກຈາກນັ້ນ, ແມ່ນລາຍຮັບພາສີ ທີ່ສູນກາງຈັດເກັບ ແລະ ໂອນເຂົ້າເປັນລາຍຮັບຂອງສູນກາງເລີຍ).

**ມາດຕາ 15: ການຈັດເກັບອາກອນແຕ່ລະຂັ້ນອາກອນ ປະຈໍາ ນວ:**

15.1 ມອບໃຫ້ອາກອນຂັ້ນສູນກາງ ຈັດເກັບຢູ່ຂອບເຂດ ນວ 437 ຫົວໜ່ວຍ, ລາຍຮັບ 4.539,69 ຕື້ກີບ.

15.2 ມອບໃຫ້ອາກອນປະຈໍາ ນວ ຈັດເກັບ 12.291 ຫົວໜ່ວຍ, ລາຍຮັບ 691,99 ຕື້ກີບ.

15.3 ມອບໃຫ້ອາກອນປະຈໍາເມືອງ ຈັດເກັບ 17.373 ຫົວໜ່ວຍ, ລາຍຮັບ 262,79 ຕື້ກີບ.

15.4 ມອບໃຫ້ອາກອນຂັ້ນບ້ານ ຈັດເກັບ 13.067 ຫົວໜ່ວຍ, ລາຍຮັບ 6,78 ຕື້ກີບ.

## ໝວດທີ 4
## ການສົ່ງເສີມຜະລິດເປັນສິນຄ້າ ແລະ ການສົ່ງເສີມການລົງທຶນ

**ມາດຕາ 16: ການຜະລິດສິນຄ້າ ແລະ ການບໍລິການ**

ໂຄງການສົ່ງເສີມ ແລະ ດຶງດູດການລົງທຶນ ເຂົ້າໃສ່ໂຄງການຜະລິດສິນຄ້າປາຍແຫຼມ ທີ່ອົງການປົກຄອງມີສ່ວນຮັບຜິດຊອບ ແມ່ນໂຄງການໃໝ່ ທີ່ເຫັນວ່າໂຄງການນັ້ນມີຄຸນລັກສະນະຖືກຕາມທິດທີ່ຍືນຍົງ ທີ່ມີຕະຫຼາດຊັດເຈນ, ມີແຫຼ່ງວັດຖຸດິບພາຍໃນ ແລະ ໃກ້ຄຽງກັບນະຄອນຫຼວງວຽງຈັນ ໂຄງການທີ່ມີມູນຄ່າແຕ່ 10 ລ້ານໂດລາສະຫະລັດຂຶ້ນໄປ, ສາມາດແຂ່ງຂັນໄດ້ກັບສິນຄ້າປະເພດດຽວກັນຢູ່ພາຍໃນ ແລະ ຕ່າງປະເທດ ແລະ ໂຄງການນັ້ນບໍ່ກະທົບແຮງ ຕໍ່ສິ່ງແວດລ້ອມ; ໃນນັ້ນລວມມີ:

1) ໂຄງການ ຜະລິດຊີ້ນງົວຍີ່ຫໍ້ວຽງຈັນ
2) ໂຄງການ ຜະລິດເຂົ້າເປັນສິນຄ້າ

3) ໂຄງການ ຜະລິດຫົວອາຫານສັດ
4) ໂຄງການ ຜະລິດເຄື່ອງເຮືອນໃໝ່ (ເຄື່ອງເຟີນີເຈີ້)
5) ໂຄງການ ຊຸກຍູ້ປູກໝາກພ້າວເປັນສິນຄ້າ
6) ໂຄງການ ສ້າງເຂດການບໍລິການ ແລະ ຈຳໜ່າຍສິນຄ້າ ໃນເຂດນິຄົມອຸດສາຫະກຳນະຄອນຫຼວງ (ເປັນການຮຽກການລົງທຶນ)
7) ໂຄງການສະບຽງອາຫານລາວ ແລະ ອາຫານວຽງຈັນ
8) ໂຄງການຜະລິດຝຸ່ນຊີວະພາບ.

**ມາດຕາ 17: ໂຄງການຮຽກການລົງທຶນ ແລະ ການສົ່ງເສີມການລົງທຶນຂອງເອກະຊົນພາຍໃນ ຕ່າງປະເທດ:**

17.1 ເພື່ອສົ່ງເສີມການລົງທຶນຂອງພາກເອກະຊົນ ພາຍໃນ ແລະ ຕ່າງປະເທດ ປີ 2018 ໃຫ້ບັນລຸຄາດໝາຍ 11.200 ຕື້ກີບ, ເທົ່າກັບ 1.365 ລ້ານໂດລາ. ສະນັ້ນ, ໃຫ້ຕັ້ງໜ້າປຸກລະດົມຂົນຂວາຍທຸກພາກສ່ວນ FDI ລົງທຶນເຂົ້າໃສ່ການຜະລິດ, ທຸລະກິດບໍລິການທີ່ກົດໝາຍບໍ່ຫ້າມ ແລະ ສອດຄ່ອງກັບກົດໝາຍການລົງທຶນ ແລະ ກົດໝາຍກ່ຽວຂ້ອງອື່ນໆ. ລວມທັງການຕ້ອງເອົາໃຈໃສ່ປະຕິບັດມາດຕະການສຳຄັນ ຄື: ເອົາໃຈໃສ່ໂຄສະນາບັນຊີ ໂຄງການຮຽກການລົງທຶນຂອງຂະແໜງການຕົນ, ໃຫ້ຂໍ້ມູນຫົວໜ່ວຍທຸລະກິດ, ສືບຕໍ່ປັບປຸງການປະຕິບັດກົນໄກ ບໍລິການປະຕູດຽວ ໃນການພິຈາລະນາການລົງທຶນ ການແກ້ໄຂບັນດາຂັ້ນຕອນ, ຂອດຂັ້ນ ເພື່ອອຳນວຍຄວາມສະດວກໃນການສ້າງ ແລະ ດຳເນີນທຸລະກິດເປັນຕົ້ນການຂຶ້ນທະບຽນວິສາຫະກິດ, ການຂໍນຳໃຊ້ກາປະທັບ, ການຂຶ້ນທະບຽນອາກອນ, ການຂໍອະນຸຍາດດຳເນີນທຸລະກິດ, ການຂໍປຸກສ້າງ, ການເຊົ່າທີ່ດິນລັດ ແລະ ອື່ນໆ ໃຫ້ມີຄວາມສະດວກວ່ອງໄວ.

17.2 <u>ບາງບັນຊີຮຽກການລົງທຶນ ຈັດຕາມຂະແໜງການ ດັ່ງນີ້:</u>

- <u>ຂະແໜງ ກະສິກຳ ແລະ ປ່າໄມ້:</u>

1) ໂຄງການ ສ້າງເຂດກະສິກຳສົ່ງອອກ
2) ໂຄງການ ພັດທະນາກະສິກຳອິນຊີ (ເຂົ້າ ແລະ ຜັກ)
3) ໂຄງການ ສົ່ງເສີມການຜະລິດກະສິກຳອິນຊີ
4) ໂຄງການ ກໍ່ສ້າງຊົນລະປະທານຫ້ວຍກອກ
5) ໂຄງການ ພັດທະນາ ບຶງໜອງທອງ ແລະ ຫົວທ່າ ເປັນແຫຼ່ງປູກຕົ້ນໄມ້ໃຫ້ໝາກ, ປູກພືດຜັກປອດສານພິດ ແລະ ການບໍລິການທ່ຽວທຳມະຊາດ
6) ໂຄງການ ລ້ຽງງົວພັນ
7) ໂຄງການ ສົ່ງເສີມການຜະລິດກະສິກຳປອດສານພິດ
8) ໂຄງການ ປູກໝາກສາລີ ແລະ ພືດອຸດສະຫະກຳ
9) ໂຄງການ ເພາະພັນ ແລະ ຜະລິດລູກໝູ
10) ໂຄງການ ລ້ຽງປາ
11) ໂຄງການຝຸ່ນຊີວະພາບ.
12) ໂຄງການປູກມອນລ້ຽງມ້ອນຊີວະພາບ( 2 ມືນາງ)

- **ຂະແໜງອຸດສາຫະກຳ ແລະ ການຄ້າ:**

1) ໂຄງການ ສ້າງຕະຫຼາດຈຳໜ່າຍວັດສະດຸກໍ່ສ້າງ ຢູ່ນະຄອນຫຼວງວຽງຈັນ
2) ໂຄງການ ສ້າງຕະຫຼາດ ບ້ານ ໜອງບົວທອງ ເມືອງ ປາກງື່ມ
3) ໂຄງການ ສ້າງສູນການຄ້າ ບ້ານ ສົມສະຫວາດ ເມືອງ ປາກງື່ມ

- **ຂະແໜງ ຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ:**

1) ໂຄງການ ພັດທະນາແຫຼ່ງທ່ອງທ່ຽວທາງວັດທະນະທຳ ຕິດພັນກັບໂຄງການປະຕິສັງຂອນວັດຖິ່ນສ້ອຍ
2) ໂຄງການ ພັດທະນາແຫຼ່ງທ່ອງທ່ຽວທຳມະຊາດນ້ຳຕົກຕາດ ຕະເກີຍ
3) ໂຄງການ ສ້າງ ແລະ ປະຕິສັງຂອນສະຖານ ທີ່ທ່ອງທ່ຽວ (ວັດຈອມສີ)
4) ໂຄງການ ພັດທະນາແຫຼ່ງທ່ອງທ່ຽວຕາມສາຍນ້ຳງື່ມ
5) ໂຄງການ ພັດທະນາແຫຼ່ງທ່ອງທ່ຽວໜອງເຊືອມ
6) ໂຄງການ ພັດທະນາແຫຼ່ງທ່ອງທ່ຽວປະຫວັດສາດ ເມືອງ ເກົ້າຊາຍຟອງ
7) ໂຄງການ ພັດທະນາບຶງໜອງດ້ວງເປັນແຫຼ່ງທ່ອງທ່ຽວທຳມະຊາດ
8) ໂຄງການ ພັດທະນາແຫຼ່ງທ່ອງທ່ຽວ ໜອງນາແຊງ
9) ໂຄງການ ພັດທະນາສະຖານທີ່ທ່ອງທ່ຽວ ທຳມະຊາດ ວັດພະບາດໂພນຄ້ອງ
10) ໂຄງການ ສະຖານທີ່ທ່ອງທ່ຽວປະຫວັດ ສາດທຳມະຊາດໜອງຂະໜຽງ
11) ໂຄງການ ສຳຫຼວດແລະຈັດສັນແຫຼ່ງ ທ່ອງທ່ຽວທຳມະຊາດນ້ຳຕົກຕາດ ພັກສະເດັດ ສຸພານຸວົງ
12) ໂຄງການ ສຳຫຼວດແລະຈັດສັນແຫຼ່ງ ທ່ອງທ່ຽວທຳມະຊາດ ສາຍນ້ຳສັງ
13) ໂຄງການ ສຳຫຼວດແລະຈັດສັນແຫຼ່ງ ທ່ອງທ່ຽວທຳມະຊາດເຂື່ອນຫ້ວຍແຕນ
14) ໂຄງການ ສຳຫຼວດແລະຈັດສັນແຫຼ່ງ ທ່ອງທ່ຽວທຳມະຊາດ ດອນເຈົ້າ

- **ຂະແໜງການ ໂຍທາທິການ ແລະ ຂົນສົ່ງ:**

1) ສືບຕໍ່ປະສານງານ ແລະ ຊຸກຍູ້ໂຄງການ ກໍ່ສ້າງທາງຄູ່ຂະໜານ (ໂຄງການ ກໍ່ສ້າງທາງດ່ວນ ໄລຍະທີ 1 ແຕ່ສູນການຄ້າລາວໄອເຕັກ-ເສັ້ນທາງຫົວຂົວ-ໜອງໜ່ຽງ ບໍລິເວນເມືອງດອກຈຳປາ-ຖະໜົນ 450 ປີ-ເຊື່ອມຕໍ່ເສັ້ນທາງເລກທີ 13 ໃຕ້-ເຊື່ອມຕໍ່ສະຖານີລົດໄຟ-ເຊື່ອມຕໍ່ບ້ານ ດົງໝາກຄາຍ) ໃຫ້ໄດ້ຈັດຕັ້ງປະຕິບັດ.
2) ໂຄງການ ກໍ່ສ້າງທາງ ດອນໜູນ-ຫ້ວຍເຕີຍ-ນາຄູນນ້ອຍ-ນ້ຳກ້ຽງ-ອີໄລ
3) ໂຄງການ ກໍ່ສ້າງທາງ ວຽງຈະເລີນ-ໜອງໜ່ຽງ-ພະຂາວ-ນາແຄ
4) ໂຄງການ ກໍ່ສ້າງຂົວຂ້າມນ້ຳງື່ມ ທີ່ບ້ານທ່າດອກຄຳ-ບ້ານດວງບຸດດີ
5) ໂຄງການ ຂົນສົ່ງມວນຊົນໃນຕົວເມືອງດ້ວຍລົດເມດ່ວນທີ່ມີຄວາມທັນສະໄໝ (BRT)
6) ໂຄງການ ສຳຫຼວດ-ອອກແບບສະໜາມ ບິນວຽງຈັນ 2
7) ໂຄງການ ສ້າງລານຈອດລົດໃນຕົວເມືອງ(Parking) ສ່ວນບຸກຄົນ
8) ໂຄງການ ປັບປຸງທ່າເຮືອຫຼັກສີ່ໃຫ້ເປັນສູນກາງແຈກຢາຍສິນຄ້າໜັກ (ຫີນ-ຊາຍ) ລະຫວ່າງທາງບົກ ແລະ ທາງນ້ຳ
9) ໂຄງການ ສ້າງຈຸດພັກລົດເດີນທາງໄກ ບ້ານສີມສະຫວາດ
10) ໂຄງການ ສ້າງຈຸດພັກລົດເດີນທາງໄກ ບ້ານນາຊອນ
11) ໂຄງການ ສຳຫຼວດອອກແບບເທດສະບານ ເມືອງ ປາກງື່ມ
12) ໂຄງການ ພັດທະນາເຂດບໍລິການສວນສາທາລະນະແຄມຂອງ
13) ໂຄງການ ກໍ່ສ້າງສະໜາມກິລາ ເມືອງ ຫາດຊາຍຟອງ
14) ໂຄງການ ກໍ່ສ້າງສວນສາທາລະນະ ໜອງທອງ

- **ຂະແໜງ ສາທາລະນະສຸກ:**

1) ໂຄງການ ໂຮງໝໍເອກະຊົນທີ່ທັນສະໄໝ(ເວດສະພົງ, ໄທ).
2) ໂຄງການປູກ ແລະ ຜະລິດຢາພື້ນເມືອງເຂດຮ້ອນ.

**ມາດຕາ 18: ການສົ່ງເສີມເສດຖະກິດວິສາຫະກິດຂະໜາດນ້ອຍ ແລະ ຈຸລະວິສາຫະກິດ (SMME):**

- ເຮັດໃຫ້ຫົວໜ່ວຍ SMME ຂອງ ນວ ຈຳນວນ 42.000 ກວ່າຫົວໜ່ວຍ ຄົງຕົວ ແລະ ພັດທະນາຕົນເອງ.
- ຈັດແບ່ງປະເພດ SMME ອອກເປັນຂົງເຂດຂະແໜງການ (ອຸດສາຫະກຳ, ຫັດຖະກຳ, ການຄ້າ, ການທ່ອງທ່ຽວ, ການກໍ່ສ້າງ....).
- ແຕ່ລະຂະແໜງການ ມີໜ້າທີ່ກຳສະຖິຕິ, ຄົ້ນຄ້ວານຳສະເໜີ, ຍົ້ງຢືນມາດຖານ ແລະ ໃຫ້ການສະໜັບສະໜູນຊ່ວຍເຫລືອບັນດາປະເພດຫົວໜ່ວຍທີ່ສັງກັດຂະແໜງການຂອງຕົນຢ່າງຄົບຖ້ວນ.

## ໝວດທີ 5
## ການມອບວຽກ ແລະ ຄວາມຮັບຜິດຊອບໃຫ້ພະແນກການ-ອົງການຂັ້ນນະຄອນຫລວງ ແລະ ບັນດາເມືອງ

**ມາດຕາ 19: ມອບໃຫ້ພະແນກແຜນການ ແລະ ການລົງທຶນ ປະຕິບັດ ດັ່ງນີ້:**

19.1 ເຜີຍແຜ່ ແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2018 ໃຫ້ພາກລັດ ແລະ ພາກເອກະຊົນ ລວມທັງປະຊາຊົນ ທົ່ວ ນວ; ເປັນໃຈກາງ ປະສານສົມທົບກັບ ບັນດາພະແນກການ-ອົງການທຽບເທົ່າ ແລະ ເມືອງ ເພື່ອດຳເນີນການຄຸ້ມຄອງ, ຕິດຕາມ, ກວດກາ, ຕີລາຄາ ແລະ ປະເມີນຜົນ ຄວາມຄືບໜ້າການປະຕິບັດບັນດາໜ້າທີ່ ແລະ ວຽກງານຈຸດສຸມ ແຕ່ລະໄລຍະ.

19.2 ແຈ້ງຕົວເລກແຜນການ ແລະ ໂຄງການລົງທຶນຂອງລັດ ລະອຽດ ທີ່ໄດ້ຜ່ານການຮັບຮອງຈາກສະພາແຫ່ງຊາດ ແລະ ສະພາປະຊາຊົນ ນະຄອນຫລວງວຽງຈັນ ໃຫ້ພະແນກການ, ອົງການທຽບເທົ່າ ແລະ ເມືອງຕ່າງໆ ພ້ອມທັງເຜີຍແຜ່ແນະນຳການຈັດຕັ້ງປະຕິບັດ; ພ້ອມກັນນັ້ນ, ກໍຄຸ້ມຄອງຕິດຕາມການປະຕິບັດບັນດາໂຄງການດັ່ງກ່າວ.

19.3 ຕິດຕາມກວດກາປະເມີນຜົນ ໄລຍະການຈັດຕັ້ງປະຕິບັດໂຄງການ ແລະ ພາຍຫຼັງໂຄງການສຳເລັດ.

19.4 ສົມທົບກັບພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕິດຕາມສະພາບເສດຖະກິດ ພາຍໃນນະຄອນຫລວງວຽງຈັນ ແລະ ໃນທົ່ວປະເທດ. ພ້ອມກັນນັ້ນ, ກໍຕິດຕາມສະພາບພົ້ນເດັ່ນຕ່າງໆ ທີ່ເກີດຂຶ້ນຢູ່ພາກພື້ນ ແລະ ສາກົນ ທີ່ອາດມີຜົນກະທົບຕໍ່ເສດຖະກິດຂອງ ນວ ແລະ ຄົ້ນຄວ້າວິທີແກ້ໄຂບັນຫາທີ່ເກີດຂຶ້ນ ເພື່ອລາຍງານ ແລະ ສະເໜີຕໍ່ອົງການປົກຄອງ ອອກມາດຕະການແກ້ໄຂຢ່າງທັນການ.

19.5 ເປັນໃຈກາງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນແມ່ບົດກ່ຽວກັບການຊຸກຍູ້ການຮ່ວມມືກໍ່ສ້າງ "ໜຶ່ງແລວທາງ ໜຶ່ງເສັ້ນທາງ" ລະຫວ່າງ ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາຊົນຈີນ ຢູ່ ນະຄອນຫລວງວຽງຈັນ.

19.6 ສືບຕໍ່ປັບປຸງກົນໄກ ການບໍລິການການລົງທຶນແບບປະຕູດຽວ ໃຫ້ມີຄວາມເປັນເອກະພາບ; ໂຄສະນາດຶງດູດການລົງທຶນ ຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ກວ້າງຂວາງ; ເອົາໃຈໃສ່ລົງຕິດຕາມ ແລະ ຊຸກຍູ້ບັນດາໂຄງການລົງທຶນທີ່ໄດ້ອະນຸມັດໄປແລ້ວ ໃຫ້ມີຄວາມຄືບໜ້າຕາມແຜນການ.

19.7 ກວດກາຈັດສັນການຊຳລະໜີ້ໂຄງການລົງທຶນພັດທະນາຂອງ ນະຄອນຫຼວງວຽງຈັນ ແລະ ສ້າງໂຄງການຊຳລະໜີ້.

19.8 ສືບຕໍ່ປະຕິບັດວຽກງານ ການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ (ເຂັ້ມແຂງດ້ານແຜນການ) ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ.

19.9 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງມາດຕາ 5, ມາດຕາ 6 (ຂໍ້ 6.1, 6.3 ແລະ 6.4), ມາດຕາ 13 ແລະ ມາດຕາ 17 ຂອງຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

19.10 ຕັ້ງໜ້າປະຕິບັດສ້າງພະແນກ 5 ດີກໍຄື: ເປັນຫົວໜ່ວຍຄຸ້ມຄອງ-ບໍລິການຮັບໃຊ້ປະຊາຊົນດີ, ປະຕິບັດລາຍຮັບວິຊາການດີ, ລົງຮາກຖານດີ, ມີຖັນແຖວລັດຖະກອນດີ ແລະ ເປັນຫົວໜ່ວຍປະຢັດດີ.

19.11 ຄົ້ນຄວ້າພິຈາລະນາແກ້ໄຂ ຂໍ້ແນະນຳຂອງ ອົງການກວດສອບ ປະຈຳພາກກາງ ປະຈຳປີ 2017 ໃຫ້ຄົບຖ້ວນ.

19.12 ປະຕິບັດລາຍຮັບວິຊາການ 10 ລ້ານກີບ.

**ມາດຕາ 20: ມອບໃຫ້ຂະແໜງ ການເງິນ ປະຕິບັດ ດັ່ງນີ້:**

20.1 ເອົາໃຈໃສ່ສຶກສາອົບຮົມການເມືອງ ແນວຄິດໃຫ້ພະນັກງານລັດຖະກອນ ທົ່ວຂະແໜງການເງິນ ຢ່າງເລິກເຊິ່ງ ແລະ ແທດເຖິງກວ່າເກົ່າ, ຍົກສູງຄວາມຮູ້-ຄວາມສາມາດ, ສະຕິຕື່ນຕົວຕໍ່ການປະຕິບັດວິໄນການເງິນ, ປະຕິບັດ ຕາມຄຳແນະນຳສະບັບເລກທີ 4040/ກງ, ລົງວັນທີ 21 ພະຈິກ 2017 ກ່ຽວກັບການຄຸ້ມຄອງວຽກງານ ພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ.

20.2 ເຜີຍແຜ່ແຜນງົບປະມານ ປະຈຳປີ 2018 ແລະ ອອກບົດແນະນຳ ວ່າດ້ວຍ ການຈັດຕັ້ງປະຕິບັດແຜນງົບປະມານ ປະຈຳປີ 2018 ເປັນອັນລະອຽດ.

20.3 ສືບຕໍ່ຈັດຕັ້ງປະຕິບັດຄຳສັ່ງ ເລກທີ 40/ນຍ, ລົງວັນທີ 19 ກັນຍາ 2016 ວ່າດ້ວຍ ການເກັບກຳ ແລະ ສຳຫລວດຖານລາຍຮັບງົບປະມານຄືນໃໝ່ ໃຫ້ສຳເລັດ, ເພີ່ມທະວີວຽກງານຕິດຕາມກວດກາການເກັບລາຍຮັບຂອງພາສີ, ອາກອນ, ທີ່ດິນ, ຄ່າທຳນຽມ, ຄ່າບໍລິການວິຊາການ, ຄ່າເຊົ່າ-ສຳປະທານ, ຄ່າຊັບພະຍາກອນທຳມະຊາດ, ບັນດາຫົວໜ່ວຍລັດວິສາຫະກິດ ແລະ ລາຍຮັບອື່ນໆ ໃຫ້ຄົບຖ້ວນ, ສະກັດກັ້ນການລັກລອບ, ຫລົບຫລີກພາສີ-ອາກອນ ແລະ ການຄ້າຂາຍເຖື່ອນ.

20.4 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງໝວດທີ II ມາດຕາ 11 (ຂໍ້ 11.2) ແລະ ໝວດທີ III ມາດຕາ 12, 13, 14, 15 ຂອງຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ, ເສີມຂະຫຍາຍໃນການໂຄສະນາເຜີຍແຜ່ ໃຫ້ພະນັກງານລັດຖະກອນ, ທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງຢ່າງທົ່ວເຖິງ.

20.5 ສືບຕໍ່ຂະຫຍາຍການນຳໃຊ້ລະບົບເຕັກໂນໂລຊີ ເຂົ້າໃນການຄຸ້ມຄອງຈັດເກັບລາຍຮັບ ແລະ ປະຕິບັດລາຍຈ່າຍຢູ່ຂັ້ນ ນະຄອນຫລວງ, ບັນດາດ່ານສາກົນ ດ້ວຍການນຳໃຊ້ລະບົບ ໂປຣແກຣມ (GFISf, Smart-Tax Easy-Tax...) ໃນປີ 2018 ໃຫ້ຂະຫຍາຍເອົາລົງໄປນຳຊ້ຢູ່ຂັ້ນເມືອງທີ່ມີເງື່ອນໄຂ ແລະ ສືບຕໍ່ຕິດຕັ້ງເຄື່ອງບັນທຶກການຂາຍ (POS) ໃຫ້ແກ່ຫົວໜ່ວຍທຸລະກິດ ທີ່ຂຶ້ນກັບການຄຸ້ມຄອງຂອງສ່ວຍສາອາກອນ ນະຄອນຫລວງ ແລະ ບັນດາເມືອງ ໃຫ້ໄດ້ 318 ເຄື່ອງ; ສືບຕໍ່ຫັນເອົາຖານຂໍ້ມູນລາຍຮັບ ເຂົ້າສູ່ການຄຸ້ມຄອງດ້ວຍເຄື່ອງມືທັນສະໄໝ ໃຫ້ນັບມື້ນັບຫລາຍຂຶ້ນ ແລະ ຫັນເອົາການຊຳລະພັນທະພາສີອາກອນ ແລະ ຄ່າທຳນຽມຕ່າງໆ ຜ່ານລະບົບທະນາຄານ.

20.6 ສືບຕໍ່ສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ສ້າງກົດໝາຍ ວ່າດ້ວຍ ອາກອນຕົວເມືອງ (TAX-THE CITY) ໃຫ້ສຳເລັດ.

20.7 ສັງລວມ, ເກັບກຳຂໍ້ມູນ ແລະ ຕິດຕາມບັນຊີຊັບສິນຂອງລັດ ໃຫ້ຄົບຖ້ວນ ພ້ອມກັນນີ້ ກໍ່ຕ້ອງໄດ້ ສັງລວມບັນຊີ ແລະ ເຕົ້າໂຮມຊັບສິນຕ່າງໆ ທີ່ສານຕັດສິນຮິບເປັນຂອງລັດ ໃຫ້ຄົບຖ້ວນຕາມຄຳສັ່ງ ສະບັບເລກທີ 07/ນຍ, ລົງວັນທີ 5 ເມສາ 2017.

20.8 ເຂັ້ມງວດກັບການປະຕິບັດກົດໝາຍ ກ່ຽວກັບ ການປະຕິບັດລາຍຈ່າຍງົບປະມານ ຕ້ອງໄປຕາມແຜນ ຂອງສະພາໄດ້ຮອງຮັບເອົາ, ທັງຖືກຕ້ອງຕາມສາລະບານງົບປະມານ, ລະຫັດຄັງເງິນ ແລະ ຕ້ອງນຳໃຊ້ ລະບົບໂປຣແກຼມຂອງບັນຊີ GFIS. ປະຕິບັດການເຄື່ອນຍ້າຍເງິນພູດສູນກາງ ແລະ ດູນດ່ຽງໃຫ້ຄັງເງິນ ເມືອງ ຕາມແຜນທີ່ກຳນົດໃຫ້ທັນເວລາ. ສືບຕໍ່ພັດທະນາວຽກງານການບັນຊີຄັງເງິນຂັ້ນນະຄອນຫລວງ, ຄັງເງິນເມືອງ ໃຫ້ເປັນລະບົບຄົບຊຸດ, ສ້າງກົນໄກການປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ແລະ ປັບປຸງການບໍລິການດ້ວຍຄວາມວ່ອງໄວ, ຈັດຕັ້ງປະຕິບັດຄຳສັ່ງ ສະບັບເລກທີ 09/ນຍ, ວ່າດ້ວຍ ການ ປະຕິບັດ ລາຍຈ່າຍງົບປະມານຂອງລັດ ໃຫ້ເປັນຮູບປະທຳ ແລະ ໄດ້ຮັບຜົນດີ.

20.9 ສືບຕໍ່ສ້າງແຜນການຍົກລະດັບດ້ານວິຊາສະເພາະ, ວິຊາການກວດກາ ໃຫ້ສູງຂຶ້ນຕື່ມກ້າວໜຶ່ງ, ເພີ່ມ ຈຳນວນພະນັກງານກວດກາ ຕອບສະໜອງໃຫ້ໄດ້ທັນກັບສະພາບການ ໃນການກວດກາຕາມແຜນ, ກວດກາແບບກະທັນຫັນ ແລະ ກວດກາຕາມຄຳແນະນຳ, ຕາມການຕົກລົງຂອງຂັ້ນເທິງ. ຄົ້ນຄວ້າຈັດວາງ ພະນັກງານການເງິນ ລົງເລິກຮັບຜິດຊອບເປັນແຕ່ລະຂະແໜງການ ເພື່ອຮັບປະກັນການປະຕິບັດຕາມແຕ່ ລະເປົ້າໝາຍກວດກາ ເຊັ່ນ: ກວດກາການປະຕິບັດງົບປະມານ ຂອງບັນດາເມືອງອ້ອມຂ້າງ ນະຄອນ ຫລວງວຽງຈັນ, ບັນດາຂະແໜງການທີ່ນຳໃຊ້ງົບປະມານຂອງລັດ ເພື່ອເລັ່ງໃສ່ການກວດກາຊຸກຍູ້ການ ປະຕິບັດ ລະບຽບກົດໝາຍໃຫ້ຖືກຕ້ອງ, ຊຸກຍູ້ການມອບພັນທະເຂົ້າງົບປະມານ ໃຫ້ຖືກຕ້ອງຄົບຖ້ວນ, ທັນເວລາ ແລະ ຖືເປັນວຽກບູລິມະສິດອັນດັບໜຶ່ງ.

20.10 ລະດົມໃຫ້ປະຊາຊົນພົນລະເມືອງ, ຫົວໜ່ວຍວິສາຫະກິດ ຕາມສິດຄຸ້ມຄອງ ຂອງ ນະຄອນຫລວງ, ຂອງເມືອງ ແລະ ບ້ານ ເຂົ້າໃຈ, ໂລ່ງໃຈ ແລະ ເຫັນຄວາມຈຳເປັນ ຕໍ່ການປະຕິບັດພັນທະໃຫ້ລັດ;

20.11 ຊຸກຍູ້ການເກັບລາຍຮັບຈາກລາຍຮັບວິຊາການຈາກຂະແໜງການທ່ອງທ່ຽວ ແລະ ລາຍຮັບຈາກຂະແໜ ງ ການຕ່າງໆ; ຈັດເກັບລາຍຮັບຈາກການຈັດສັນທີ່ດິນ 8 ປະເພດ ໂດຍລົງເລິກປະເພດທີ່ດິນ ກະສິກຳ-ປ່າໄມ້, ຊົນລະ ປະທານ, ທີ່ດິນພື້ນຖານໂຄງລ່າງ...

20.12 ຄົ້ນຄ້ວານຳສະເໜີລາຍຮັບຈາກ ການເກັບອາກອນຕົວເມືອງ ແລະ ລາຍຮັບອື່ນໆ ທີ່ກົດໝາຍ ແລະ ນະໂຍບາຍ ເປີດທາງໃຫ້ໄດ້...

20.13 ຂະຫຍາຍລະບົບ ICT ໃນຂະແໜງການເງິນ.

20.14 ພັດທະນາ ແລະ ແກ້ໄຂບັນຫາດ້ານອະສັງຫາລິມະຊັບ; ການຫັນຊັບສິນເປັນທຶນ, ການເຊົ່າ ແລະ ສຳ ປະທານ ເຮັດໃຫ້ມີການເຄື່ອນໄຫວແຂງແຮງຂຶ້ນຕື່ມ, ທັງຖືກທິດຖືກທາງ, ມີປະສິດທິຜົນ ແລະ ປະຊາຊົນ ສ່ວນໃຫຍ່ໄດ້ຮັບຜົນປະໂຫຍດ.

20.15 ຄົ້ນພິຈາລະນາແກ້ໄຂ ຂໍ້ແນະນຳຂອງ ອົງການກວດສອບ ປະຈຳພາກກາງ ປະຈຳປີ 2017 ໃຫ້ຄົບ ຖ້ວນ.

**ມາດຕາ 21: ມອບໃຫ້ພະແນກ ກະສິກຳ ແລະ ປ່າໄມ້ ນະຄອນຫລວງວຽງຈັນ ປະຕິບັດ ດັ່ງນີ້:**

21.1 ສືບຕໍ່ສົມທົບກັບພະແນກ ອຸດສາຫະກຳ ແລະ ການຄ້າ ຈັດຕັ້ງປະຕິບັດ ໂຄງການ ສ້າງເຂດຕະຫຼາດກະສິກຳ ສົ່ງອອກ.

21.2 ເອົາໃຈໃສ່ປະຕິບັດໂຄງການສະບຽງອາຫານ ແລະ ຜະລິດເປັນສິນຄ້າ, ດຳເນີນການຜະລິດຕາມທິດເຮັດກະສິກຳສະອາດ ແລະ ຜະລິດແບບຍືນຍົງ ດ້ວຍການສົ່ງເສີມບຸກຄົນ ແລະ ຜູ້ປະກອບການ ຫຼື ກຸ່ມຜະລິດ.

21.3 ສືບຕໍ່ປະຕິບັດມາດຕະການທີ່ຕັ້ງໜ້າ ເພື່ອຮັບປະກັນການຜະລິດເຂົ້າ ແລະ ພືດເປັນສິນຄ້າ ໃຫ້ໄດ້ຕາມແຜນ ແລະ ບັນລຸຄາດໝາຍທີ່ໄດ້ກຳນົດໄວ້ ໃນ ມາດຕາ 4, ຂໍ້ 4.1 ຂອງຂໍ້ຕົກລົງສະບັບນີ້ ໃຫ້ສາມາດສົ່ງເຂົ້າໜຽວທີ່ມີຄຸນນະພາບ ໄປຂາຍຢູ່ ນະຄອນຫລວງ ຮ່າໂນ້ຍ ແລະ ນະຄອນຫລວງ ໂຮ່ຈີ່ມິນ ສສ ຫວຽດນາມ, ຮັບປະກັນການຜະລິດທັງລະດູຝົນ ແລະ ລະດູແລ້ງ ໃຫ້ໄດ້ຮັບຜົນດີ. ປັບປຸງ ແລະ ສ້າງຕັ້ງກຸ່ມການຜະລິດ ແລະ ສະຫະກອນໃຫ້ເຂັ້ມແຂງຂຶ້ນຕື່ມ, ອອກລະບຽບການ ແລະ ແຈ້ງການຕ່າງໆ ເພື່ອຊຸກຍູ້ການຜະລິດໃຫ້ທ່ວງທັນກັບລະດູການ.

21.4 ສູ້ຊົນປົດປ່ອຍແຮງງານຊາວນາໃຫ້ໄດ້ 10% ດ້ວຍການຊຸກຍູ້ສົ່ງເສີມໃຫ້ຊາວກະສິກອນ ຫັນມານຳໃຊ້ເຕັກນິກໃໝ່ ເຂົ້າໃນການຜະລິດ, ຫັນນາໄຮ່ນ້ອຍມາເປັນນາໄຮ່ໃຫຍ່ ແລະ ຫັນມາເປັນກຸ່ມການຜະລິດຂະໜາດກາງ ແລະ ຂະໜາດໃຫຍ່ ໃນຮູບແບບບໍລິສັດຄົບວົງຈອນຮ່ວມກັນ ລະຫວ່າງ ຊາວກະສິກອນ ແລະ ນັກລົງທຶນ.

21.5 ສືບຕໍ່ຊີ້ນຳ ແລະ ອຳນວຍໃຫ້ບັນດາສູນ ທີ່ຂຶ້ນກັບ ພະແນກ ກະສິກຳ ແລະ ປ່າໄມ້.ນວ ແລະ ປະສານສົມທົບກັບ ລັດວິສາຫະກິດ ທີ່ເປັນຕາໜ່າງຂອງ ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ ເພື່ອພັດທະນາເຕັກນິກ ແລະ ແນວພັນທີ່ດີ. ສົມທົບ ແລະ ນຳໃຊ້ທ່າແຮງຂອງຜູ້ປະກອບການ ເພື່ອສະໜອງແນວພັນເຂົ້າ, ແນວພັນສາລີ, ແນວພັນພືດອື່ນໆ, ແນວພັນສັດ, ແນວພັນປາ, ຢາປ້ອງກັນພະຍາດ, ຢາປິ່ນປົວສັດ, ຢາປາບສັດຕູພືດ ແລະ ຝຸ່ນ-ປຸ໋ຍ ໃຫ້ພຽງພໍ.

21.6 ປະເມີນຄືນລະບົບຊົນລະປະທານທີ່ມີແລ້ວ, ສ້ອມແປງ ແລະ ຟື້ນຟູ ເພື່ອຂະຫຍາຍລະບົບຊົນລະປະທານໃຫ້ມີຄວາມພ້ອມ ໃນການຜະລິດສະບຽງອາຫານ.

21.7 ສືບຕໍ່ສຸມທຶນຮອນເຂົ້າໃສ່ວຽກງານສົ່ງເສີມດ້ານວິຊາການ ເປັນຕົ້ນ ການຍົກລະດັບການຜະລິດ, ການເຝົ້າລະວັງ ແລະ ຄວບຄຸມພະຍາດສັດ, ການປ້ອງກັນສັດຕູພືດ ແລະ ການຫຼຸດຜ່ອນຄວາມສ່ຽງຕ່າງໆ.

21.8 ເປັນເຈົ້າການກຽມພ້ອມຕ້ານແລ້ງ-ຕ້ານຖ້ວມ ແລະ ຜົນກະທົບຈາກໄພທຳມະຊາດ. ສືບຕໍ່ປະຕິບັດວຽກຈັດສັນ, ພັດທະນາທີ່ດິນກະສິກຳ, ເຮັດກະເສດສຸມຄົບຊຸດ ແລະ ຮອບດ້ານ.

21.9 ຕັ້ງໜ້າຄຸ້ມຄອງ, ຈັດສັນປ່າຜະລິດ, ເອົາໃຈໃສ່ວຽກງານຟື້ນຟູ ແລະ ປູກໄມ້ ພ້ອມທັງດຳເນີນການພັດທະນາວຽກ ງານປ່າໄມ້ ຂັ້ນບ້ານ.

21.10 ຜັນຂະຫຍາຍຍຸດທະສາດປ່າໄມ້ແຫ່ງຊາດ ສຸມໃສ່ການສຳຫຼວດຈັດສັນ ແລະ ຮັບຮອງປ່າປ້ອງກັນ ແລະ ປ່າສະຫງວນແຫ່ງຊາດ ທີ່ນອນຢູ່ໃນຂອບເຂດຂອງ ນວ ແລະ ຟື້ນຟູປ່າໄມ້ໃຫ້ໄດ້ຕາມແຜນການ.

21.11 ສືບຕໍ່ສົມທົບກັບກະຊວງທີ່ກ່ຽວຂ້ອງ, ພະແນກການທີ່ກ່ຽວຂ້ອງ ຂັ້ນນະຄອນຫລວງວຽງຈັນ ແລະ ບັນດາຫ້ອງການທີ່ກ່ຽວຂ້ອງ ຂອງເມືອງ ນາຊາຍທອງ ເພື່ອຄຸ້ມຄອງປ່າສະຫງວນ ພູພະນັງ, ອ່າງນ້ຳທຸມ ແລະ ອ່າງນ້ຳຊວງ ໂດຍໃຫ້ກຳນົດເຂດສະຫງວນ ໃຫ້ຈະແຈ້ງ.

21.12 ສືບຕໍ່ຄົ້ນຄວ້າຈັດສັນເນື້ອທີ່ດິນ ເພື່ອການຜະລິດກະສິກຳແບບຍືນຍົງ ແລະ ທີ່ຢູ່ອາໄສໃນເຂດໃກ້ຄຽງກັບຊົນລະປະທານ; ປະຕິບັດໂຄງການຜະລິດສະບຽງອາຫານ.

21.13 ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ສ້າງລະບົບຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ ເພື່ອຮັບປະກັນການບໍລິຫານປ່າໄມ້ ທີ່ມີປະສິດທິພາບ ແລະ ຍືນຍົງ ແລະ ກົນໄກການຄຸ້ມຄອງການຫຼຸດຜ່ອນທາດອາຍພິດເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເຊື່ອມໂຊມ.

21.14 ສືບຕໍ່ຮ່ວມມືກັບນະຄອນໂຮ່ຈີ່ມິນ ສສ ຫວຽດນາມ ປະຕິບັດໂຄງການລ້ຽງງົວຊີ້ນ ໃຫ້ປະກົດຜົນເປັນຈິງ.

21.15 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງມາດຕາ 4 (ຂໍ້ 4.1), ມາດຕາ 8, ມາດຕາ 16 ແລະ ມາດຕາ 17 (ຂໍ້ 17.2) ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

21.16 ຄົ້ນຄວ້າພິຈາລະນາແກ້ໄຂ ຂໍ້ແນະນຳຂອງ ອົງການກວດສອບ ປະຈຳພາກກາງ ປະຈຳປີ 2017 ໃຫ້ຄົບຖ້ວນ.

21.17 ປະຕິບັດລາຍຮັບວິຊາການ 420 ລ້ານກີບ.

**ມາດຕາ 22: ມອບໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າ ນະຄອນຫລວງວຽງຈັນ ປະຕິບັດ ດັ່ງນີ້:**

22.1 ສືບຕໍ່ຈັດຕັ້ງປະຕິບັດໂຄງການສ້າງຕະຫຼາດຂາຍໄມ້ ແລະ ເຟີນິເຈີ ໃຫ້ມີຄວາມຄືບໜ້າ.

22.2 ສືບຕໍ່ຄົ້ນຄ້ວາຈັດສັນເນື້ອທີ່ດິນ ເພື່ອສ້າງໂຄງການເຂດການຄ້າສາກົນ ໃຫ້ສຳເລັດ.

22.3 ເອົາໃຈໃສ່ປັບປຸງ ແລະ ຍົກລະດັບບັນດາໂຮງງານອຸດສາຫະກຳປຸງແຕ່ງ ໃຫ້ໄດ້ຕາມມາດຕະຖານ, ຈັດຕັ້ງການດັດສົມໂຮງງານປຸງແຕ່ງໄມ້ ໃຫ້ສຳເລັດ 9 ເມືອງ.

22.4 ຜັນຂະຫຍາຍດຳລັດ ຂອງລັດຖະບານ, ສະບັບເລກທີ 25/ລບ, ລົງວັນທີ 16 ມັງກອນ 2017 ວ່າດ້ວຍການຈັດແບ່ງຂະໜາດວິສາຫະກິດ ຂະໜາດນ້ອຍ ແລະ ກາງ; ສ້າງສະພາບເອື້ອອຳນວຍໃຫ້ແກ່ການສ້າງຕັ້ງ ແລະ ດຳເນີນທຸລະກິດ, ການເຂົ້າຫາແຫລ່ງທຶນ, ການເຂົ້າເຖິງການບໍລິການ ໃຫ້ຄຳປຶກສາ, ການເຂົ້າເຖິງ ແລະ ຂະຫຍາຍການຕະຫລາດ, ສົ່ງເສີມການເພີ່ມຜະລິດຕະພາບ ແລະ ນະວັດຕະກຳ.

22.5 ປັບປຸງ ແລະ ຍົກລະດັບໂຮງງານຫັດຖະກຳ ເພື່ອສ້າງເປັນກຸ່ມການຜະລິດ ແລະ ກ້າວໄປເຖິງການຮັບຮອງສິນຄ້າ ໜຶ່ງເມືອງໜຶ່ງຜະລິດຕະພັນ ໃຫ້ໄດ້ເພີ່ມ 2 ກຸ່ມ ຄື: ເມືອງ ນາຊາຍທອງ ແລະ ເມືອງສັງທອງ, ສ້າງພື້ນຖານ ແລະ ກຽມຄວາມພ້ອມ ໃຫ້ແກ່ສິນຄ້າທີ່ໄດ້ຮັບກາໝາຍ ໂອດ໋ອບ ເພື່ອໃຫ້ໄດ້ມາດຕະຖານ ກ້າວໄປເຖິງການໄດ້ຮັບກາໝາຍ (Brand Name) ສະເພາະ ຈານວນ 2 ຫົວໜ່ວຍ.

22.6 ຖືເອົາການຜະລິດຫັດຖະກຳຕິດພັນກັບການທ່ອງທ່ຽວທຳມະຊາດ ແລະ ວັດທະນະທຳ ຢ່າງກົມກຽວ, ສົ່ງເສີມການສົ່ງອອກແບບກັບທີ່ ແລະ ສ້າງສູນຈຳໜ່າຍຜະລິດຕະພັນ ສິນຄ້າໂອດ໋ອບ ພາຍໃນເມືອງ ຂອງ ນະຄອນຫລວງວຽງຈັນ ໃຫ້ໄດ້ຢ່າງໜ້ອຍ 1 ແຫ່ງ.

22.7 ສືບຕໍ່ມອບກາໝາຍສິນຄ້າ ໂອດ໋ອບ ພ້ອມທັງປະເມີນຜົນບັນດາຫົວໜ່ວຍ ທີ່ໄດ້ຮັບກາໝາຍແລ້ວກ້າວໄປເຖິງການຈັດລະດັບຕິດດາວ ໃຫ້ສິນຄ້າດັ່ງກ່າວ.

22.8 ຕັ້ງໜ້າພັດທະນາເຂດນິຄົມອຸດສາຫະກຳ ນະຄອນຫລວງວຽງຈັນ ໃຫ້ກາຍເປັນເຂດນິຄົມອຸດສາຫະກຳສີຂຽວ, ເປັນມິດຕໍ່ສິ່ງແວດລ້ອມ ຕາມແຜນຜັງທີ່ໄດ້ຮັບຮອງໄວ້ ໂດຍສະເພາະ ດຶງດູດນັກລົງທຶນເຂົ້າໃນເຂດ UA.

22.9 ສືບຕໍ່ຄຸ້ມຄອງສິນຄ້າ-ລາຄາ ຕາມທີ່ໄດ້ກຳນົດໄວ້ໃນ ດາລັດ ສະບັບເລກທີ 474/ນຍ ວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ, ດຸ່ນດ່ຽງການສະໜອງ ແລະ ຄວາມຕ້ອງການ, ປັບປຸງຕະຫລາດ ໃນນະຄອນຫລວງວຽງຈັນ ໃຫ້ກາຍເປັນຕະຫລາດຕົວແບບ ຢ່າງໜ້ອຍເມືອງລະ 1 ແຫ່ງ, ສ້າງຕະຫລາດຂາຍຍົກພືດຜັກກະສິກຳ ໃຫ້ໄດ້ 1 ແຫ່ງ, ສຸມໃສ່ຈັດຕັ້ງປະຕິບັດ ການຕິດສະຫລາກສິນຄ້າເປັນພາສາລາວ.

22.10 ເອົາໃຈໃສ່ບໍລິການແຈ້ງຂຶ້ນທະບຽນວິສາຫະກິດ, ຕິດຕາມ, ກວດກາ, ຊຸກຍູ້ສົ່ງເສີມບັນດາຫົວໜ່ວຍທຸລະກິດທີ່ຕັ້ງຢູ່ໃນ ນະຄອນຫລວງວຽງຈັນ, ຊຸກຍູ້ສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫລວງໃນການຈັດຕັ້ງປະຕິບັດ ຫົວໜ່ວຍທຸລະກິດ 5 ດີ ຂອງ ນະຄອນຫລວງວຽງຈັນ ໃຫ້ໄດ້ຕົວແບບທົດລອງ 5 ຫົວໜ່ວຍ.

22.11 ສືບຕໍ່ຈັດຕັ້ງປະຕິບັດວຽກງານຂອງຄະນະກໍາມະການ ປະຊາຄົມເສດຖະກິດອາຊຽນ, ເຜີຍແຜ່ ແລະ ສ້າງຄວາມເຂົ້າໃຈໃຫ້ພາກລັດ ແລະ ທຸລະກິດ ກ່ຽວກັບ ການເຂົ້າຮ່ວມປະຊາຄົມ ເສດຖະກິດອາຊຽນ (AEC).

22.12 ນໍາໃຊ້ລະບົບ ICT ເຂົ້າໃນການຄຸ້ມຄອງລະບົບສະຖິຕິ ອຸດສາຫະກໍາປຸງແຕ່ງ ແລະ ການຄ້າໃຫ້ທັນສະໄໝ.

22.13 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງມາດຕາ 4 (ຂໍ້ 4.2), ມາດຕາ 5 (ຂໍ້ 5.2) ມາດຕາ 16 ແລະ ມາດຕາ 17 (ຂໍ້ 17.2) ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

22.14 ປະຕິບັດຄາດໝາຍແຜນຈັດສັນຄວາມເປັນລະບຽບຮຽບຮ້ອຍ ຕາມຂໍ້ຕົກລົງຂອງເຈົ້າຄອງ ນວ, ສະບັບເລກທີ 1184/ຈນວ, ສະບັບລົງວັນທີ 20 ທັນວາ 2017, ມາດຕາ 7.

22.15 ປະຕິບັດລາຍຮັບວິຊາການ 850 ລ້ານກີບ.

**ມາດຕາ 23: ມອບໃຫ້ພະແນກ ພະລັງງານ ແລະ ບໍ່ແຮ່ ນະຄອນຫລວງວຽງຈັນ ປະຕິບັດດັ່ງນີ້:**

23.1 ສຸມໃສ່ການກວດກາ, ຕິດຕາມການຊົມໃຊ້ໄຟຟ້າຂອງປະຊາຊົນ ໃນນະຄອນຫຼວງວຽງຈັນ ໃຫ້ທົ່ວເຖິງທຸກເມືອງ ໂດຍເລັ່ງໃສ່ຈຸດທີ່ມີຄວາມສ່ຽງທີ່ຈະເກີດບັນຫາ.

23.2 ສຸມໃສ່ປະສານສົມທົບກັບ ຄະນະກໍາມະທິການຮ່ວມມືລາວ-ຈີນ ກ່ຽວກັບ ແຜນການຊ່ວຍເຫລືອລ້າຈາກລັດຖະບານຈີນ ເພື່ອຍົກລະດັບລະບົບໄຟຟ້າສາທາລະນະ ໃນນະຄອນຫລວງວຽງຈັນ ພ້ອມນີ້ໃຫ້ຄົ້ນຄວ້າຊອກຫາແຫລ່ງທຶນ ຈາກພາກສ່ວນເອກະຊົນທັງພາຍໃນ ແລະ ຕ່າງປະເທດ ມາຊ່ວຍປັບປຸງລະບົບໄຟຟ້າແສງສະຫວ່າງສາທາລະນະ ຂອງນະຄອນຫລວງ.

23.3 ເອົາໃຈໃສ່ໃນການຄຸ້ມຄອງການດໍາເນີນການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ໃຫ້ສອດຄ່ອງຕາມມາດຕະຖານເຕັກນິກ, ຄວາມປອດໄພ, ຄຸ້ມຄອງກວດກາຫົວໜ່ວຍລາຄາຂອງໂຄງການໃຫ້ສົມເຫດສົມຜົນ ພ້ອມທັງຄົ້ນຄວ້າຊອກຫາວິທີ ແລະ ມາດຕະການແກ້ໄຂ ຢ່າງເດັດຂາດ.

23.4 ສຸມໃສ່ການພັດທະນາພະລັງງານໄຟຟ້າຈາກພະລັງງານນໍ້າ, ພະລັງງານແສງຕາເວັນ ແລະ ພະລັງງານຈາກພືດ ເຊັ່ນ: ໂຄງການ ສຶກສາສໍາຫຼວດການກໍ່ສ້າງເຂື່ອນໄຟຟ້າປາກງື່ມ ກໍາລັງຕິດຕັ້ງປະມານ 84 MW, ໂຄງການ ການສຶກສາສໍາຫຼວດ-ກໍ່ສ້າງ ໄຟຟ້າພະລັງງານແສງຕາເວັນຂະໜາດ 20 MW ຢູ່ຫຼັກ 36 ເມືອງໄຊທານີ; ຊຸກຍູ້ສົ່ງເສີມການຜະລິດນໍ້າມັນເຊື້ອໄຟຊີວະພາບ ຢູ່ເຂດບ້ານ ໜອງຄັນຄູ ເມືອງ ນາຊາຍທອງ ແລະ ໂຄງການ ສຶກສາສໍາຫລວດຄວາມເປັນໄປໄດ້ຂອງເຂື່ອນໄຟຟ້າຝາຍນໍ້າລົ້ນ 5 MW ຂອງບໍລິສັດລາວສະໄໝ ຈໍາກັດ ຢູ່ເຂດເມືອງ ສັງທອງ.

23.5 ຄຸ້ມຄອງ, ຕິດຕາມໂຄງການສຶກສາ, ສໍາຫລວດ ແລະ ເກັບກໍາຂໍ້ມູນເພື່ອພັດທະນາພະລັງງານທົດແທນ (ແສງຕາເວັນ) ໂດຍສະເພາະໂຄງການທີ່ໄດ້ເຊັນ MOU ໄປແລ້ວ ມີ 3 ໂຄງການ, ມີກໍາລັງການຕິດຕັ້ງ 34,02 MW, ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອອານວຍຄວາມສະດວກ, ຊຸກຍູ້ສົ່ງເສີມໃຫ້ໄດ້ມີການຜະລິດເປັນພະລັງງານໄຟຟ້າຈາກແຫລ່ງພະລັງງານທົດແທນ.

23.6 ສົມທົບກັບພາກສ່ວນທີ່ກ່ຽວຂ້ອງລົງແກ້ໄຂຜົນກະທົບຂອງໂຄງການກໍ່ສ້າງສາຍສົ່ງແຮງສູງ 230 ກວ ຂອງ ບໍລິສັດ ນໍ້າງຽບ 1 ຈໍາກັດ ເຂດເມືອງ ປາກງື່ມ ນະຄອນຫລວງວຽງຈັນ ໃນຈໍານວນ 09 ຄອບຄົວທີ່ຍັງບໍ່ເຫັນດີຮັບເອົາຄ່າຊົດເຊີຍ.

23.7 ຊຸກຍູ້ສົ່ງເສີມ ແລະ ຈັດຕັ້ງປະຕິບັດ ນະໂຍບາຍປະຢັດພະລັງງານ, ສໍາຫຼວດກວດກາຄວາມຕ້ອງການພະລັງງານໄຟຟ້າຕົວຈິງຂອງເນື້ອທີ່ຜະລິດກະສິກໍາ ເພື່ອຫຼີກລ້ຽງການສູບນໍ້າເກີນຄວາມຕ້ອງການ ໂດຍ

ການປະສານສົມທົບກັບ ພະແນກ ກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ແລະ ຝ່າຍປະຕິບັດການໄຟຟ້າ ນະຄອນຫຼວງວຽງຈັນ.

23.8 ປະຕິບັດໂຄງການສ້າງຄວາມເຂັ້ມແຂງ ໃຫ້ແກ່ວິຊາການຂອງຜູ້ປະກອບການທາງດ້ານວຽກງານ ພະລັງງານ-ບໍ່ແຮ່ ທາງພາກລັດ ແລະ ເອກະຊົນ.

23.9 ຊຸກຍູ້ສົ່ງເສີມການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ໃຫ້ຫຼາຍຂຶ້ນ, ຫຼຸດຜ່ອນການສົ່ງອອກແຮ່ທາດ ທີ່ຍັງບໍ່ທັນປຸງແຕ່ງ, ຊຸກຍູ້ສົ່ງເສີມໃຫ້ນັກລົງທຶນ ທີ່ດຳເນີນກິດຈະການຂຸດຄົ້ນ, ປຸງແຕ່ງ ແລະ ກິດຈະການເສີມຄຸນຄ່າ ແລະ ແຍກແຮ່ທາດ ເຊັ່ນ: ຖ່ານຫີນແອນຖຼາໄຊ (Anthracite), ບີສະມຸດ, ເຫລຸລຽມ, ທອງແທ່ງເຄິ່ງສຳເລັດຮູບ, ຊືນ, ສັງກະສີ, ເກືອກາລີ, ແຮ່ຄຳ-ແຮ່ຕິດພັນມີຄ່າ ແລະ ຂຸດຄົ້ນຫີນພູ, ຫີນກັນເຈື່ອນ ແລະ ດິນແດງ ເພື່ອຕອບສະໜອງການພັດທະນາພື້ນຖານໂຄງລ່າງຕ່າງໆ.

23.10 ຕິດຕາມ ແລະ ຊຸກຍູ້ໃຫ້ບັນດາໂຄງການລົງທຶນຂອງລັດ ໃນຂົງເຂດທໍລະນີສາດ-ບໍ່ແຮ່ ໃຫ້ປະກອບສ່ວນຊຸກຍູ້ ການພັດທະນາ ນະຄອນຫຼວງວຽງຈັນ ໂດຍສະເພາະທ້ອງທີ່ຖິ່ນບໍ່ມີໂຄງການຕັ້ງຢູ່ ໂດຍການຕິດຕາມກວດກາ ການປະຕິບັດສັນຍາ ຢ່າງເຂັ້ມງວດ.

23.11 ຊຸກຍູ້ຕິດຕາມກວດກາ ໂຄງການ ຊອກຄົ້ນ-ສຳຫຼວດແຮ່ທາດຕ່າງໆ ທີ່ສູນກາງ ແລະ ທ້ອງຖິ່ນອະນຸຍາດຢູ່ໃນນະຄອນຫລວງວຽງຈັນ ໃຫ້ເຄື່ອນໄຫວຖືກຕ້ອງຕາມສັນຍາ.

23.12 ໂຄງການ ຊອກຄົ້ນ-ສຳຫຼວດຫາຈຸດປະກົດ, ຂຶ້ນບັນຊີແຮ່ທາດຕ່າງໆ ແລະ ກຳນົດພື້ນທີ່ໆມີທ່າແຮງດ້ານເສດຖະກິດ ເພື່ອວາງແຜນພັດທະນາໃນຕໍ່ໜ້າ; ຕິດຕາມກວດກາ ການລັກລອບຂຸດຄົ້ນແຮ່ທາດແບບສະຊາຍ (ບໍ່ມີໃບອະນຸຍາດ) ໂດຍສະເພາະ ແມ່ນການຂຸດຄົ້ນດິນແດງ, ຫີນດານ, ຫີນກໍ່ສ້າງ ແລະ ແຮ່ທາດອື່ນໆ.

23.13 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງມາດຕາ 4 (ຂໍ້ 4.3) ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

23.14 ປະຕິບັດຄາດໝາຍແຜນຈັດສັນຄວາມເປັນລະບຽບຮຽບຮ້ອຍ ຕາມຂໍ້ຕົກລົງຂອງເຈົ້າຄອງ ນວ, ສະບັບເລກທີ 1184/ຈນວ, ສະບັບລົງວັນທີ 20 ທັນວາ 2017, ມາດຕາ 9.

23.15 ປະຕິບັດລາຍຮັບວິຊາການ 8 ລ້ານກີບ.

**ມາດຕາ 24: ມອບໃຫ້ພະແນກ ໂຍທາທິການ ແລະ ຂົນສົ່ງ ປະຕິບັດ ດັ່ງນີ້:**

24.1 ສຸມໃສ່ຍົກລະດັບບັນດາພື້ນຖານໂຄງລ່າງ ແລະ ການບໍລິການຂົນສົ່ງທາງບົກ, ທາງນ້ຳ, ໃຫ້ໄດ້ມາດຕະຖານສາກົນ, ມີຄວາມສະດວກ, ປອດໄພ ແລະ ທັນສະໄໝຈຳນວນໜຶ່ງ ທີ່ເຫັນວ່າຈຳເປັນ.

24.2 ເພີ່ມທະວີຄວາມເປັນເຈົ້າການໃນການຕິດຕາມ, ກວດກາ ແລະ ຊຸກຍູ້ບັນດາໂຄງການກໍ່ສ້າງຂົວ-ທາງ, ໂຄງການປ້ອງກັນຕະຝັ່ງເຈື່ອນ, ໂຄງການນ້ຳປະປາ, ໂຄງການພັດທະນາຕົວເມືອງ ໃຫ້ສຳເລັດຕາມສັນຍາ ແລະ ຮັບປະກັນຄຸນນະພາບ.

24.3 ສຸມໃສ່ການຈັດຕັ້ງປະຕິບັດບັນດາໂຄງການກໍ່ສ້າງ ແລະ ສ້ອມແປງທາງຊົນນະບົດ ທີ່ຮັບໃຊ້ໃຫ້ແກ່ວຽກງານແກ້ໄຂຄວາມທຸກຍາກ; ປັບປຸງ ແລະ ກໍ່ສ້າງເສັ້ນທາງປູຢາງໃນເທດສະບານເມືອງ; ເອົາໃຈໃສ່ກໍ່ສ້າງເສັ້ນທາງຫຼວງຂອງເມືອງ, ທາງເຂດຊານເມືອງ ທີ່ເຊື່ອມເຂົ້າເຂດຈຸດສຸມ ແລະ ກຸ່ມບ້ານພັດທະນາຕາມແຜນການ.

24.4 ເປັນເຈົ້າການສົມທົບກັບ ບັນດາພະແນກການ ແລະ ເມືອງ ກວດກາຄືນການຈັດຕັ້ງປະຕິບັດ ໂຄງການໃນຂະແໜງການ ຍທຂ ເພື່ອໃຫ້ຖືກຕ້ອງຕາມວິໄນແຜນການ ແລະ ການເງິນ; ພ້ອມທັງມີມາດຕະການຮ່ວມກັນໃນການແກ້ໄຂ ແລະ ທັນເປັນແຜນການ.

24.5 ເປັນເຈົ້າການ ສົມທົບກັບ ພະແນກ ການເງິນ, ພະແນກ ແຜນການ ແລະ ການລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ ກວດກາ, ສັງລວມ ແລະ ຢັ້ງຢືນຄືນຕົວເລກໜີ້ສິນການສ້ອມແປງຕາໜ່າງເສັ້ນທາງ ທີ່ຖືກກະທົບຈາກໄພພິບັດ ແລະ ໄພທໍາມະຊາດ ທີ່ວນະຄອນຫລວງວຽງຈັນ ພ້ອມທັງສະເໜີວິທີການແກ້ໄຂໜີ້ສິນດັ່ງກ່າວ.

24.6 ສືບຕໍ່ບູລະນະສ້ອມແປງ ແລະ ຍົກລະດັບບາງເສັ້ນທາງ, ຄູກັ້ນນໍ້າ, ປ້ອງກັນຕະຝັ່ງເຈື່ອນ, ຮ່ອງລະບາຍນໍ້າ ໃນບາງຕົວເມືອງ ທີ່ເຫັນວ່າມີຄວາມສ່ຽງຕໍ່ກັບໄພທໍາມະຊາດ ທີ່ອາດຈະເກີດຂຶ້ນໃນລະດູຝົນ.

24.7 ເອົາໃຈໃສ່, ຊຸກຍູ້ ແລະ ສືບຕໍ່ການຈັດຕັ້ງປະຕິບັດ ແບ່ງຄວາມຮັບຜິດຊອບ, ສິດຕົກລົງບັນຫາ ໃນການຄຸ້ມຄອງວຽກງານ ໂຍທາທິການ ແລະ ຂົນສົ່ງ ໃຫ້ເມືອງ ຢ່າງລະອຽດຈະແຈ້ງ, ຕິດພັນກັບການຈັດສັນຄືນ ແລະ ຈັດສັນງົບປະມານ ເພື່ອຮອງຮັບວຽກງານທົດລອງ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ.

24.8 ປັບປຸງ ແລະ ຍົກລະດັບການບໍລິການຂົນສົ່ງມວນຊົນໃນຕົວເມືອງ ໃຫ້ມີຄວາມສະດວກ, ວ່ອງໄວ, ປອດໄພໃນການສັນຈອນ ແລະ ສາມາດແກ້ໄຂໄດ້ໂດຍພື້ນຖານ ບັນຫາການຈໍລະຈອນແອອັດໃນປັດຈຸບັນ.

24.9 ສືບຕໍ່ພັດທະນານະຄອນຫຼວງວຽງຈັນ ໃຫ້ໄປຕາມຄໍາຂວັນ 6 ສ ຮັກສາເມືອງເກົ່າສະຖາປັດຕະຍະກໍາ, ປູຊະນີຍະສະຖານບູຮານທີ່ເປັນເອກະລັກ ແລະ ມີຄວາມໝາຍປະຫວັດສາດໃຫ້ຍືນຍົງ.

24.10 ວາງແຜນພັດທະນາເມືອງໃໝ່ທີ່ທັນສະໄໝ, ຄຸ້ມຄອງການກໍ່ສ້າງ ໃຫ້ໄປຕາມຜັງເມືອງທີ່ວາງໄວ້ຢ່າງເຂັ້ມງວດ, ສຶກສາສໍາຫຼວດ-ອອກແບບ ວາງແຜນຜັງຕົວເມືອງຕາມຈຸດຕ່າງໆ ທີ່ກໍານົດວາງໃນແຜນຜັງຊີ້ນໍາລວມຂອງຜັງເມືອງ ແລະ ຜັງລະອຽດລະດັບບ້ານ. ສຶກສາປັບປຸງແຜນຜັງຊີ້ນໍາລວມການພັດທະນາຕົວເມືອງວຽງຈັນ, ສະບັບທີ 3 (ແຕ່ປີ 2011-2030), ປັກຫຼັກໝາຍເຂດວາງແຜນຜັງເມືອງລະອຽດ ເພື່ອພັດທະນາຕົວເມືອງໃໝ່ ເຊັ່ນ: ເຂດພັດທະນາ ເມືອງໃໝ່ໜອງປິງ, ເຂດເສດຖະກິດສະເພາະບຶງທາດຫຼວງ ແລະ ເຂດພັດທະນາລຽບຕາມຖະໜົນ 450 ປີ ແລະ ອອກແບບ ແຜນຜັງລະອຽດລະດັບບ້ານ ແລະ ເມືອງໜູ່ດາວ ໃນນະຄອນຫຼວງ.

24.11 ສືບຕໍ່ສໍາຫຼວດວາງແຜນຜັງ ພັດທະນາເຂດວັດທາດເຈດີສາມັກຄີ ທາດຖຸ່ນສ້ອຍ ເມືອງ ປາກງື່ມ, ສືບຕໍ່ລົງກວດກາສໍາຫຼວດປັກຫຼັກໝາຍແລວ ທາງຕາມຜັງເມືອງເຂດຖະໜົນ 450 ປີ ຕອນໃຕ້, ສືບຕໍ່ສໍາຫຼວດວາງແຜນຜັງ ເມືອງ ສັງທອງ ຄືນໃໝ່, ກໍານົດ ແລະ ອອກແບບຈຸດບ່ອນຈອດລົດໃນເຂດຕົວເມືອງ. ສືບຕໍ່ປັກຫຼັກໝາຍເຂດສະຫງວນ ຄອງຊົນລະປະທານເກົ່າເຂດ ບ້ານ ພະຂາວ, ລົງປັກຫຼັກໝາຍທາງຮ່ອມລຽບຕາມຖະໜົນ 450 ປີ.

24.12 ເອົາໃຈໃສ່ການປຸກສ້າງ, ຖົມດິນ ແລະ ອື່ນໆ, ຂະຫຍາຍລະບົບນໍ້າປະປາ, ລະບົບບໍາບັດນໍ້າເປື້ອນ, ລະບົບລະບາຍນໍ້າໃນຕົວເມືອງໃຫ້ພຽງພໍ, ຂະຫຍາຍການຜະລິດ ນໍ້າປະປາ ໃຫ້ພຽງພໍກັບຄວາມຕ້ອງການ. ພ້ອມທັງ ສຶກສາສ້າງແຜນກໍານົດຈຸດໂຮງງານບໍາບັດນໍ້າເປື້ອນ ແລະ ປັບປຸງຮ່ອງລະບາຍນໍ້າໃຫ້ເປັນເຂດຂຽວ.

24.13 ເພີ່ມທະວີການເຜີຍແຜ່ການໂຄສະນາ ໃຫ້ນັກຂັບຂີ່ມີສະຕິປະຕິບັດກົດລະບຽບ ການສັນຈອນຕາມທ້ອງຖະໜົນ ໃຫ້ມີຄວາມປອດໄພ ເພື່ອເຮັດໃຫ້ການເກີດອຸບັດຕິເຫດຕາມທ້ອງຖະໜົນ ຫລຸດລົງຕາມຄາດໝາຍທີ່ວາງໄວ້.

24.14 ສືບຕໍ່ກໍ່ສ້າງລະບົບປ້ອງກັນຕະຝັ່ງເຈື່ອນ ແລະ ຄູປ້ອງກັນນໍ້າຖ້ວມ ເພື່ອຮັກສາດິນແດນ, ຊັບສິນສ່ວນລວມ ແລະ ຊັບສິນຂອງປະຊາຊົນ.

24.15 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງມາດຕາ 4 (ຂໍ້ 4.4), ມາດຕາ 9 ແລະ ມາດຕາ 17 (ຂໍ້ 17.2) ຂອງ ຂໍ້ຕົກລົງສະບັບນີ້ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

24.16 ປະຕິບັດຄາດໝາຍແຜນຈັດສັນຄວາມເປັນລະບຽບຮຽບຮ້ອຍ ຕາມຂໍ້ຕົກລົງຂອງເຈົ້າຄອງ ນວ, ສະບັບເລກທີ 1184/ຈນວ, ສະບັບລົງວັນທີ 20 ທັນວາ 2017 ມາດຕາ 8.

24.17 ຄົ້ນຄວ້າພິຈາລະນາແກ້ໄຂ ຂໍ້ແນະນຳຂອງ ອົງການກວດສອບ ປະຈຳພາກກາງ ປະຈຳປີ 2017 ໃຫ້ຄົບຖ້ວນ.

24.18 ປະຕິບັດລາຍຮັບວິຊາການ 800 ລ້ານກີບ, ລາຍຮັບຈາກກອງທຶນທາງ....................ລ້ານກີບ ແລະ ການປັບໃໝຈາກ ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ຕາມຂໍ້ຕົກລົງຂອງເຈົ້າຄອງ ນວ, ສະບັບເລກທີ 1184/ຈນວ, ສະບັບລົງວັນທີ 20 ທັນວາ 2017 ມາດຕາ 8.

**ມາດຕາ 25: ມອບໃຫ້ຫ້ອງການ ຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ ປະຕິບັດ ດັ່ງນີ້:**

25.1 ກວດກາຄວາມເປັນລະບຽບຮຽບຮ້ອຍ ຕາມສາຍທາງຫລັກ, ບ່ອນສາທາລະນະ, ສວນສາທາລະນະ, ຕະຫລາດ, ຈຸດຊຸມຊົນແອອັດ, ລານຈອດລົດ ທີ່ໄດ້ກຳນົດໄວ້.

25.2 ຂຶ້ນແຜນລອກຮ່ອງລະບາຍນ້ຳສາຍຫລັກ ແລະ ສາຍສຳຮອງ ກວດກາສະພາບການລະບາຍນ້ຳ ຕາມແຄມທາງໃຫ້ນ້ຳໄຫລສະດວກ. ສົມທົບກັບອຳນາດການປົກຄອງທີ່ກ່ຽວຂ້ອງ ລົງກວດກາເຂດສະຫງວນຮ່ອງລະບາຍນ້ຳ ແລະ ປຸກລະດົມໃຫ້ປະຊາຊົນມີສ່ວນຮ່ວມໃນການປົກປັກຮັກສາ.

25.3 ສືບຕໍ່ລົງມືຈັດຕັ້ງປະຕິບັດວຽກງານ ວຽງຈັນສະອາດ ແລະ ວຽງຈັນສີຂຽວ. ສ້າງຂະບວນການອານາໄມ ແລະ ປະດັບປະດາຕົວເມືອງ ເພື່ອຕ້ອນຮັບວັນສຳຄັນຂອງຊາດ ແລະ ກອງປະຊຸມຕ່າງໆ ໂດຍສຸມໃສ່ໂຄສະນາເຜີຍແຜ່ ຄູ່ມື ກ່ຽວກັບ ການຮັກສາຄວາມສະອາດໃນຕົວເມືອງ.

25.4 ສືບຕໍ່ເຮັດອະນາໄມຕາມແຄມທາງ, ລ້າງທາງ, ເກັບມ້ຽນຂີ້ເຫຍື້ອຕາມສາຍທາງ, ຫົດນ້ຳສວນ ແລະ ຕົ້ນໄມ້, ຊວ້ານດິນຕາມສາຍທາງ, ປົກປັກຮັກສາສວນສາທາລະນະ. ສຸມໃສ່ຄົ້ນຄວ້າປັບປຸງລະບົບກຳຈັດ ແລະ ມ້ຽນຂີ້ເຫຍື້ອ ໂດຍນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ. ສືບຕໍ່ຈັດຕັ້ງປະຕິບັດວຽກງານບົວລະບັດຮັກສາສວນ ແລະ ປະດັບປະດາຕົວເມືອງ ເພື່ອຕ້ອນຮັບວັນສຳຄັນຕ່າງໆ ແລະ ຮັບໃຊ້ກອງປະຊຸມລະດັບຊາດ.

25.5 ເອົາໃຈໃສ່ການບໍລິການ ແລະ ບຳບັດມູນຄົນຈາກຄົວເຮືອນ ຢູ່ນາໄຫ ໃຫ້ເປັນປົກກະຕິ ແລະ ມີປະສິດທິຜົນ.

25.6 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງມາດຕາ 8 ແລະ ມາດຕາ 9 ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

25.7 ປະຕິບັດຄາດໝາຍແຜນຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຕົວເມືອງ ແລະ ຊານເມືອງ ຕາມຂໍ້ຕົກລົງຂອງເຈົ້າຄອງ ນວ, ສະບັບເລກທີ 1184/ຈນວ, ສະບັບລົງວັນທີ 20 ທັນວາ 2017 ມາດຕາ 8.

25.8 ປະຕິບັດລາຍຮັບວິຊາການ 10.976,20 ລ້ານກີບ ແລະ ການປັບໃໝຈາກການຈັດສັນຄວາມເປັນລະບຽບຮຽບຮ້ອຍຕາມຂໍ້ຕົກລົງຂອງເຈົ້າຄອງ ນວ, ສະບັບເລກທີ 1184/ຈນວ, ສະບັບລົງວັນທີ 20 ທັນວາ 2017 ມາດຕາ 8.

**ມາດຕາ 26: ມອບໃຫ້ພະແນກ ໄປສະນີ, ໂທລະຄົມມະນາຄົມ ແລະ ສື່ສານ ນະຄອນຫລວງວຽງຈັນ ປະຕິບັດ ດັ່ງນີ້:**

26.1 ສຸມໃສ່ລົງເຜີຍແຜ່ນິຕິກຳໃໝ່ດ້ານໄປສະນີ ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ ລົງບັນດາເມືອງ ແລະ ບ້ານ ໃຫ້ທົ່ວເຖິງ.

26.2 ເຮັດວຽກງານຄຸ້ມຄອງ ຊຸກຍູ້ສົ່ງເສີມ ຫົວໜ່ວຍບໍລິການດ້ານໄປສະນີ, ໂທລະຄົມມະນາຄົມ ແລະ ໄອທີ ໃຫ້ມີການພັດທະນາ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ ເຂັ້ມແຂງ ແລະ ສອດຄ່ອງກັບລະບຽບກົດໝາຍ.

26.3 ຊຸກຍູ້ໃຫ້ມີການຂະຫຍາຍສະຖານີຮັບ-ສົ່ງສັນຍານໂທລະສັບ ແລະ ອິນເຕີເນັດຄວາມໄວສູງລະບົບ 3G, 4G ກວມເອົາເຂດບ້ານ 3 ສ້າງ ແລະ ບ້ານອື່ນໆ ຢູ່ຂອບເຂດ ນະຄອນຫລວງວຽງຈັນ.

26.4 ສົ່ງເສີມການພັດທະນາຊອບແວ ການສ້າງຖານຂໍ້ມູນ ການຍົກລະດັບຄວາມຮູ້ ກ່ຽວກັບ ການນຳໃຊ້ອຸປະກອນໄອຊີທີ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ ໃຫ້ພະນັກງານວິຊາການ ເພື່ອສ້າງເງື່ອນໄຂຊຸກຍູ້ໃຫ້ບັນດາພະແນກການ ແລະ ອົງການ ພາຍໃນນະຄອນຫຼວງວຽງຈັນ ນຳໃຊ້ເຂົ້າໃນວຽກງານຂອງຕົນ.

26.5 ເອົາໃຈໃສ່ຄຸ້ມຄອງການນຳໃຊ້ຄື້ນຄວາມຖີ່, ນຳໃຊ້ຂໍ້ມູນຂ່າວສານຜ່ານທາງ ອິນເຕີເນັດ ແລະ ຄຸ້ມຄອງຫົວໜ່ວຍທຸລະກິດບໍລິການດ້ານໄປສະນີ, ໂທລະຄົມມະນາຄົມ ແລະ ໃຫ້ບໍລິການອິນເຕີເນັດຄາເຟ ຢູ່ນະຄອນຫຼວງວຽງຈັນ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

26.6 ສືບຕໍ່ພົວພັນຮ່ວມມືກັບພະແນກ ຖະແຫຼງຂ່າວ ແລະ ການສື່ສານ ນະຄອນໂຮ່ຈິມິນ ສສ ຫວຽດນາມ ເພື່ອຮັດແໜ້ນຄວາມສາມັກຄີ ແລະ ຈັດຕັ້ງປະຕິບັດບົດບັນທຶກຊ່ວຍຈຳ ໃຫ້ເປັນຮູບປະທຳ ໂດຍພ້ອມກັນເຮັດສັນຍາກຳນົດແຜນວຽກ, ໂຄງການລະອຽດ ເພື່ອຈັດຕັ້ງປະຕິບັດແຕ່ລະປີ.

26.7 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງມາດຕາ 4 (ຂໍ້ 4.6) ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

26.8 ປະຕິບັດຄາດໝາຍແຜນຈັດສັນຄວາມເປັນລະບຽບຮຽບຮ້ອຍ ຕາມຂໍ້ຕົກລົງຂອງເຈົ້າຄອງ ນວ, ສະບັບເລກທີ 1184/ຈນວ, ລົງວັນທີ 20 ທັນວາ 2017 ມາດຕາ 9 ໂດຍສະເພາະແມ່ນການແກ້ໄຂຂຸມສາຍໂທລະຄົມມະນາຄົມ ໃຫ້ເປັນລະບຽບຮຽບຮ້ອຍ ແລະ ສວຍງາມຖືກຕ້ອງຕາມເຕັກນິກ.

26.9 ສ້າງສູນຂໍ້ມູນ ແລະ ຫ້ອງປະຊຸມທາງໄກ ຂອງພະແນກ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ນວ ໃຫ້ສຳເລັດ 1 ແຫ່ງ.

26.10 ຈັດຕັ້ງຜັນຂະຫຍາຍທິດທາງ ແລະ ແຜນການພັດທະນາ ດ້ານໄອຊີທີ ຂອງກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ກຳນົດອອກ ຄື: “ສົ່ງເສີມ, ນຳໃຊ້ ໄອຊີທີ (ICT) ເຂົ້າໃນ ເອັສເອັມອີ (SME) ແລະ ສະຕາດອັບ (Start up) ເພື່ອຂັບເຄື່ອນເສດຖະກິດ ດີຈີຕອນ”.

26.11 ປະຕິບັດລາຍຮັບວິຊາການ 162 ລ້ານກີບ.

**ມາດຕາ 27: ມອບໃຫ້ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫລວງວຽງຈັນ ປະຕິບັດດັ່ງນີ້:**

27.1 ສ້າງກົນໄກ ແລະ ບົດແນະນຳ ສຳລັບການພັດທະນາຕົວເມືອງ ແລະ ຊານເມືອງ ແບບຍືນຍົງ, ການຄຸ້ມຄອງ ແລະ ຫຼຸດຜ່ອນສິ່ງເສດເຫຼືອ, ພັດທະນາລະບົບການບຳບັດນ້ຳເສຍແບບຄົບຊຸດ, ສ້າງຖານຂໍ້ມູນມົນລະພິດແບບຄົບຊຸດ ດ້ານສິ່ງແວດລ້ອມ ໃນຂອບເຂດທົ່ວນະຄອນຫລວງວຽງຈັນ ໂດຍສະເພາະໃນເຂດ 4 ເມືອງໃນ ຂອງນະຄອນຫຼວງວຽງຈັນ.

27.2 ປັບປຸງກົນໄກການຄຸ້ມຄອງວຽກງານໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ.

27.3 ເປັນໃຈກາງ ການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ສະຫລຸບສັງລວມ ແລະ ຖອດຖອນບົດຮຽນກ່ຽວກັບການຫັນຊັບສິນ (ທີ່ດິນ) ເປັນທຶນຢູ່ ນະຄອນຫລວງວຽງຈັນ ໃນໄລຍະຜ່ານມາ ແລະ ຄົ້ນຄວ້າກ່ຽວກັບກົນໄກ ແລະ ວິທີຈັດຕັ້ງ ປະຕິບັດວຽກງານດັ່ງກ່າວໃນຕໍ່ໜ້າ.

27.4 ຄົ້ນຄວ້າແບ່ງຄວາມຮັບຜິດຊອບ ສິດຕົກລົງບັນຫາ ແລະ ຜົນປະໂຫຍດໃນການຄຸ້ມຄອງວຽກງານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ເມືອງຢ່າງລະອຽດຈະແຈ້ງ ຕິດພັນກັບການຈັດສັນຄົນ ແລະ ຈັດສັນງົບປະມານ ພ້ອມທັງບຸກຄະລະກອນ ເພື່ອຮັບຮອງວຽກງານສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ.

27.5 ສຳຫຼວດ ແລະ ຈັດສັນການນຳໃຊ້ທີ່ດິນ ຕາມ 8 ປະເພດທີ່ດິນ, ປະສານສົມທົບເກັບກຳຂໍ້ມູນການເຊົ່າ ແລະ ສຳປະທານທີ່ດິນ ເພື່ອເປັນບ່ອນອີງໃນການສ້າງລາຍຮັບເຂົ້າໃນງົບປະມານ.

27.6 ຊຸກຍູ້ສົ່ງເສີມໃຫ້ບັນດາໂຄງການລົງທຶນ ດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໃຫ້ຖືກຕ້ອງຕາມລະບຽບຫຼັກການ, ໂປ່ງໃສ ແລະ ຕິດພັນກັບການດຳເນີນການຕິດຕາມກວດກາ ການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງບັນດາໂຄງການພັດທະນາຢ່າງເປັນລະບົບ.

27.7 ສ້າງແຜນຄຸ້ມຄອງບຶງໜອງທຳມະຊາດ ມີ ນ້ຳສັງ, ນ້ຳຕອນ, ນ້ຳທຸມ, ນ້ຳຊວງ ແລະ ໜອງທານ.

27.8 ສືບຕໍ່ສ້າງລະບົບຖານຂໍ້ມູນມີລະອຽດແບບຄົບຊຸດ ຂອງວຽກງານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍສະເພາະ ໃນເຂດ 4 ເມືອງໃນ ແລະ ຖານຂໍ້ມູນຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ນວ.

27.9 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງມາດຕາ 4 (ຂໍ້ 4.7) ແລະ ມາດຕາ 8 ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

27.10 ປະຕິບັດລາຍຮັບວິຊາການ 5.120 ລ້ານກີບ.

**ມາດຕາ 28: ມອບໃຫ້ພະແນກ ສຶກສາທິການ ແລະ ກິລາ ນະຄອນຫລວງວຽງຈັນ ປະຕິບັດ ດັ່ງນີ້:**

28.1 ສືບຕໍ່ລະດົມພໍ່ແມ່ປະຊາຊົນ ເອົາລູກຫຼານຂອງຕົນ ເຂົ້າຮຽນອະນຸບານ ແລະ ຫ້ອງກຽມປະຖົມ ຕາມເງື່ອນໄຂຕົວຈິງ, ຂະຫຍາຍຫ້ອງກຽມປະຖົມ ໃນບ່ອນທີ່ມີເງື່ອນໄຂ. ພ້ອມດຽວກັນນັ້ນ, ກໍຂະຫຍາຍໂຮງຮຽນອະນຸບານອອກໄປສູ່ເຂດຊານເມືອງ. ນອກຈາກນັ້ນ, ກໍຕ້ອງປ່ຽນສະຖານະຂອງໂຮງຮຽນປະຖົມທີ່ມີນັກຮຽນໜ້ອຍ ໃຫ້ເປັນໂຮງຮຽນອະນຸບານ.

28.2 ເອົາໃຈໃສ່ພັດທະນາຊັບພະຍາກອນມະນຸດ ໃຫ້ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດຊຳນານງານ ເພື່ອຮອງຮັບກັບການສະໜອງໃຫ້ແກ່ ການພັດທະນາເສດຖະກິດ-ສັງຄົມ, ສືບຕໍ່ປະຕິບັດການເລື່ອນຊັ້ນແບບຕໍ່ເນື່ອງຂອງຊັ້ນປະຖົມ ແລະ ມັດທະຍົມຕອນຕົ້ນ; ສົ່ງເສີມການສຶກສານອກໂຮງຮຽນ, ເພີ່ມການເຂົ້າຮຽນໃນຊັ້ນມັດທະຍົມສຶກສາ ໃຫ້ມີຄວາມກ້ຳເກິ່ງກັນ ລະຫວ່າງ ເພດຍິງ-ຊາຍ; ສົ່ງເສີມນັກຮຽນດີ, ຮຽນເກັ່ງ ຮຽນຕໍ່ໃນສາຍການສຶກສາຊັ້ນສູງໃຫ້ເທົ່າທຽມກັນ ລະຫວ່າງ ເພດຍິງ-ຊາຍ.

28.3 ສືບຕໍ່ກໍ່ສ້າງ ແລະ ຂະຫຍາຍພື້ນຖານໂຄງລ່າງ ທີ່ໄດ້ກຳນົດໄວ້ໃນແຜນການປີ ໂດຍສະເພາະໃນເຂດຊານເມືອງ ແລະ ຈຸດສຸມພັດທະນາ.

28.4 ສືບຕໍ່ພັດທະນາວຽກງານກິລາ-ກາຍະກຳ ໃຫ້ຕິດພັນກັບການພັດທະນາຊັບພະຍາກອນມະນຸດ; ພ້ອມກັນນັ້ນ, ກໍຕັ້ງໜ້າພັດທະນານັກກິລາ ຂອງນະຄອນຫລວງວຽງຈັນ ເພື່ອກຽມຄວາມພ້ອມເຂົ້າຮ່ວມການແຂ່ງຂັນ ແລະ ເປັນເຈົ້າຫລຽນຄຳ ກິລາແຫ່ງຊາດ ຢູ່ທີ່ແຂວງ ຊຽງຂວາງ ແລະ ເຂົ້າຮ່ວມແຂ່ງຂັນລາຍການຕ່າງໆ ພາຍໃນປະເທດ ແລະ ແຂ່ງຂັນກັບບັນດານະຄອນ ປະເທດເພື່ອນມິດ; ຊຸກຍູ້ແຕ່ລະສະຫະພັນກິລາ ໃຫ້ສ້າງເງື່ອນໄຂຈັດການແຂ່ງຂັນໃນລະດັບນະຄອນຫລວງ ຢ່າງຕໍ່ເນື່ອງ.

28.5 ປຸກລະດົມມວນຊົນ ໃຫ້ຕັ້ງໜ້າປະກອບສ່ວນເຂົ້າໃນການພັດທະນາ ກິລາ ໃຫ້ເຂົ້າສູ່ລະບົບ, ລະບຽບການທີ່ຊັດເຈນ ທັງເປັນຂະບວນຟົດຟື້ນກວ່າເກົ່າ ເພື່ອໃຫ້ສາມາດຍາດໄດ້ຫຼຽນໄຊໃນລາຍການແຂ່ງຂັນລະດັບປະເທດ.

28.6 ສະຫຼຸບຖອດຖອນບົດຮຽນ ການຈັດຕັ້ງປະຕິບັດການແບ່ງຂັ້ນຄຸ້ມຄອງ, ແບ່ງໜ້າທີ່, ຄວາມຮັບຜິດຊອບພາຍໃນຂະແໜງ ການສຶກສາ ແລະ ກິລາ ໂດຍສະເພາະແມ່ນສິດຕົກລົງບັນຫາ ໃນການຄຸ້ມຄອງວຽກງານສຶກສາທິການ ແລະ ກິລາ ໃຫ້ເມືອງ ຢ່າງລະອຽດຈະແຈ້ງ ຕິດພັນກັບການຈັດສັນຄົນ ແລະ

ຈັດສັນງົບປະມານ ຕາມທິດສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ.

28.7 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານການສຶກສາ ແລະ ກິລາ ເພື່ອບັນລຸຕາມຄາດໝາຍ SDGs ແລະ ການສຶກສາເພື່ອທຸກຄົນ (EFA).

28.8 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງມາດຕາ 7 (ຂໍ້ 7.1) ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

28.9 ປະຕິບັດລາຍຮັບວິຊາການ 586 ລ້ານກີບ.

**ມາດຕາ 29: ມອບໃຫ້ພະແນກ ສາທາລະນະສຸກ ນະຄອນຫລວງວຽງຈັນ ປະຕິບັດ ດັ່ງນີ້:**

29.1 ປະຕິບັດນະໂຍບາຍສາທາລະນະສຸກ ຕາມທິດຖືເອົາອະນາໄມກັນພະຍາດ ແລະ ສົ່ງເສີມສຸຂະພາບເປັນຕົ້ນຕໍ, ຖືເອົາການປິ່ນປົວ ແລະ ສະໜອງການບໍລິການສຸຂະພາບຢ່າງທົ່ວເຖິງ, ມີຄຸນນະພາບ, ຍຸຕິທຳ ແລະ ສະເໝີພາບ ເປັນສຳຄັນ .

29.2 ໃຫ້ຄວາມຮູ້ ກ່ຽວກັບ ວຽກງານສຸຂະພາບຈະເລີນພັນ ແກ່ແມ່ຍິງໃນໄວຈະເລີນພັນ.

29.3 ປັບປຸງຂໍ້ມູນສາທາລະນະສຸກຂອງແຕ່ລະບ້ານ ໂດຍປະຕິບັດຕາມແບບຟອມຂອງກະຊວງ ສາທາລະນະສຸກ ວາງອອກ.

29.4 ປ້ອງກັນການລະບາດ ຂອງພະຍາດຕາມລະດູການ ໂດຍການໂຄສະນາສຸຂະສຶກສາ ໃຫ້ປະຊາຊົນມີສ່ວນຮ່ວມໃນການປ້ອງກັນຕົນເອງ ແລະ ຄົນໃນຄອບຄົວ.

29.5 ເຮັດໃຫ້ປະຊາຊົນຊາວ ນະຄອນຫລວງວຽງຈັນ ໄດ້ຮັບໂພຊະນາການທີ່ດີ ແລະ ໂຄສະນາເຜີຍແຜ່ໃຫ້ພົນລະເມືອງ ກິນອາຫານຖືກຫລັກອະນາໄມ, ສູ້ຊົນເຮັດໃຫ້ວຽກງານສາທາລະນະສຸກ ສາມາດເຊື່ອມໂຍງກັບບັນດາປະເທດອາຊຽນ ແລະ ພາກພື້ນໄດ້.

29.6 ສ້າງບ້ານຕົວແບບທາງດ້ານ ສາທາລະນະສຸກ ກ່ຽວກັບວຽກງານ ແມ່ ແລະ ເດັກ, ສັກຢາກັນພະຍາດ, ຕ້ານພະຍາດໄຂ້ຍຸງລາຍ, ອາຫານປອດໄພ, ອານາໄມສິ່ງແວດລ້ອມ, ຈັດຫານ້ຳສະອາດ ແລະ ອື່ນໆ ໃຫ້ໄດ້ 1 ບ້ານ ຕໍ່ 1 ເມືອງ ເພື່ອເປັນຕົວແບບໃຫ້ພາກສ່ວນອື່ນມາຖອດຖອນບົດຮຽນໄດ້.

29.7 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງມາດຕາ 7 (ຂໍ້ 7.2) ແລະ ມາດຕາ 17 ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

29.8 ຄົ້ນຄວ້າພິຈາລະນາແກ້ໄຂ ຂໍ້ແນະນຳຂອງ ອົງການກວດສອບ ປະຈຳພາກກາງ ປະຈຳປີ 2017 ໃຫ້ຄົບຖ້ວນ.

29.9 ປະຕິບັດລາຍຮັບວິຊາການ 10.949 ລ້ານກີບ.

**ມາດຕາ 30: ມອບໃຫ້ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫລວງວຽງຈັນ ປະຕິບັດ ດັ່ງນີ້:**

30.1 ກະກຽມຢ່າງຮອບດ້ານໃຫ້ແກ່ການ ດຳເນີນການອອກອາກາດ ຂອງສະຖານີໂທລະພາບ ນະຄອນຫລວງວຽງຈັນ; ເອົາໃຈໃສ່ປັບປຸງ ແລະ ຄຸ້ມຄອງສະຖານີ ວິທະຍຸ ນະຄອນຫລວງວຽງຈັນ ໃຫ້ເຂົ້າສູ່ລະບົບ ແລະ ຮັບປະກັນຄຸນນະພາບ; ປັບປຸງ ແລະ ຍົກລະດັບວຽກງານການພິມ-ຈຳໜ່າຍ ຂອງສື່ໜັງສືພິມວຽງຈັນໃໝ່, ວຽງຈັນທຸລະກິດ-ສັງຄົມ ໃຫ້ມີຄຸນນະພາບສູງ.

30.2 ສຸມໃສ່ຍົກລະດັບການອະນຸລັກຮັກສາ, ປະຕິສັງຂອນບູຮານສະຖານ ແລະ ຄຸ້ມຄອງການເຄື່ອນໄຫວທຸລະກິດບໍລິການດ້ານວັດທະນາທຳ ໃຫ້ແຂງແຮງກວ່າເກົ່າ.

30.3 ປະຕິບັດການລະດົມຂົນຂວາຍປວງຊົນສາມັກຄີ ສ້າງຊີວິດວັດທະນາທຳເຂົ້າເຖິງແຕ່ລະຄອບຄົວ, ພື້ນທີ່ປະຊາຊົນ, ສຳນັກງານອົງກອນ, ໂຮງຈັກໂຮງງານ, ສູ້ຊົນສ້າງຄອບຄົວວັດທະນາທຳ, ຊຸກຍູ້ຍ່າງແຂງແຮງການເຄື່ອນໄຫວທາງດ້ານວັດທະນະທຳ-ສັງຄົມ; ປັບປຸງ ແລະ ພັດທະນາບັນດາກິດຈະການຕ່າງໆ ຂອງງານບຸນປະເພນີ.

30.4 ຮີບຮ້ອນປັບປຸງກົງຈັກ ແລະ ກົນໄກ ການເຄື່ອນໄຫວ ແລະ ບໍລິການ ກ່ຽວກັບ ວຽກງານທ່ອງທ່ຽວນັບທັງພາກລັດ ແລະ ພາກທຸລະກິດ ໂດຍສ້າງແຜນພັດທະນາເຂດທ່ອງທ່ຽວຢ່າງມີຈຸດສຸມ, ສ້າງວົງຈອນການທ່ອງທ່ຽວເຊື່ອມຕໍ່ຢ່າງຕັ້ງໜ້າ, ເລັ່ງໃສ່ຍົກລະດັບດ້ານວິຊາການ ການຄຸ້ມຄອງການທ່ອງທ່ຽວ ແລະ ຍົກລະດັບຄວາມຮູ້ທາງດ້ານພາສາຕ່າງປະເທດ ໃຫ້ແກ່ພະນັກງານນຳທ່ຽວທຸກລະດັບ.

30.5 ຖືເອົາກາລະໂອກາດ ປີທ່ອງທ່ຽວລາວ ຍູ້ແຮງວຽກງານການທ່ອງທ່ຽວ ດ້ວຍການເອົາໃຈໃສ່ໂຄສະນາເຜີຍແຜ່ຄວາມໝາຍຄວາມສຳຄັນ ຂອງປີທ່ອງທ່ຽວ ແລະ ວຽກງານທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດຢ່າງກວ້າງຂວາງ, ຊຸກຍູ້ ແລະ ປຸກລະດົມພາກສ່ວນທຸລະກິດການທ່ອງທ່ຽວ ແລະ ປະຊາຊົນເຂົ້າມາມີສ່ວນຮ່ວມ ໃນການພັດທະນາການທ່ອງທ່ຽວ ເພື່ອແນໃສ່ດຶງດູດນັກທ່ອງທ່ຽວໃຫ້ໄດ້ຕາມແຜນການທີ່ວາງໄວ້.

30.6 ເປີດຂະບວນການແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ຕິດພັນກັບຮັກນະຄອນຫລວງວຽງຈັນ ແລະຕ້ອນຮັບປີທ່ອງທ່ຽວລາວ; ສົມທົບກັບບັນດາເມືອງ ເພື່ອເຜີຍແຜ່ຄວາມໝາຍ, ຄວາມສຳຄັນ ຂອງປີທ່ອງທ່ຽວລາວ 2018; ພ້ອມທັງ ຈັດສັນຄວາມເປັນລະບຽບຮຽບຮ້ອຍ ໃນຂົງເຂດວັດທະນະທຳ-ສັງຄົມ.

30.7 ຈັດສຳມະນາເປີດກວ້າງ ລະຫວ່າງອົງການປົກຄອງ, ກະຊວງສູນກາງ ແລະ ທຸກກຸ່ມທຸລະກິດໃນວຽກງານດ້ານການບໍລິການ ດ້ານວັດທະນະທຳ-ສັງຄົມ; ພ້ອມທັງຝຶກອົບຮົມ ແລະ ສົມທົບສະຖາບັນການສຶກສາ ເພື່ອສ້າງພະນັກງານນຳທ່ຽວພາສາຕ່າງປະເທດ ທີ່ມີຄຸນະພາບ.

30.8 ບູລະນະປະຕິສັງຂອນ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍ ບໍລິເວນພະທາດຫລວງ, ຈັດສັນສວນປະຕູໄຊ ໃຫ້ມີສີສັນສວຍງາມ ດ້ວຍການປະດັບປະດາດອກໄຟແສງສີ; ຈັດສັນສະຖານທີ່ທ່ອງທ່ຽວ ແລະ ປັບປຸງການບໍລິການນຳທ່ຽວ ພາຍໃນຫໍພິພິທະພັນຕ່າງໆ ແລະ ວັດວາອາຮາມຕ່າງໆທີ່ມີຊື່ສຽງໃນນະຄອນຫລວງວຽງຈັນ.

30.9 ຈັດສັນເນື້ອໃນການວາງສະແດງ ແລະ ສ້າງສິ່ງໂຄສະນາອະທິບາຍນຳທ່ຽວໃຫ້ມີຄວາມຈູງໃຈ.

30.10 ສຸມໃສ່ຮຽກການລົງທຶນ ໃສ່ແຫລ່ງທ່ອງທ່ຽວທຳມະຊາດ ແລະ ສ້າງກິດຈະກຳ ເປັນຕົ້ນ: ແຫລ່ງທ່ອງທ່ຽວຕາດຊອນ, ສວນພຶກສາ, ແຫລ່ງທ່ອງທ່ຽວພູເຂົາຄວາຍ, ປັບປຸງແຫລ່ງທ່ອງທ່ຽວທາງນ້ຳ (ນ້ຳງື່ມ, ບຶງທາດຫລວງ...).

30.11 ໂຄສະນາກິດຈະກຳບຸນປະເພນີທາງສາສະໜາ ແລະ ຕາມຮີດຄອງປະເພນີອັນດີງາມຂອງຊາດ ເປັນຕົ້ນການສູດມົນ, ນັ່ງສະມາທິ, ໃສ່ບາດຕາມບຸນປະເພນີ.

30.12 ສ້າງລາຍການຮາຕີວຽງຈັນ: ນັ່ງຊົມຕາເວັນຕົກແຄມແມ່ນ້ຳຂອງ, ຂີ່ລົດຊົມຕົວເມືອງລຽບຕາມແຄມຂອງ, ທ່ຽວຊົມສະຖານທ່ອງທ່ຽວທີ່ສຳຄັນ ແລະ ກິນອາຫານວຽງຈັນ ແລະ ລາຍການອາລຸນວຽງຈັນ: ຕັກບາດຕອນເຊົ້າ, ຫລິ້ນກິລາຍາມເຊົ້າ.

30.13 ຈັດງານເທດສະການອາຫານວຽງຈັນ: ຈັດງານປະກວດອາຫານວຽງຈັນ ໂດຍເຊີນບັນດາໂຮງແຮມ ແລະຮ້ານອາຫານຕ່າງໆ ເຂົ້າຮ່ວມ.

30.14 ຈັດກິດຈະກຳຈຳນວນໜຶ່ງ ເພື່ອດຶງດູດການທ່ອງທ່ຽວ: ການແລ່ນມິດຕະພາບ, ການຂີ່ລົດຖີບ, ແຂ່ງຊ່ວງເຮືອ ເປັນຕົ້ນ.

30.15 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງມາດຕາ 7 (ຂໍ້ 7.3) ແລະ ມາດຕາ 17 ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

30.16 ປະຕິບັດຄາດໝາຍແຜນຈັດສັນຄວາມເປັນລະບຽບຮຽບຮ້ອຍ ຕາມຂໍ້ຕົກລົງຂອງເຈົ້າຄອງ ນວ, ສະບັບເລກທີ 1184/ຈນວ, ສະບັບລົງວັນທີ 20 ທັນວາ 2017 ມາດຕາ 10.

30.17 ຄົ້ນຄວ້າພິຈາລະນາແກ້ໄຂ ຂໍ້ແນະນຳຂອງ ອົງການກວດສອບ ປະຈຳພາກກາງ ປະຈຳປີ 2017 ໃຫ້ຄົບຖ້ວນ.

30.18 ປະຕິບັດລາຍຮັບວິຊາການ 5.500 ລ້ານກີບ.

**ມາດຕາ 31: ມອບໃຫ້ພະແນກ ແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫລວງວຽງຈັນ ປະຕິບັດດັ່ງນີ້:**

31.1 ສ້າງມາດຖານສີມືແຮງງານ ໂດຍການທົດສອບ-ອອກໃບຢັ້ງຢືນຮອງຮັບ ລະດັບສີມືແຮງງານ ລະດັບພື້ນຖານ ແລະ ລະດັບຂັ້ນ 1 ໃຫ້ໄດ້ 100 ຄົນ (ໃນ 3 ສາຂາວິຊາຊີບ ຄື: ຊ່າງໄຟຟ້າອຸດສາຫະກຳ, ຊ່າງກໍ່-ໂບກ ແລະ ປຸງແຕ່ງອາຫານ);

31.2 ຈັດການແຂ່ງຂັນສີມືແຮງງານ ຂັ້ນນະຄອນຫຼວງວຽງຈັນ ໃຫ້ໄດ້ 1 ຄັ້ງ (ໃນ 4 ສາຂາວິຊາຊີບ ຄື: ຊ່າງໄຟຟ້າອາຄານ, ຊ່າງກໍ່-ໂບກ, ຕັດຫຍິບ ແລະ ປຸງແຕ່ງອາຫານ);

31.3 ຈັດຝຶກອົບຮົມເຄື່ອນທີ່ ໃຫ້ຊາວໜຸ່ມຜູ້ດ້ອຍໂອກາດ ບໍ່ມີເງື່ອນໄຂເຂົ້າຮຽນຢູ່ສະຖາບັນການສຶກສາຕ່າງໆ ທີ່ຢູ່ຫ່າງໄກສອກຫຼີກ ໃຫ້ໄດ້ 100-500 ຄົນ ແລະ ຝຶກອົບຮົມກັບທີ່ ໃຫ້ໄດ້ 1.000 ຄົນ;

31.4 ປັບປຸງຈຸດບໍລິການຈັດຫາງານເພື່ອສະໜອງກຳລັງແຮງງານ ທີ່ຕ້ອງການມີວຽກເຮັດງານທຳ ໃຫ້ໄດ້ຢ່າງໜ້ອຍ 500 ຄົນ;

31.5 ຂະຫຍາຍຕາໜ່າງຈຸດບໍລິການຈັດຫາງານ ໃຫ້ໄດ້ 4 ເມືອງ ຄື: ເມືອງສັງທອງ, ປາກງື່ມ, ຫາດຊາຍຟອງ ແລະ ນາຊາຍທອງ, ລົງເຄື່ອນໄຫວການບໍລິການຈັດຫາງານເຄື່ອນທີ່ ໃຫ້ໄດ້ຢ່າງໜ້ອຍ 10 ຄັ້ງ;

31.6 ຈັດງານຕະຫຼາດນັດແຮງງານ ໃຫ້ໄດ້ 1 ຄັ້ງ; ດັດສົມ ລະຫວ່າງ ຄວາມຕ້ອງການແຮງງານ ແລະ ການສະໜອງ ໂດຍສະເພາະແມ່ນກຳລັງແຮງງານທີ່ເພີ່ມຂຶ້ນໃໝ່ ໃຫ້ໄດ້ປະມານ 350 ຄົນ ເຂົ້າສູ່ຕະຫຼາດແຮງງານ;

31.7 ເອົາໃຈໃສ່ໂຄສະນາ ແລະ ເຜີຍແຜ່ນິຕິກຳເປັນຕົ້ນ: ກົດໝາຍແຮງງານສະບັບປັບປຸງ, ຂໍ້ຕົກລົງ ວ່າດ້ວຍຄ່າແຮງງານຂັ້ນຕ່ຳ ຂອງຜູ້ອອກແຮງງານຢູ່ ສປປ ລາວ ໃຫ້ບັນດາຫົວໜ່ວຍທຸລະກິດ ທີ່ນະຄອນຫຼວງວຽງຈັນ ໃຫ້ໄດ້ 250 ຫົວໜ່ວຍ;

31.8 ໄກ່ເກ່ຍຂໍ້ຂັດແຍ່ງແຮງງານ ຂອງ ຈຳນວນທີ່ໄດ້ຮັບການຮ້ອງຮຽນ ໃຫ້ໄດ້ 80% ຂຶ້ນໄປ;

31.9 ລຶບລ້າງການນຳໃຊ້ແຮງງານເດັກ ໃຫ້ໄດ້ 90%;

31.10 ຄຸ້ມຄອງແຮງງານຕ່າງປະເທດ ທີ່ມາເຮັດວຽກຢູ່ ນະຄອນຫຼວງວຽງຈັນ ໃຫ້ໄດ້ 60%;

31.11 ສູ້ຊົນເຮັດໃຫ້ຫົວໜ່ວຍແຮງງານໄດ້ມາດຕະຖານແຮງງານແຫ່ງຊາດ ໃຫ້ໄດ້ 50 ຫົວໜ່ວຍ;

31.12 ສ້າງໂຮງຈັກໂຮງງານຕົວແບບ ໃນການປະຕິບັດລະບຽບກົດໝາຍແຮງງານ ໃຫ້ໄດ້ 12 ຫົວໜ່ວຍ;

31.13 ປະສານສົມທົບກັບ ກົມຄອງຄຸ້ມແຮງງານ ກະຊວງ ຮສສ ແລະ ຫ້ອງການ ຮສສ ເມືອງ 9 ຕົວເມືອງ ລົງຕິດຕາມ-ກວດກາ ບັນດາຫົວໜ່ວຍແຮງງານ ໃຫ້ປະຕິບັດຕາມກົດລະບຽບກົດໝາຍແຮງງານ ໃຫ້ໄດ້ 300 ຫົວໜ່ວຍ;

31.14 ຫົວໜ່ວຍແຮງງານທີ່ມີແຮງງານແຕ່ 5 ຄົນຂຶ້ນໄປ ມີສັນຍາແຮງງານ ໃຫ້ກວມເອົາ 500 ຫົວໜ່ວຍ ແລະ ມີກົດລະບຽບນຳໃຊ້ແຮງງານ ພາຍໃນຫົວໜ່ວຍແຮງງານ ທີ່ຖືກຕ້ອງຕາມກົດໝາຍ ໃຫ້ກວມເອົາ 150 ຫົວໜ່ວຍ;

31.15 ໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວກັບ ວຽກງານປະກັນສັງຄົມ ຢ່າງກວ້າງຂວາງ ຂະຫຍາຍອັດຕາການປົກຄຸມປະກັນສັງຄົມສໍາລັບຜູ້ອອກແຮງງານ ທີ່ເຮັດວຽກໃນຫົວໜ່ວຍແຮງງານຕ່າງໆ ໃນຂອບເຂດນະຄອນຫຼວງວຽງຈັນ ໃຫ້ໄດ້ 70%;

31.16 ປະຕິບັດນະໂຍບາຍຕໍ່ຜູ້ອາຍຸສູງ ໄດ້ເຂົ້າເຖິງກິດຈະກໍາຕ່າງໆ ຂັ້ນພື້ນຖານ ເຊັ່ນ: ການຈັດກິດຈະກໍາພົບປະເຊີ່ງກັນ ແລະ ກັນ, ງານສະເຫຼີມສະຫຼອງວັນສາກົນຜູ້ອາຍຸສູງ ແລະ ວັນຄົນພິການແຫ່ງຊາດ ໃຫ້ໄດ້ຈໍານວນ 1.500 ທ່ານ;

31.17 ໃຫ້ການຊ່ວຍເຫຼືອ ແລະ ພັດທະນາຄຸນນະພາບຊີວິດຂອງຜູ້ດ້ອຍໂອກາດ, ຜູ້ປະສົບໄພພິບັດ ແລະ ຜູ້ຕົກເປັນເຫຍື່ອຂອງການຄ້າມະນຸດໃຫ້ທັນການ ແລະ ວ່ອງໄວ ໂດຍຈະໄດ້ຈັດຝຶກອົບຮົມໃຫ້ຕາໜ່າງປົກປ້ອງເດັກ ຈໍານວນ 72 ບ້ານ ໃຫ້ມີປະສິດທິຜົນ.

31.18 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງມາດຕາ 7 (ຂໍ້ 7.4 ແລະ 7.5) ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

31.19 ຄົ້ນພິຈາລະນາແກ້ໄຂຂໍ້ແນະນໍາຂອງ ອົງການກວດສອບ ປະຈໍາພາກກາງ ປະຈໍາປີ 2017 ໃຫ້ຄົບຖ້ວນ.

31.20 ປະຕິບັດລາຍຮັບວິຊາການ 261 ລ້ານກີບ (ລາຍຮັບວິຊາການ ສູນພັດທະນາ ສີມືແຮງງານ ນວ).

**ມາດຕາ 32: ມອບໃຫ້ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ນະຄອນຫລວງວຽງຈັນ ປະຕິບັດ ດັ່ງນີ້:**

32.1 ສຸມໃສ່ຄົ້ນຄວ້າ ແລະ ນໍາໃຊ້ຜົນສໍາເລັດຂອງການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ທີ່ທັນສະໄໝຂອງພາກພື້ນ ແລະ ສາກົນ ໃນການພັດທະນາເສດຖະກິດ-ສັງຄົມ ຂອງນະຄອນຫຼວງວຽງຈັນ.

32.2 ສ້າງຄວາມເຂັ້ມແຂງດ້ານວຽກງານວິທະຍາສາດ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ, ຊັບສິນທາງປັນຍາ, ມາດຕະຖານ ແລະ ວັດແທກ, ວິທະຍາສາດ ແລະ ເຕັກໂນໂລຊີນະວັດຕະກໍາ ໃຫ້ໄດ້ 30% ຂຶ້ນໄປໃນ 9 ຕົວເມືອງ.

32.3 ສືບຕໍ່ປະຕິບັດການກວດກາພະຫະນະວັດແທກ, ຄຸ້ມຄອງ, ສົ່ງເສີມການຜະລິດສິນຄ້າ ໃຫ້ໄດ້ມາດຕະຖານແຫ່ງຊາດ ພ້ອມທັງປົກປ້ອງຜູ້ຊົມໃຊ້ ແລະ ຜູ້ຜະລິດ.

32.4 ເປັນເຈົ້າການໃນການຄົ້ນຄວ້າ ການນໍາໃຊ້ ICT ເຂົ້າໃນການຄຸ້ມຄອງ ແລະ ບໍລິຫານລັດ ແລະ ພາກສ່ວນທຸລະກິດໃຫ້ໄດ້ 30% ຂຶ້ນໄປ. ໂຄງການເຮັດທົດລອງຮ່ວມກັບ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

32.5 ຊຸກຍູ້ສົ່ງເສີມການຜະລິດ ໃຫ້ມີປະສິດທິຜົນໂດຍການນໍາໃຊ້ ວິທະຍາສາດ ແລະ ເຕັກໂນໂລຊີພະລັງງານທົດແທນ ແລະ ເຕັກໂນໂນຊີ ຊີວະພາບຂອງບັນດາຫົວໜ່ວຍທຸລະກິດ 5 ຕົວເມືອງ ໃຫ້ໄດ້ໂດຍພື້ນຖານ.

32.6 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງມາດຕາ 4 (ຂໍ້ 4.5) ແລະ ມາດຕາ 9 (ຂໍ້9.9) ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

32.7 ປະຕິບັດລາຍຮັບວິຊາການ 10 ລ້ານກີບ.

**ມາດຕາ 33: ມອບໃຫ້ ພະແນກ ຍຸຕິທໍາ ນະຄອນຫລວງວຽງຈັນ ປະຕິບັດ ດັ່ງນີ້:**

33.1 ສືບຕໍ່ເປັນໃຈກາງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າກ່ຽວກັບການສ້າງນິຕິກໍາຂັ້ນນະຄອນຫລວງ.

33.2 ປະເມີນຜົນການປະຕິບັດວຽກງານຍຸຕິທຳ ຮາກຖານ ແລະ ວຽກ 3 ສ້າງ ໃນໄລຍະຜ່ານມາ ແລະ ສະຫຼຸບການແຂ່ງຂັນຮັກຊາດພັດທະນາ ໃນຂະແໜງຍຸຕິທຳ, ສືບຕໍ່ຊີ້ນຳ ນຳພາວຽກງານຍຸຕິທຳຮາກຖານ ໃຫ້ຮັບປະກັນຄຸນນະພາບ ແລະ ປະສິດທິຜົນກວ່າເກົ່າ.

33.3 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງມາດຕາ 10 (ຂໍ້ 10.4) ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

33.4 ປະຕິບັດລາຍຮັບວິຊາການ 170 ລ້ານກີບ.

**ມາດຕາ 34: ມອບໃຫ້ພະແນກ ພາຍໃນ ນະຄອນຫລວງວຽງຈັນ ປະຕິບັດ ດັ່ງນີ້:**

34.1 ສືບຕໍ່ສ້າງຖານຂໍ້ມູນສະຖິຕິ ເພື່ອເກັບກຳ, ປັບປຸງ, ວິໄຈຂໍ້ມູນ, ສັງລວມ ແລະ ລາຍງານ ຂໍ້ມູນຂ່າວສານທົ່ວຂະແໜງການພາຍໃນ ໃນແຕ່ລະໄລຍະ, ສ້າງ ແລະ ປັບປຸງຕາໜ່າງສະຖິຕິ ເຊັ່ນ: ຖານຂໍ້ມູນຄຸ້ມຄອງພົນລະເມືອງ, ຖານຂໍ້ມູນຄຸ້ມຄອງລັດຖະກອນ ຂອງນະຄອນຫລວງວຽງຈັນ ໃຫ້ມີປະສິດທິພາບ ເພື່ອຫັນໄປສູ່ທັນສະໄໝ ເທື່ອລະກ້າວ.

34.2 ສືບຕໍ່ຄົ້ນຄວ້າສ້າງແຜນກຳນົດຈຳນວນພະນັກງານລັດຖະກອນ ຂອງນະຄອນຫລວງວຽງຈັນ ຮອດປີ 2020 ໃຫ້ສຳເລັດ.

34.3 ສືບຕໍ່ຮ່ວມກັບກະຊວງ ພາຍໃນ ປັກຫຼັກໝາຍເຂດແດນ ລະຫວ່າງ ເມືອງກັບເມືອງ, ນະຄອນຫລວງກັບບັນດາແຂວງ ແລະ ປັກຫຼັກໝາຍຊາຍແດນລະຫວ່າງປະເທດ ຕາມລຳແມ່ນ້ຳຂອງ.

34.4 ສືບຕໍ່ປັບປຸງໜ່ວຍງານການບໍລິການປະຕູດຽວ ຢູ່ອົງການບໍລິຫານລັດຂັ້ນນະຄອນຫລວງ; ພ້ອມທັງຊຸກຍູ້ເມືອງທີ່ມີ ເງື່ອນໄຂສ້າງຕັ້ງໜ່ວຍງານບໍລິການຜ່ານກົນໄກປະຕູດຽວ.

34.5 ສືບຕໍ່ປະຕິບັດວຽກງານ 3 ສ້າງກໍຄື: ການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ.

34.6 ຕັ້ງໜ້າປະຕິບັດສ້າງພະແນກ 5 ດີກໍຄື: ເປັນຫົວໜ່ວຍຄຸ້ມຄອງ-ບໍລິການຮັບໃຊ້ປະຊາຊົນດີ, ປະຕິບັດລາຍຮັບວິຊາການດີ, ລົງຮາກຖານດີ, ມີຖັນແຖວລັດຖະກອນດີ ແລະ ເປັນຫົວໜ່ວຍປະຢັດດີ.

34.7 ຕິດຕາມກວດກາ ແລະ ຊຸກຍູ້ການສ້າງເທດສະບານ 3 ເມືອງ ຂອງນະຄອນຫຼວງວຽງຈັນ.

34.8 ຄົ້ນຄວ້າ ແລະ ປະເມີນລັດຖະກອນ ປະຈຳປີ 2018.

34.9 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງມາດຕາ 10 (ຂໍ້ 10.1, 10.2 ແລະ 10.3) ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

34.10 ປະຕິບັດລາຍຮັບວິຊາການ ............... ລ້ານກີບ.

**ມາດຕາ 35: ມອບໃຫ້ກອງບັນຊາການທະຫານ ແລະ ກອງບັນຊາການ ປ້ອງກັນຄວາມສະຫງົບ ນະຄອນຫລວງວຽງຈັນ ປະຕິບັດ ດັ່ງນີ້:**

35.1 ເພີ່ມທະວີວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ; ພ້ອມທັງແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ໃຫ້ຫລຸດລົງ.

35.2 ເພີ່ມທະວີການຕິດຕາມກວດກາ, ຄຸ້ມຄອງກ່ຽວກັບການນຳໃຊ້ເຕັກໂນໂລຊີການສື່ສານ, ສື່ເອເລັກໂຕນິກທີ່ບໍ່ຖືກຕ້ອງ ແລະ ເປັນໄພຕໍ່ຄວາມໝັ້ນຄົງທາງສັງຄົມ-ການເມືອງ.

35.3 ຕິດຕາມ, ກວດກາ, ສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດຄຳສັ່ງແນະນຳຂອງຄະນະປ້ອງກັນຊາດ, ປ້ອງກັນຄວາມສະຫງົບສູນກາງ ກ່ຽວກັບ ການເພີ່ມທະວີການຊີ້ນຳວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບໃນສະພາບການໃໝ່.

35.4 ເພີ່ມທະວີການສຶກສາອົບຮົມການເມືອງແນວຄິດ, ທັດສະນະຫຼັກໝັ້ນ, ຄຸນສົມບັດສິນທາປະຕິວັດ, ຈັນຍາບັນ, ຈັນຍາທຳຂອງນາຍ ແລະ ພົນຕຳຫຼວດ ໃຫ້ເລິກເຊິ່ງ, ມີຈຸດສຸມ, ສອດຄ່ອງກັບແຕ່ລະເປົ້າໝາຍ ແລະ ມີການປະເມີນຜົນແຕ່ລະໄລຍະ.

35.5 ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ, ກົນໄກ, ລະບອບແບບແຜນວິທີເຮັດວຽກ ຂອງກອງບັນຊາການ ປກສ ນະຄອນຫຼວງ ຮັບປະກັນຄຸນນະພາບກຳລັງ ປກສ ທີ່ເຂັ້ມແຂງ, ກຽມພ້ອມປະຕິບັດໜ້າທີ່ໃຫ້ເຂັ້ມງວດ ທັນກັບເວລາ ແລະ ສະພາບການ.

35.6 ເພີ່ມທະວີເອົາໃຈໃສ່ໃນການຕິດຕາມກວດກາ ການຈັດຕັ້ງປະຕິບັດ ກົດໝາຍ ຢູ່ໃນຄ້າຍຄຸມຂັງ-ດັດສ້າງ ໂດຍສະເພາະ ແມ່ນການກັກຂັງຜູ້ຖືກຫາ ຫຼື ນັກໂທດ, ການປ່ອຍຕົວນັກໂທດ ແລະ ການປະກັນຕົວນັກໂທດ ຕ້ອງປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

35.7 ເພີ່ມທະວີປະສານສົມທົບລະຫວ່າງ ບັນດາກົມວິຊາສະເພາະຂອງ ກະຊວງ ປກສ, ກອງບັນຊາການທະຫານ ນະຄອນຫຼວງວຽງຈັນ ແລະ ອຳນາດການປົກຄອງທຸກຂັ້ນ, ຫັນເອົາກຳລັງລົງກໍ່ສ້າງຮາກຖານການເມືອງ, ປັບປຸງ ປກສ ບໍລິການປະຊາຊົນ, ປກສ ບ້ານ ແລະ ສຶກສາອົບຮົມ-ປຸກລະດົມປະຊາຊົນເຂົ້າຮ່ວມ ປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ; ແກ້ໄຂບັນຫາຄົນຕ່າງປະເທດ ທີ່ລັກລອບເຂົ້າມາປະກອບອາຊີບ ຫຼື ອອກແຮງງານບໍ່ຖືກຕ້ອງ ແລະ ເຄື່ອນໄຫວກໍ່ຄວາມບໍ່ສະຫງົບ ຢູ່ນະຄອນຫຼວງວຽງຈັນ.

35.8 ສືບຕໍ່ເອົາໃຈໃສ່ວຽກງານສືບສວນ-ສອບສວນ ເພື່ອແກ້ໄຂຄະດີໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ ແລະ ຍຸຕິທຳ ເປັນຕົ້ນ ແມ່ນການແກ້ໄຂຄະດີ, ການໄກ່ເກ່ຍຄະດີ ແລະ ການແກ້ໄຂຄຳຮ້ອງຟ້ອງປະຊາຊົນ ບໍ່ໃຫ້ຊັກຊ້າ ແລະ ແກ່ຍາວເວລາ.

35.9 ເພີ່ມທະວີສຸມໃສ່ແກ້ໄຂບັນດາສາເຫດ ຂອງປະກົດການຫຍໍ້ທໍ້ໃນສັງຄົມ ທີ່ເກີດຂຶ້ນບົນພື້ນຖານກົດໝາຍ ແລະ ບັນດານິຕິກຳລຸ່ມກົດໝາຍທີ່ກ່ຽວຂ້ອງ.

35.10 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງມາດຕາ 7 (ຂໍ້ 7.5) ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

35.11 ປະຕິບັດຄາດໝາຍແຜນຈັດສັນຄວາມເປັນລະບຽບຮຽບຮ້ອຍ ຕາມຂໍ້ຕົກລົງຂອງເຈົ້າຄອງ ນວ, ສະບັບເລກທີ 1184/ຈນວ, ສະບັບລົງວັນທີ ມາດຕາ 10.

35.12 ມອບໃຫ້ກອງບັນຊາການ ປກສ ປະຕິບັດລາຍຮັບ ວິຊາການ ................. ລ້ານກີບ.

**ມາດຕາ 36: ມອບໃຫ້ ພະແນກ ການຕ່າງປະເທດ ນະຄອນຫລວງວຽງຈັນ ປະຕິບັດດັ່ງນີ້:**

36.1 ການຮ່ວມມື ນະຄອນຫຼວງວຽງຈັນ ແລະ ບັນດານະຄອນ ຂອງ ສສ ຫວຽດນາມ:

- ສືບຕໍ່ຈັດຕັ້ງປະຕິບັດໂຄງການສ້າງຮ້ານອາຫານ ນະຄອນຫຼວງວຽງຈັນ ຢູ່ ນະຄອນຫຼວງຮ່າໂນ້ຍ ແລະ ຮ້ານອາຫານຮ່າໂນ້ຍ ຢູ່ນະຄອນຫຼວງວຽງຈັນ ໃຫ້ສຳເລັດໃນປີ 2018.
- ສຸມໃສ່ຈັດຕັ້ງປະຕິບັດໂຄງການຮ່ວມມື ທາງດ້ານການຈັດຝຶກອົບຮົມ ກ່ຽວກັບວຽກງານການຈັດເກັບລາຍຮັບ ເພື່ອຍົກລະດັບຄວາມສາມາດດ້ານການເງິນ ແລະ ການເກັບລາຍຮັບໃຫ້ແກ່ພະນັກງານ ການເງິນ ນະຄອນຫຼວງວຽງຈັນ ໂດຍແມ່ນໂຄງການຮ່ວມມືລະຫວ່າງ ນະຄອນຫຼວງວຽງຈັນ ແລະ ນະຄອນໂຮ່ຈິມິນ.
- ສືບຕໍ່ປະຕິບັດໂຄງການຮ່ວມມື ລະຫວ່າງ ນະຄອນຫຼວງວຽງຈັນ ແລະ ນະຄອນໂຮ່ຈິມິນ ກ່ຽວກັບການລ້ຽງງົວພັນຊີ້ນ ເພື່ອສົ່ງຂາຍ ສສ ຫວຽດນາມ (ໂຮ່ຈິ່ມິນ).
- ປະສານສົມທົບກັບນະຄອນໂຮ່ຈິ່ມິນ ກ່ຽວກັບໂຄງການສ້າງຕັ້ງຮ້ານອາຫານວຽງຈັນ ຢູ່ນະຄອນໂຮ່ຈິ່ມິນ ສສ ຫວຽດນາມ ໃຫ້ເປັນຮູບປະທຳ.

- ປະຕິບັດໂຄງການ ຮ່ວມມືຂຸດຄົ້ນອັດຖິ ຊີ່ງອຸຊານທະຫານອາສາສະໝັກ ທີ່ມາປະຕິບັດໜ້າທີ່ ໃນພາລະກິດຕໍ່ສູ້ກູ້ຊາດ ທີ່ໄດ້ເສຍສະຫລະຊີວິດໃນປາງສົງຄາມ ຢູ່ ນະຄອນຫລວງວຽງຈັນ ສົ່ງກັບຄືນແຂວງ ຮ່າຕິ່ງ ສສ ຫວຽດນາມ.

36.2 ການຮ່ວມມື ນະຄອນຫຼວງວຽງຈັນ ກັບ ບັນດານະຄອນ ຂອງ ສປ ຈີນ.

- ສືບຕໍ່ປະສານສົມທົບກັບ ນະຄອນຫຼວງປັກກິ່ງ, ສປ ຈີນ ກ່ຽວກັບການສະເໜີຂໍການຊ່ວຍເຫຼືອໃນການສ້າງສວນມິດຕະພາບລາວ-ປັກກິ່ງ, ຕຶກວາງສະແດງຜັງເມືອງວຽງຈັນ, ການບໍາບັດນໍ້າເສຍ-ນໍ້າເປື້ອນໃນຕົວເມືອງ, ການຍົກລະດັບລະບົບການເກັບມ້ຽນ-ກໍາຈັດຂີ້ເຫຍື້ອໃນຕົວເມືອງ.
- ສະເໜີຂໍການຊ່ວຍເຫຼືອພາຫະນະລົດບົດໜັບຂີ້ເຫຍື້ອ, ເຄື່ອງກວດທາດເຫຼົ້າ ພ້ອມທັງຂໍໃຫ້ວິຊາການມາຝຶກອົບຮົມວິທີການນໍາໃຊ້ ຢູ່ ນະຄອນຫຼວງວຽງຈັນ.
- ສະເໜີປ່ອຍສິນເຊື່ອເງິນກູ້ຢືມດອກເບ້ຍຕໍ່າ ໃຫ້ປະຊາຊົນນະຄອນຫຼວງວຽງຈັນ ໃນເຂດຊົນນະບົດ ແລະການລະດົມນັກລົງທຶນມາປຸກຢາພື້ນເມືອງຢູ່ ນະຄອນຫຼວງວຽງຈັນ.

36.3 ການຮ່ວມມື ນະຄອນຫຼວງວຽງຈັນ ກັບ ບັນດາແຂວງ ຂອງ ຣາຊະອານາຈັກໄທ.

- ກະກຽມເຂົ້າຮ່ວມກອງປະຊຸມຄະນະກໍາມະການຮ່ວມມື ຮັກສາຄວາມສະຫງົບຮຽບຮ້ອຍ ຕາມຊາຍແດນ ລາວ-ໄທ ຂັ້ນທ້ອງຖິ່ນລະຫວ່າງ ນະຄອນຫຼວງວຽງຈັນ ກັບແຂວງໜອງຄາຍ ປະຈໍາປີ 2018.
- ສືບຕໍ່ປະສານງານກັບ ນະຄອນຫຼວງບາງກອກ ເພື່ອປຶກສາຫາລື ແລະ ແລກປ່ຽນບົດຮຽນ ກ່ຽວກັບການຄຸ້ມຄອງທີ່ດິນຕົວເມືອງ.

36.4 ການຮ່ວມມື ນະຄອນຫຼວງວຽງຈັນ ກັບ ຣາຊະອານາຈັກກໍາປູເຈຍ ເດີນທາງໄປແລກປ່ຽນ ແລະ ຖອດຖອນບົດຮຽນກ່ຽວກັບການພັດທະນາການທ່ອງທ່ຽວ ຢູ່ ນະຄອນສຽມຣຽບ ແລະ ກະກຽມຮັບຕ້ອນຄະນະຜູ້ແທນຂັ້ນສູງນະຄອນຫຼວງພະນົມເປັນ ທີ່ຈະເດີນທາງມາຢ້ຽມຢາມທາງການ ຢູ່ ນະຄອນຫຼວງວຽງຈັນ.

36.5 ການຮ່ວມມື ນະຄອນຫຼວງວຽງຈັນ ກັບ ນະຄອນຫລວງບູດາແປດສ, ປະເທດຮົງກາລີ:

- ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ໂຄງການ ບໍາບັນນໍ້າເປື້ອນ-ນໍ້າເສຍ ດ້ວຍເງິນກູ້ຢືມຈາກນະຄອນຫລວງບູດາແປດສ, ປະເທດຮົງກາລີ ໃຫ້ມີປະສິດທິຜົນ.
- ຄົ້ນຄວ້າການຮ່ວມມື ລະຫວ່າງ ລັດວິສະຫະກິດນໍ້າປະປາ ນະຄອນຫຼວງວຽງຈັນ ແລະ ບໍລິສັດເອກະຊົນນໍ້າປະປາຮຸ້ນສ່ວນຈໍາກັດ ຂອງ ນະຄອນຫຼວງ ບູດາແປດສ, ປະເທດຮົງກາລີ ໃຫ້ໄດ້ຈັດຕັ້ງປະຕິບັດ.

36.6 ການຮ່ວມມື ນະຄອນຫຼວງວຽງຈັນ ກັບ ສ ເກົາຫຼີ:

- ຊຸກຍູ້ ແລະ ຕິດຕາມການເຊັນບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຊ່ວຍເຫຼືອລ້າກໍ່ສ້າງອາຄານປິ່ນປົວຕິດຢາເສບຕິດ ຢູ່ ນະຄອນຫຼວງວຽງຈັນ ລະຫວ່າງ ອົງການປົກຄອງນະຄອນຫຼວງວຽງຈັນ ແລະ ສະມາຄົມການຮ່ວມມືດ້ານວັດທະນະທໍາ ແລະ ສິນລະປະ ຂອງ ສ ເກົາຫຼີ ປະຈໍາ ນະຄອນຫຼວງວຽງຈັນ ໃນມູນຄ່າ 1.000.000 ໂດລາສະຫະລັດ.

36.7 ການຮ່ວມມືໃນຂອບອາຊຽນ:

- ກະກຽມດ້ານຄະນະຜູ້ແທນ ແລະ ເນື້ອໃນ ເພື່ອເຂົ້າຮ່ວມກອງປະຊຸມເຈົ້າໜ້າທີ່ອາວຸໂສ ຂອງກອງປະຊຸມເຈົ້າຄອງນະຄອນຫຼວງອາຊຽນ ແລະ ກອງປະຊຸມບັນດາເຈົ້າຄອງນະຄອນຫຼວງອາຊຽນ.

36.8 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ແລ້ວ ລວມທັງມາດຕາ 11 ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

**ມາດຕາ 37: ມອບໃຫ້ຫ້ອງວ່າການ ນະຄອນຫລວງວຽງຈັນ ປະຕິບັດດັ່ງນີ້:**

37.1 ເປັນໃຈກາງປະສານສົມທົບກັບ ບັນດາພະແນກການ ແລະ ເມືອງ ສືບຕໍ່ດຳເນີນການກວດກາຄືນ ບັນດາແຈ້ງການຕ່າງໆ ຂອງຫ້ອງວ່າການ ນະຄອນຫລວງວຽງຈັນ ເຖິງພະແນກການ-ອົງການທຽບເທົ່າ, ເມືອງ ແລະ ບ້ານ, ຖ້າຫາກເຫັນວ່າອັນໃດບໍ່ສອດຄ່ອງກັບນະໂຍບາຍ, ລະບຽບການ ຫຼື ກົດໝາຍທີ່ວາງອອກ ແມ່ນໃຫ້ຮີບຮ້ອນປັບປຸງແກ້ໄຂ, ໂຈະການປະຕິບັດ, ຍົກເລີກ ຫຼື ລົບລ້າງ.

37.2 ສືບຕໍ່ປັບປຸງລະບອບປະສານງານ ໃນການແກ້ໄຂບັນຫາຕ່າງໆ ລະຫວ່າງ ພະແນກການ, ອົງການ ດ້ວຍກັນ ແລະ ລະຫວ່າງ ພະແນກການ-ອົງການທຽບເທົ່າ ກັບອົງການປົກຄອງເມືອງ ໃຫ້ມີຄວາມ ກົມກຽວເປັນເອກະພາບ.

37.3 ນຳໃຊ້ເຄື່ອງມືທັນສະໄໝ ເຂົ້າໃນການຄຸ້ມຄອງ ແລະ ບໍລິການເອກະສານທາງລັດຖະການ, ປັບປຸງຄຸນ ນະພາບໃນການບໍລິການ ເວັບໄຊ ຂອງນະຄອນຫລວງວຽງຈັນ.

37.4 ຊ່ວຍອົງການປົກຄອງ ໃນການຕິດຕາມ ຊຸກຍູ້ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ປະຈຳປີ 2018 ຂອງນະຄອນຫລວງວຽງຈັນ ໃຫ້ບັນລຸຄາດໝາຍ ແລະ ໄປຕາມ ທິດທີ່ວາງໄວ້.

37.5 ຊ່ວຍຄະນະພັກ ນະຄອນຫຼວງວຽງຈັນ ໃນການຕິດຕາມຊຸກຍູ້-ຈັດຕັ້ງປະຕິບັດວຽກງານກໍ່ສ້າງຮາກຖານ ການເມືອງ ນະຄອນຫຼວງວຽງຈັນ.

37.6 ຄົ້ນຄວ້າຄວາມເປັນໄປໄດ້ໃນການສ້າງນິຕິກຳຕ່າງໆ ຂອງ ນະຄອນຫລວງວຽງຈັນ.

37.7 ຄົ້ນຄວ້າສະພາບການການເມືອງ ພາຍໃນ ແລະ ຕ່າງປະເທດ ທີ່ພົວພັນ ແລະ ສົ່ງຜົນກະທົບຕໍ່ ນະຄອນ ຫລວງວຽງຈັນ ໃຫ້ຄະນະພັກ-ອົງການປົກຄອງ ນະຄອນຫລວງວຽງຈັນ ໃຫ້ຖືກຕ້ອງ, ຊັດເຈນ ແລະ ທັນສະພາບການ (ດ້ວຍການກໍ່ສ້າງຮາກຖານການເມືອງ).

37.8 ຄົ້ນພິຈາລະນາແກ້ໄຂຂໍ້ແນະນຳຂອງ ອົງການກວດສອບ ປະຈຳພາກກາງ ປະຈຳປີ 2017 ໃຫ້ຄົບຖ້ວນ.

**ມາດຕາ 38: ມອບໃຫ້ ສະຫະພັນແມ່ຍິງ ນະຄອນຫລວງວຽງຈັນ ປະຕິບັດ ດັ່ງນີ້:**

38.1 ສຸມໃສ່ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງແມ່ຍິງ ໂດຍການສົ່ງເສີມວິຊາຊີບ ແລະ ພັດທະນາສີມືແຮງງານ; ສົ່ງເສີມໃຫ້ແມ່ຍິງໄດ້ເຂົ້າຮ່ວມວຽກງານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ; ພົວພັນຮ່ວມມືກັບການຈັດຕັ້ງແມ່ຍິງບັນດານະຄອນເພື່ອນມິດ.

38.2 ສົ່ງເສີມມູນເຊື້ອວັດທະນະທຳອັນດີງາມຂອງຊາດ ແລະ ຄຸນລັກສະນະທີ່ເປັນມູນເຊື້ອຂອງແມ່ຍິງລາວ.

38.3 ສືບຕໍ່ນຳພາການສ້າງຕັ້ງ ແລະ ພັດທະນາກຸ່ມທ້ອນເງິນ ຂອງສະຫະພັນແມ່ຍິງ ເພື່ອພັດທະນາຊີວິດການ ເປັນຢູ່ຂອງແມ່ຍິງ ແລະ ຄອບຄົວ ໃຫ້ນັບມື້ນັບດີຂຶ້ນເທື່ອລະກ້າວ.

38.4 ເພີ່ມທະວີການປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງຂະແໜງການຂອງຕົນ ທີ່ໄດ້ປະກາດໃຊ້ ແລ້ວ ລວມທັງມາດຕາ 10 (ຂໍ້ 10.2) ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເດັດຂາດ ແລະ ເຂັ້ມງວດ.

38.5 ສືບຕໍ່ປັບປຸງການອົງການຈັດຕັ້ງຂອງຕົນ ໃຫ້ໜັກແໜ້ນຕາມແຜນການທີ່ໄດ້ກຳນົດໄວ້.

38.6 ສືບຕໍ່ສ້າງຂະບວນການຮັກຊາດ ແລະ ພັດທະນາ ຕິດພັນກັບການປະຕິບັດສິດສະເໝີພາບ ຍິງ-ຊາຍ ແລະ ປາສະຈາກຄວາມຮຸນແຮງໃນຄອບຄົວ.

38.7 ໂຄສະນາເຜີຍແຜ່ ແລະ ແນະນຳການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດ ກ່ຽວກັບ ການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ (2014-2020) ໃນຂອບເຂດນະຄອນຫລວງ ວຽງຈັນ.

38.8 ສືບຕໍ່ສົ່ງເສີມການໃຫ້ຂໍ້ມູນຂ່າວສານ ດ້ານສຸຂະພາບຈະເລີນພັນ ແລະ ການບໍລິການດ້ານສຸຂະພາບ ໃຫ້ ແກ່ເອື້ອຍນ້ອງແມ່ຍິງ ທົ່ວ ນວ.

**ມາດຕາ 39: ມອບໃຫ້ພະແນກ ກວດກາລັດ ນະຄອນຫລວງວຽງຈັນ ແລະ ສະເໜີໃຫ້ອົງການກວດສອບປະຈຳພາກ ພາງ ປະຕິບັດ ດັ່ງນີ້:**

39.1 ສືບຕໍ່ຕິດຕາມ, ກວດກາ ແລະ ກວດສອບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນການລົງທຶນຂອງລັດ ຂອງບັນດາພະແນກການ, ອົງການທຽບເທົ່າ ລົງຮອດຂັ້ນເມືອງ ແລະ ບ້ານ ເພື່ອຮັບປະກັນໃຫ້ການປະຕິບັດແຜນການດັ່ງກ່າວ ໄປຕາມລະບຽບ ກົດໝາຍທີ່ວາງອອກ ແລະ ປະຕິບັດມາດຕະການຢ່າງເຂັ້ມງວດ ໃນການຕ້ານການສໍ້ລາດບັງຫຼວງ; ປະຕິບັດການຕິດຕາມ-ກວດກາການລົງທຶນຂອງລັດ ແຕ່ຫົວທີ, ດຳເນີນການແຈ້ງຊັບສິນ ແລະ ລາຍຮັບ ຂອງພະນັກງານ.

39.2 ກວດກາຄວາມຖືກຕ້ອງ ໃນການຄຸ້ມຄອງນຳໃຊ້ກອງທຶນຕ່າງໆ ທີ່ຂະແໜງການຂັ້ນ ນະຄອນຫລວງ ແລະ ເມືອງ ສ້າງຕັ້ງຂຶ້ນ ເພື່ອເຮັດໃຫ້ລາຍຮັບ ແລະ ລາຍຈ່າຍລວມສູນຜ່ານບັນຊີງົບປະມານແຫ່ງລັດ ຕາມກົດໝາຍກຳນົດໄວ້ ແລະ ເພື່ອເສີມຂະຫຍາຍຄຸນປະໂຫຍດຂອງແຫຼ່ງທຶນຕ່າງໆ ຂຶ້ນຕື່ມອີກ.

39.3 ກວດກາຕື່ມດ້ານການກວດກາປະເມີນ ແລະ ໃຫ້ຄະແນນ ນັກບໍລິຫານ.

39.4 ກວດກາການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດລະບຽບ, ມະຕິ, ຄຳສັ່ງ, ຂໍ້ຕົກລົງ, ແຈ້ງການຂອງ ສູນກາງ, ຂອງຄະນະພັກ-ອົງການປົກຄອງ ນະຄອນຫຼວງວຽງຈັນ.

**ມາດຕາ 40: ມອບໃຫ້ບັນດາເມືອງ ປະຕິບັດ ດັ່ງນີ້:**

40.1 ບັນດາເມືອງ ສືບຕໍ່ອອກແຮງຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກ ນະຄອນຫລວງວຽງຈັນ ເຂົ້າສູ່ວຽກງານຕົວຈິງ, ຖືເອົາທິດໃນການສ້າງແຂວງເປັນຫົວໜ່ວຍຍຸດທະສາດ ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ສ້າງບ້ານເປັນຫົວໜ່ວຍພັດທະນາ ເພື່ອເປັນທິດນຳໃນ ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ການຈັດຕັ້ງເຄື່ອນໄຫວຂອງຕົນ.

40.2 ເປັນເຈົ້າການໃນການຊີ້ນຳ-ບັນຊາ, ຄວບຄຸມ-ອຳນວຍການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2018 ຂອງເມືອງຕົນເອງ ໃຫ້ມີຜົນສຳເລັດຕາມຄາດໝາຍ ແລະ ລື່ນຄາດໝາຍ. ສືບຕໍ່ ປຸກລະດົມບັນດາຫົວໜ່ວຍວິສາຫະກິດທັງຂອງລັດ ແລະ ເອກະຊົນ, ທຸກຫົວໜ່ວຍເສດຖະກິດ ຢູ່ ພາຍໃນເມືອງ ເຂົ້າຮ່ວມ ແລະ ປະກອບສ່ວນໃນການສ້າງສາພັດທະນາ ແລະ ປະຕິບັດຄາດໝາຍສູ້ຊົນ ຂອງແຜນການປີ, ຜັນຂະຫຍາຍບັນດາທິດທາງໜ້າທີ່ ແລະ ຄາດໝາຍສູ້ຊົນຂອງແຜນການ ປະຈຳປີ 2018 ໂດຍການມອບຄວາມຮັບຜິດຊອບໃຫ້ຫ້ອງການ ຫລື ໜ່ວຍງານອ້ອມຂ້າງ ທີ່ຂຶ້ນກັບຕົນຢ່າງ ລະອຽດ, ໃນນີ້: ຕ້ອງໄດ້ມອບວຽກ, ຄາດໝາຍສູ້ຊົນລະອຽດ, ງົບປະມານ ແລະ ສະໜອງບຸກຄະລາ ກອນຢ່າງສົມຄູ່.

40.3 ມອບໃຫ້ບັນດາເມືອງ ອີງໃສ່ທິດທາງ, ໜ້າທີ່ ແລະ ຄາດໝາຍສູ້ຊົນຂອງແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2018 ຂອງ ນະຄອນຫລວງວຽງຈັນ ອອກບົດແນະນຳວິທີຈັດຕັ້ງປະຕິບັດວຽກງານ ພາຍໃນເມືອງ ພ້ອມທັງມີມາດຕະການຄົບຖ້ວນຈະແຈ້ງ ແລະ ຕ້ອງຍົກສູງຂອດປະສານງານ, ການ ພົວພັນ ລະຫວ່າງ ຂະແໜງການທີ່ຂຶ້ນກັບສາຍຕັ້ງຂອງຕົນ ເພື່ອເປັນບ່ອນອີງ ແລະ ຈັດຕັ້ງປະຕິບັດຢ່າງ ເອກະພາບກັນ. ດຳເນີນການເຜີຍແຜ່ວິທີຈັດຕັ້ງປະຕິບັດ ໃຫ້ແກ່ບັນດາຫ້ອງການອ້ອມຂ້າງເມືອງ ໃຫ້ ຮັບຮູ້, ເຂົ້າໃຈຢ່າງເອກະພາບ ແລ້ວພ້ອມກັນຈັດຕັ້ງປະຕິບັດໃຫ້ທັນກຳນົດເວລາ.

40.4 ຕັ້ງໜ້າປະຕິບັດມາດຕະການຕ້ານແລ້ງ-ຕ້ານຖ້ວມ ຢ່າງມີປະສິດທິຜົນ ແລະ ສົ່ງເສີມການຜະລິດ ລະດູແລ້ງ; ໃນນີ້: ໃຫ້ເອົາໃຈໃສ່ກວດກາ ແລະ ຟື້ນຟູ-ສ້ອມແປງລະບົບຊົນລະປະທານ, ຄູກັນນ້ຳ ແລະ ປະຕູນ້ຳ ເພື່ອຮັບປະກັນການຜະລິດ ໃຫ້ໄດ້ຕາມແຜນ; ດຳເນີນບັນດາມາດຕະການຕ່າງໆ ໃນການຊຸກຍູ້

ການຜະລິດ ໂດຍສະເພາະການຜະລິດກະສິກຳ ໃຫ້ທ່ວງທັນກັບລະດູການ. ສືບຕໍ່ຫັນພະນັກງານລົງສູ່ບ້ານ, ກຸ່ມບ້ານ ເພື່ອແນະນຳເຕັກນິກການຜະລິດ ໃຫ້ປະຊາຊົນ.

40.5 ສືບຕໍ່ຈັດຕັ້ງປະຕິບັດວຽກງານ 3 ສ້າງ ໃຫ້ສຳເລັດຕາມຈຸດປະສົງເປົ້າໝາຍ, ເພີ່ມທະວີການປະສານງານລະຫວ່າງ ເມືອງ ກັບ ພະແນກການ; ໃຫ້ຖືເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ 2018 ຕິດພັນກັບຂະບວນການ 3 ສ້າງ ເຊິ່ງເປັນການແບ່ງຂັ້ນຄຸ້ມຄອງແຕ່ລະຂັ້ນການປົກຄອງບົນຫຼັກການມອບໃຫ້ເມືອງ ເປັນເຈົ້າການຫຼາຍຂຶ້ນຕາມລະບຽບ ແລະ ກົດໝາຍ. ເປັນເຈົ້າການເຂົ້າຮ່ວມໃນການຄຸ້ມຄອງການຈັດຕັ້ງປະຕິບັດ ບັນດາໂຄງການລົງທຶນຂອງລັດ, ໂຄງການຊ່ວຍເຫລືອທາງການເພື່ອການພັດທະນາ, ໂຄງການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ທີ່ປະຕິບັດຢູ່ພາຍໃນຂອບເຂດເມືອງຂອງຕົນຢ່າງມີຄວາມຮັບຜິດຊອບສູງ.

40.6 ເພີ່ມທະວີຄວາມຮັບຜິດຊອບ ໃນການຈັດເກັບລາຍຮັບພາຍໃນເມືອງ ໃຫ້ໄດ້ຕາມຄາດໝາຍ, ຈັດຕັ້ງປະຕິບັດລະບຽບກົດໝາຍການເງິນ ຢ່າງເຂັ້ມງວດ, ເອົາໃຈໃສ່ເປັນພິເສດຕໍ່ການປະຕິບັດກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ຢ່າງແຂງແຮງ, ສະກັດກັ້ນໃຫ້ໄດ້ການຮົ່ວໄຫຼຂອງລາຍຮັບງົບປະມານໃນຂົງເຂດພາສີ-ອາກອນ, ຊັບສິນຂອງລັດ, ການເກັບຄ່າທຳນຽມທີ່ດິນ, ເອົາໃຈໃສ່ພິເສດຕໍ່ການສ້າງບຸກຄະລາກອນຂະແໜງການເງິນ ແລະ ແກ້ໄຂພະນັກງານທີ່ກະທຳຜິດຢ່າງເຂັ້ມງວດ.

40.7 ເພີ່ມທະວີການຮ່ວມມືກັບບັນດາເມືອງ ຂອງນະຄອນບັນດາປະເທດເພື່ອນມິດ, ອົງການຈັດຕັ້ງ ແລະ ສະຖາບັນການເງິນສາກົນ, ເພື່ອຍາດແຍ່ງເອົາການຊ່ວຍເຫຼືອໃຫ້ໄດ້ເພີ່ມຂຶ້ນ.

40.8 ປັບປຸງແບບແຜນວິທີເຄື່ອນໄຫວວຽກຂອງຕົນ ໃຫ້ມີປະສິດທິຜົນ ແລະ ແບບແຜນເຮັດວຽກຕາມກົດໝາຍກຳນົດ ແລະ ຕັ້ງໜ້າເຂົ້າຮ່ວມການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2018 ຂອງນະຄອນຫລວງວຽງຈັນ, ຖືເອົາແຜນພັດທະນາດັ່ງກ່າວ ເປັນຄວາມຮັບຜິດຊອບ ແລະ ເປັນພັນທະຂອງຕົນ, ພ້ອມກັນອອກແຮງແຂ່ງຂັນຮັກຊາດ-ພັດທະນາ ສຳເລັດໜ້າທີ່ ແລະ ຄາດໝາຍຂອງຕົນເປັນຢ່າງດີ ບົນພື້ນຖານສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

40.9 ຊຸກຍູ້ຕິດຕາມກວດກາການປະຕິບັດແຜນການ ແລະ ແຜນງົບປະມານ ແລະ ສະຫຼຸບລາຍງານອົງການປົກຄອງ ເປັນປົກກະຕິ.

40.10 ປະຕິບັດການຈັດເກັບລາຍຮັບເຂົ້າງົບປະມານ ແລະ ລາຍຈ່າຍພາຍໃນເມືອງ ໃຫ້ຄົບຖ້ວນ (ຄາດໝາຍລະອຽດກ່ຽວກັບການເກັບລາຍຮັບເຂົ້າງົບປະມານ ແລະ ລາຍຈ່າຍຂອງແຕ່ລະເມືອງ ພະແນກ ການເງິນນະຄອນຫລວງວຽງຈັນ ຈະແຈ້ງໃຫ້).

## ໝວດທີ 6
## ການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ປະຈຳປີ 2019

**ມາດຕາ 41: ການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ຂອງນະຄອນຫລວງ ວຽງຈັນ ປະຈຳປີ 2019 ໃຫ້ປະຕິບັດດັ່ງນີ້:**

ແຜນປີ 2019 ເປັນປີທີ່ 4 ຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) ຕ້ອງໄດ້ສຸມໃສ່ປະຕິບັດຕາມເປົ້າໝາຍ, ວຽກງານຈຸດສຸມ ແລະ ຄາດໝາຍທີ່ວາງໄວ້ໃນແຜນການ; ພ້ອມທັງສືບຕໍ່ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກ ນະຄອນຫລວງວຽງຈັນ ເຂົ້າສູ່ວຽກງານຕົວຈິງຂອງ

ບັນດາພະແນກການ, ອົງການທຽບເທົ່າ ແລະ ເມືອງ ເຮັດໃຫ້ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ; ສູ້ຊົນລາຍຮັບໃຫ້ໄດ້ຕາມແຜນການ.

**41.1 ຂະບວນການສ້າງແຜນພັດທະນາເສດຖະກິດ-ສັງຄົມ ປີ 2019 ໃຫ້ປະຕິບັດດັ່ງລຸ່ມນີ້:**

- ໃຫ້ບັນດາພະແນກການ, ອົງການທຽບເທົ່າ ແລະ ເມືອງ ດຳເນີນການສະຫລຸບຕີລາຄາການຈັດຕັ້ງປະຕິບັດແຜນກາພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2018 ເປັນແຕ່ລະງວດ (3 ເດືອນ, 6 ເດືອນ, 9 ເດືອນ ແລະ ໝົດປີ). ການສະຫລຸບຕ້ອງສ່ອງແສງໃຫ້ເຫັນ ສະພາບການຈັດຕັ້ງປະຕິບັດຜົນສຳເລັດອັນພົ້ນເດັ່ນ, ຈຸດອ່ອນ, ຂໍ້ຄົງຄ້າງ, ບົດຮຽນທີ່ຖອດຖອນ ພ້ອມທັງສະເໜີວິທີທາງແກ້ໄຂ ແລະ ມາດຕະການໃນການຈັດຕັ້ງປະຕິບັດ. ໂດຍໃຫ້ແຕ່ລະພາກສ່ວນສົ່ງບົດສະຫລຸບການປະຕິບັດແຜນການງວດທີ່ສິ້ນສຸດລົງໃຫ້ ພະແນກ ແຜນການ ແລະ ການລົງທຶນ. ພ້ອມດຽວກັນນັ້ນ, ຄົ້ນຄວ້າຮ່າງແຜນການ ປະຈຳປີ 2019 ສົ່ງເຖິງພະແນກ ແຜນການ ແລະ ການລົງທຶນ ຊ້າສຸດບໍ່ໃຫ້ກາຍ ວັນທີ 15 ມິຖຸນາ 2018 ເພື່ອໃຫ້ພະແນກ ແຜນການ ແລະ ການລົງທຶນ ມີເວລາສັງລວມ ແລະ ສະຫລຸບລາຍງານຕໍ່ກອງປະຊຸມອົງການປົກຄອງ ໃນເດືອນ ກໍລະກົດ 2018;
- ມອບໃຫ້ພະແນກ ແຜນການ ແລະ ການລົງທຶນ ອອກແຈ້ງການ ແລະ ບົດແນະນຳກ່ຽວກັບການສ້າງແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2019 ເພື່ອເປັນທິດທາງ ແລະ ຕົວເລກຄາດໝາຍລວມ ແລະ ຂອບເຂດພັດທະນາທຶນຂອງລັດເບື້ອງຕົ້ນ ປະຈຳປີ 2019 ໃຫ້ບັນດາພະແນກການ, ອົງການທຽບເທົ່າ ແລະ ບັນດາເມືອງ ໃນເດືອນ ພຶດສະພາ 2018.
- ການຂຶ້ນແຜນລົງທຶນຂອງລັດ ຕ້ອງສອດຄ່ອງ ແລະ ຮັບໃຊ້ໃຫ້ແກ່ແຜນພັດທະນາເສດຖະກິດ-ສັງຄົມຂອງຂະແໜງການຕົນ ທັງສອດຄ່ອງຕາມວຽກຈຸດສຸມ ແລະ ຄາດໝາຍທີ່ວາງໄວ້ ເຊິ່ງທຸກພາກສ່ວນຕ້ອງເນັ້ນໃສ່ຜົນໄດ້ຮັບຂອງວຽກງານເປັນຕົວຕັ້ງ ໃນການສຸມທຶນຮອນທີ່ມີຢ່າງຈຳກັດ ແລະ ເກີດຜົນປະໂຫຍດສູງສຸດ, ແນໃສ່ໂຄງການສືບຕໍ່ໃຫ້ສຳເລັດ ແລະ ສາມາດນຳໃຊ້ໂດຍໄວ.

**41.2 ຂະບວນການສ້າງແຜນການລົງທຶນຂອງລັດ.**

- ໃຫ້ພະແນກການ, ອົງການທຽບເທົ່າ ແລະ ເມືອງ ປະກອບເອກະສານໂຄງການ ຕາມທີ່ລະບຸໄວ້ໃນມາດຕາ 22 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ) ແລ້ວສົ່ງໃຫ້ພະແນກ ແຜນການ ແລະ ການລົງທຶນ ເພື່ອເປັນບ່ອນອີງໃນການຄົ້ນຄວ້າເອົາເຂົ້າແຜນ;
- ການປະເມີນໂຄງການລົງທຶນຂອງລັດກ່ອນເອົາເຂົ້າແຜນ ໃຫ້ປະຕິບັດຕາມ ມາດຕາ 34 ຂອງກົດໝາຍການລົງທຶນຂອງລັດ (ສະບັບປັບປຸງ) ຢ່າງເຄັ່ງຄັດ. ການສະເໜີເອກະສານປະເມີນ ແມ່ນສາມາດດຳເນີນໄດ້ທຸກເວລາ, ແຕ່ການສົ່ງເອກະສານໂຄງການທຸກປະເພດ ແມ່ນສົ່ງໃຫ້ ພະແນກ ແຜນການ ແລະ ການລົງທຶນ ນະຄອນຫລວງວຽງຈັນ ບໍ່ໃຫ້ກາຍວັນທີ 15 ມີນາ 2018.

**41.3 ສຳລັບກົນໄກໃນການດຳເນີນເອກະສານ ເພື່ອປະເມີນໂຄງການ ໃຫ້ປະຕິບັດດັ່ງນີ້:**

- ໃຫ້ມີການປະສານສົມທົບກັນ ລະຫວ່າງ ບັນດາເຈົ້າຂອງໂຄງການ, ພາກສ່ວນທີ່ເຕັກນິກທີ່ກ່ຽວຂ້ອງໃນການຄົ້ນຄວ້າໂຄງການ, ສຳລັບພາກສ່ວນເຕັກນິກທີ່ກ່ຽວຂ້ອງ ໃນການຢັ້ງຢືນທາງດ້ານເຕັກນິກ ແລະ ການຄິດໄລ່ມູນຄ່າໂຄງການ ໂດຍອີງຕາມລາຄາຫົວໜ່ວຍ ທີ່ກະຊວງຂະແໜງການ ກຳນົດຢ່າງເຂັ້ມງວດ ເພື່ອເປັນບ່ອນອີງໃນການຄົ້ນຄວ້າປະເມີນໂຄງການ;
- ການປະກອບເອກະສານໂຄງການ ຕ້ອງໃຫ້ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 22 ຂອງກົດໝາຍວ່າດ້ວຍ ການລົງທຶນຂອງລັດ ແລະ ມີການຢັ້ງຢືນຢ່າງຖືກຕ້ອງ ຈາກຂະແໜງການເຕັກນິກທີ່ກ່ຽວຂ້ອງ, ບັນດາພະແນກການ, ອົງການທຽບເທົ່າ ແລະ ເມືອງ ຕ້ອງໄດ້ກວດກາບັນຊີ, ເອກະສານໂຄງການໃຫ້ຄົບຖ້ວນ ແລ້ວຈຶ່ງນຳສົ່ງໃຫ້ ພະແນກ ແຜນການ ແລະ ການລົງທຶນ ດຳເນີນການປະເມີນຜົນ ເພື່ອ

ຫລີກລ່ຽງ ໃນການແຈ້ງປະກອບເອກະສານຄືນໃໝ່, ສ່ວນກຳນົດຍື່ນເອກະສານ ເລີ່ມແຕ່ວັນທີ 1 ມັງກອນ 2018 ເປັນຕົ້ນໄປ ແລະ ຊ້າສຸດບໍ່ໃຫ້ກາຍ ວັນທີ 5 ພຶດສະພາ 2018 ເພື່ອດຳເນີນການປະເມີນແລ້ວສົ່ງໃຫ້ເຈົ້າຂອງໂຄງການຮັບຊາບ ແລະ ພະແນກ ແຜນການ ແລະ ການລົງທຶນ ສັງລວມເຂົ້າຮ່າງແຜນການລົງທຶນ ເພື່ອນຳສະເໜີອົງການປົກຄອງ ແລະ ສະເໜີສະພາປະຊາຊົນ ນະຄອນຫລວງວຽງຈັນ ຮັບຮອງ;

- ບັນດາພະແນກການ ແລະ ອົງການທຽບເທົ່າ ນຳບັນດາໂຄງການລົງສູ່ເມືອງຫລາຍຂຶ້ນໄປຕາມທິດ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ບ້ານເປັນຫົວໜ່ວຍພັດທະນາ, ຊຸກຍູ້ໃຫ້ບັນດາເມືອງ ສາມາດເປັນເຈົ້າການໃນການສ້າງ, ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໂຄງການເພື່ອພັດທະນາເມືອງຕົນໃຫ້ຫລາຍຂຶ້ນ ແລະ ກ້າວໄປເປັນເມືອງເຂັ້ມແຂງທາງດ້ານຂະແໜງແຜນການ ແລະ ການລົງທຶນ;
- ເພື່ອເຮັດໃຫ້ການຄຸ້ມຄອງການລົງທຶນຂອງລັດ ມີປະສິດທິພາບ, ປະສິດທິຜົນ ແລະ ຫລີກລ່ຽງການເກີດໜີ້ສິນໃນອະນາຄົດ, ໃຫ້ຂະແໜງການ ແລະ ທ້ອງຖິ່ນ ປະຕິບັດຕາມ ມາດຕາທີ 76 ຂອງກົດໝາຍວ່າດ້ວຍ ການລົງທຶນຂອງລັດ (ສະບັບປັບປຸງ) ໃນການຫ້າມເຈົ້າຂອງໂຄງການມີພຶດຕິກຳແບ່ງໂຄງການອອກເປັນໂຄງການຍ່ອຍ ເພື່ອໃຫ້ມູນຄ່າຂອງໂຄງການຕ່ຳລົງ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 42:** ມອບໃຫ້ທ່ານຫົວໜ້າພະແນກ, ຫົວໜ້າອົງການຂັ້ນນະຄອນຫລວງ, ທ່ານເຈົ້າເມືອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງ ປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດໃຫ້ອົງການປົກຄອງ ໃນແຕ່ລະ ໄລຍະຢ່າງເປັນປົກກະຕິ.

**ມາດຕາ 43:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນຳໃຊ້ ນັບແຕ່ວັນທີ 1 ມັງກອນ 2018 ເປັນຕົ້ນໄປ ແລະ ສິ້ນສຸດລົງໃນວັນທີ 31 ທັນວາ 2018.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ປອ.ສິນລະວົງ ຄຸດໄພທູນ

<u>ບ່ອນນຳສົ່ງ:</u>

- ຄະນະພັກ-ສະມາຊິກອົງການປົກຄອງຜູ້ລະ 1 ສະບັບ
- ສະພາປະຊາຊົນ ນະຄອນຫຼວງວຽງຈັນ 1 ສະບັບ
- ພະແນກການ, ອົງການທຽບເທົ່າຂັ້ນພະແນກ 1 ສະບັບ
- ເກັບມ້ຽນ 2 ສະບັບ